ໂຄງການ Early ACCESS

ສໍາລັບເດັກເກີດໃໝ່, ເດັກຮຽນຍ່າງ ແລະ ຄອບຄົວ

# ກົດໝາຍ IDEA ພາກ C

# ປື້ມຄູ່ມືລະບຽບການປົກປ້ອງຄຸ້ມຄອງສໍາລັບພໍ່ແມ່

# (ສິດທິພໍ່ແມ່ໃນການຊ່ວຍເຫຼືອໄລຍະຕົ້ນ)

ກັນຍາ 2019

ພະແນກສຶກສາລັດໄອໂອວາ, ຮົງການນໍາພາ
ສໍານັກງານຍຸດທະສາດ ແລະ ການສະໜັບສະໜູນຜູ້ຮຽນ
Grimes State Office Building
Des Moines, IA 50319

ພະແນກສຶກສາລັດໄອໂອວາ
Grimes State Office Building
400 E. 14th Street
Des Moines, IA 50319-0146

## ສະພາບໍລິຫານການສຶກສາປະຈໍາລັດ


ທ່ານ Rosie Hussey, ປະທານ, ຈາກເມືອງ Clear Lake
ທ່ານ Charles C. Edwards, Jr., ຮອງປະທານ, ຈາກເມືອງ Des Moines
ທ່ານ Diane Crookham-Johnson, ຈາກເມືອງ Oskaloosa
ທ່ານນາງ Sister Jude Fitzpatrick, ຈາກເມືອງ West Des Moines
ທ່ານ Michael L. Knedler, ຈາກເມືອງ Council Bluffs
ທ່ານ Valorie J. Kruse, ຈາກເມືອງ Sioux City
ທ່ານ Mike May, ຈາກເມືອງ Spirit Lake
ທ່ານ Max Phillips, ຈາກເມືອງ Woodward
ທ່ານ LaMetta Wynn, ຈາກເມືອງ Clinton
ທ່ານ Edgar Thornton, ສະມາຊິກນັກສຶກສາ, ຈາກເມືອງ Iowa City


## ຄະນະຜູ້ບໍລິຫານ


ທ່ານ Brad A. Buck, ຜູ້ອໍານວຍ ແລະ ຫົວໜ້າເຈົ້າໜ້າທີ່ບໍລິຫານ
ຂອງສະພາບໍລິຫານການສຶກສາປະຈໍາລັດ


### ຂະແໜງການຮຽນຮູ້ ແລະ ຜົນໄດ້ຮັບ


ທ່ານ W. David Tilly, ຮອງຜູ້ອໍານວຍການ
ທ່ານ Mary Delagardelle, ຜູ້ຊ່ວຍຜູ້ບໍລິຫານຂະແໜງ
ທ່ານ Thomas A. Mayes, ທະນາຍຄວາມ


### ສໍານັກງານຍຸດທະສາດ ແລະ ການສະໜັບສະໜູນຜູ້ຮຽນ


ທ່ານ Sarah Brown, ຫົວໜ້າ
ທ່ານ Laura Belle Sherman-Proehl, ທີ່ປຶກສາຝ່າຍບໍລິຫານ
ທ່ານ Cindy Weigel, ທີ່ປຶກສາ


ພະແນກສຶກສາລັດໄອໂອວາມີນະໂຍບາຍຫ້າມການເລືອກປະຕິບັດບົນພື້ນຖານດ້ານເຊື້ອຊາດ, ຄວາມເຊື່ອ, ສີຜິວ, ລັດທິສະນິຍົມທາງເພດ, ລັກສະນະທາງເພດ, ຊາດກໍາເນີດ, ເພດ, ຄວາມພິການ, ສາດສະໜາ, ອາຍຸ, ຄວາມສໍາພັນທາງການເມືອງ, ຫຼື ສະຖານະຄວາມເປັນພໍ່ແມ່ຕົວຈິງ ຫຼື ອາດເປັນໄປໄດ້, ສະຖານະທາງຄອບຄົວ ຫຼື ການແຕ່ງງານ ໃນບັນດາໂຄງການ, ກິດຈະກໍາ, ຫຼື ຫຼັກປະຕິບັດດ້ານການວ່າຈ້າງງານຂອງພະແນກສຶກສາ ຕາມການກໍານົດຂອງປະມວນກົດໝາຍລັດໄອໂອວາ ຂໍ້ທີ 216.9 ແລະ 256.10(2), Titles VI ແລະ VII ຂອງກົດໝາຍວ່າດ້ວຍສິດທິພົນລະເມືອງປີ 1964 (42 U.S.C. § 2000d ແລະ 2000e), ກົດໝາຍວ່າດ້ວຍການຄ່າຈ້າງເທົ່າທຽມກັນ ປີ 1973 (29 U.S.C. § 206, ແລະອື່ນໆ), ຫົວບົດ IX (ການປັບປຸງການສຶກສາ, 20 U.S.C. §§ 1681 – 1688) ໝວດທີ 504 (ກົດໝາຍວ່າດ້ວຍການຟື້ນຟູ ປີ 1973, 29 U.S.C. § 794), ແລະ ກົດໝາຍວ່າດ້ວຍຄວາມພິການຂອງຊາວອາເມຣິກາ (42 U.S.C. § 12101, ແລະອື່ນໆ).

ຖ້າທ່ານມີຄໍາຖາມ ຫຼື ຂໍ້ຂ້ອງໃຈກ່ຽວກັບປະຕິບັດຕາມນະໂຍບາຍນີ້ຂອງພະແນກສຶກສາລັດໄອໂອວາ, ກະລະນຸ ຕິດຕໍ່ຫາທີ່ປຶກສາດ້ານກົດໝາຍປະຈໍາພະແນກສຶກສາລັດໄອໂອວາ, ທີ່ອາຄານຫ້ອງການ Grimes State, 400 E 14th St, ເມືອງ Des Moines IA 50319-0146, ເບີໂທລະສັບ 515/281-5295, ຫຼື ຕິດຕໍ່ຫາຫົວໜ້າຫ້ອງການສິດທິພົນລະເມືອງ, ກະຊວງສຶກສາສະຫະລັດ, Citigroup Center, 500 W. Madison, Suite 1475, Chicago, IL 60661, ໂທລະສັບ 312/730-1560, ແຟັກ 312/730-1576, ອີເມວ: OCR.Chicago@ed.gov.

## ສາລະບານ


ພາກສະເໜີ ....................................................................................................1

ຄໍານິຍາມສໍາຄັນ ..............................................................................................2

ການຍິນຍອມເຫັນດີທີ່ມີຂໍ້ມູນຄົບຖ້ວນ........................................................................3

ແຈ້ງການລ່ວງໜ້າເປັນລາຍລັກອັກສອນ ......................................................................4

ການຮັກສາຄວາມລັບຂອງຂໍ້ມູນ/ບັນທຶກ ......................................................................5

ກອງປະຊຸມ......................................................................................................9

ພໍ່ແມ່ ແລະ ພໍ່ແມ່ຕົວແທນ .....................................................................................10

ທາງເລືອກສໍາລັບການແກ້ໄຂຄວາມຂັດແຍ້ງ...................................................................12

ການໄກ່ເກ່ຍ ....................................................................................................13

ການຮ້ອງຮຽນຂັ້ນລັດຕາມກົດໝາຍ IDEA ....................................................................15

ການຮ້ອງຮຽນຕາມຫຼັກ Due Process (ການໄຕ່ສວນຕາມຫຼັກ Due Process).............................17

ແບບຟອມຕົວຢ່າງ: ຄໍາຮ້ອງຂໍກອງປະຊຸມໄກ່ເກ່ຍ ...........................................................20

ແບບຟອມຕົວຢ່າງ: ການຮ້ອງຮຽນຂັ້ນລັດຕາມກົດໝາຍ IDEA ..............................................22

ແບບຟອມຕົວຢ່າງ: ການຮ້ອງຮຽນຕາມຫຼັກ Due Process (ຄໍາຮ້ອງຂໍການໄຕ່ສວນ Due Process) ...24

ນະໂຍບາຍວ່າດ້ວຍລະບົບເບີກຈ່າຍ ..........................................................................26

# **ພາກສະເໜີ**

ໂຄງການ Early ACCESS ແມ່ນການຮ່ວມມືກັນລະຫວ່າງຄອບຄົວ ແລະ ເດັກໄວເຍົາທີ່ມີຄວາມຕ້ອງການພິເສດຂອງເຂົາເຈົ້າ (ແຕ່ເກີດຮອດອາຍຸສາມປີ) ກັບບັນດາຜູ້ໃຫ້ການບໍລິການຈາກພະແນກສຶກສາ, ພະແນກສາທາລະນະສຸກ, ພະແນກບໍລິການມະນຸດລັດໄອໂອວາ ແລະ ມະຫາວິທະຍາໄລ Child Health Specialty Clinics ລັດໄອໂອວາ. ຈຸດປະສົງຂອງໂຄງການຮ່ວມມືນີ້ແມ່ນເພື່ອເຮັດວຽກຮ່ວມກັນໃນການກຳນົດ, ປະ ສານງານ ແລະ ສະໜອງບັນດາການບໍລິການ ແລະຊັບພະຍາກອນຊ່ວຍເຫຼືອໄລຍະຕົ້ນທີ່ຈະຊ່ວຍໃຫ້ຄອບຄົວສາມາດຊ່ວຍເຫຼືອລູກເກີດໃໝ່ ຫຼື ເດັກທາກໍ່ຮຽນຍ່າງຂອງເຂົາເຈົ້າໃຫ້ຈະເລີນເຕີບໂຕຢ່າງມີພັດທະນາການ.

ພໍ່ແມ່ມີສິດທິຕ່າງໆ ເອີ້ນວ່າລະບຽບການປົກປ້ອງຄຸ້ມຄອງ ເຊິ່ງນຳໃຊ້ກັບທຸກໆດ້ານຂອງຂະບວນການຊ່ວຍເຫຼືອໄລຍະຕົ້ນ ເຊັ່ນວ່າ ການປະເມີນຜົນ, ການເຂົ້າເຖິງບັນທຶກ ແລະ ການມີສ່ວນຮ່ວມຂອງທີມງານແຜນການບໍລິການຄອບຄົວສະເພາະບຸກຄົນ (IFSP). ກົດໝາຍ ແລະ ກົດລະບຽບຂອງລັດ ແລະລັດຖະບານກາງອະທິບາຍສິ່ງທີ່ຈຳເປັນຕ້ອງເກີດຂຶ້ນສຳລັບເດັກເກີດໃໝ່ ແລະເດັກຮຽນຍ່າງທີ່ມີສິດທີ່ເປັນພະຍາດ ຫຼືມີການຊັກຊ້າດ້ານການພັດທະນາການ ເພື່ອສົ່ງເສີມການເຕີບໂຕ ແລະ ພັດທະນາການຂອງເຂົາເຈົ້າ.

ເອກະສານນີ້ແມ່ນໃບແຈ້ງບອກກ່ຽວກັບລະບຽບການປົກປ້ອງຄຸ້ມຄອງ***ຂອງທ່ານ*** ແລະ ຈະຊ່ວຍທ່ານເຂົ້າໃຈສິດທິຕ່າງໆທີ່ມີໃຫ້ທ່ານ ແລະລູກຂອງທ່ານຜ່ານກົດໝາຍລັດຖະບານກາງ, *ກົດໝາຍວ່າດ້ວຍການສຶກສາຂອງຄົນພິການ (IDEA) ພາກ C*, ເຊັ່ນດຽວກັບ*ກົດລະບຽບດ້ານການບໍລິຫານ*ຂອງລັດໄອໂອວາສຳລັບ*ລະບົບໃຫ້ການບໍລິການຊ່ວຍເຫຼືອໄລຍະຕົ້ນແບບຄົບວົງຈອນ ຂອງໂຄງການ Early ACCESS*.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບສິດທິຂອງທ່ານ, ໃຫ້ຕິດຕໍ່ຫາບຸກຄົນໃດໜຶ່ງຕໍ່ໄປນີ້:

ຜູ້ປະສານງານດ້ານການບໍລິກາຂອງທ່ານ
ຜູ້ໄດ້ຮັບທຶນປະຈຳເຂດພາກພື້ນຂອງທ່ານ (ຂໍພົບຫົວໜ້າການສຶກສາພິເສດ)
ພະແນກການສຶກສາລັດໄອໂອວາ
ສຳນັກງານຍຸດທະສາດ ແລະການສະໜັບສະໜູນຜູ້ຮຽນ
Grimes State Office Building
Des Moines, Iowa 50319-0146
515-281-3176

ສູນ ASK Resource Center, ເຊິ່ງເປັນສູນຝຶກອົບຮົມ ແລະຂໍ້ມູນຂ່າວສານສຳລັບພໍ່ແມ່ຂອງລັດໄອໂອວາ
5665 Greendale Road, Suite D
Johnston, IA 50131
1-800-450-8667
515-243-1713
ແຟັກ 515-243-1902
info@askresource.org
http://www.askresource.org

ອົງການ Disability Rights Iowa
400 East Court Avenue Suite 300
Des Moines, Iowa 50309
515-278-2502
515-278-0571 (TDD)
800-779-2502
515- 278-0539 ແຟັກ
info@disabilityrightsiowa.org
http://www.disabilityrightsiowa.org

**ຂ້ອຍຈະໄດ້ຮັບສຳເນົາລະບຽບການປົກປ້ອງຄຸ້ມຄອງ/ສິດທິຂອງຄອບຄົວເມື່ອໃດ?**
ທ່ານຈະໄດ້ຮັບສຳເນົາຂອງລະບຽບການປົກປ້ອງຄຸ້ມຄອງ/ສິດທິຂອງຄອບຄົວຢ່າງນ້ອຍໜຶ່ງຄັ້ງໃນແຕ່ລະປີ, ແລະ ໃນທຸກເມື່ອທີ່ທ່ານຮ້ອງຂໍເອົາ. ທ່ານຍັງຈະໄດ້ຮັບການສະເໜີໃຫ້ສຳເນົາດັ່ງກ່າວໃນທຸກຄັ້ງທີ່ທ່ານໄດ້ຮັບໃບແຈ້ງການລ່ວງໜ້າເປັນລາຍລັກອັກສອນ. ແບບຟອມໃບແຈ້ງການລ່ວງໜ້າເປັນລາຍລັກອັກສອນດັ່ງກ່າວຈະປະກອບມີທີ່ຢູ່ເວັບໄຊສຳລັບລະບຽບການປົກປ້ອງຄຸ້ມຄອງດັ່ງກ່າວ.

**ມີແຫຼ່ງຂໍ້ມູນອື່ນເພື່ອຊອກຮູ້ເພີ່ມເຕີມກ່ຽວກັບກົດໝາຍ IDEA 2004 ພາກ C, ກົດລະບຽບດ້ານການບໍລິຫານຂອງລັດໄອໂອວາສຳລັບໂຄງການ Early ACCESS ແລະ ກົດລະບຽບແລະຂໍ້ບັງຄັບອື່ນທີ່ສຳຄັນທີ່ຂ້ອຍຈຳເປັນຕ້ອງຮູ້ບໍ່?**

ລາຍການຕໍ່ໄປນີ້ແມ່ນທີ່ຢູ່ອິນເຕີເນັດຂອງເວັບໄຊທີ່ທ່ານສາມາດເຂົ້າເບິ່ງ:

ກົດລະບຽບດ້ານການບໍລິຫານຂອງລັດໄອໂອວາສຳລັບໂຄງການ Early ACCESS
http://www.educateiowa.gov

ກົດໝາຍວ່າດ້ວຍການສຶກສາຂອງຄົນພິການ
http://idea.ed.gov/part-c/search/new

ກົດໝາຍວ່າດ້ວຍສິດທິດ້ານການສຶກສາ ແລະ ຄວາມເປັນສ່ວນຕົວຂອງຄອບຄົວ (FERPA)
http://www.ed.gov/policy/gen/guid/fpco/ferpa/index.html

ກົດໝາຍວ່າດ້ວຍການຄວບຄຸມ ແລະການສົ່ງຜ່ານຂໍ້ມູນການປະກັນສຸຂະພາບ (HIPAA)
http://www.hhs.gov/ocr/hipaa/

ກວດເບິ່ງນຳຜູ້ປະສານດ້ານການບໍລິການຂອງທ່ານເພື່ອເບິ່ງແຫຼ່ງຂໍ້ອື່ນ. ທ່ານອາດຈະເບິ່ງ:

*ຊອກທາງແກ້ໄຂເມື່ອມີສິ່ງຜິດພາດ*
*ງ່າຍແມ່ນບໍ່! ຊອກທາງແກ້ໄຂນຳຜູ້ອຳນວຍຄວາມສະດວກດ້ານການແກ້ໄຂຂໍ້ຂັດແຍ້ງ*
*ການກະກຽມສຳລັບກ່ອນການອຸທອນ ຫຼືການໄກ່ເກ່ຍ*
*ການໄກ່ເກ່ຍເລື່ອງການສຶກສາພິເສດ: ປຶ້ມແນະນຳສຳລັບພໍ່ແມ່*

## ຄຳນິຍາມສຳຄັນ

**ອົງການພາກລັດ:** ອົງການນຳພາ (ພະແນກການສຶກສາລັດໄອໂອວາ) ແລະ ຂະແໜງການທາງການເມືອງອື່ນຂອງລັດທີ່ຮັບຜິດຊອບຈັດຫາການບໍລິການຊ່ວຍເຫຼືອໄລຍະເລີ່ມຕົ້ນໃຫ້ແກ່ເດັກນ້ອຍທີ່ມີສິດໄດ້ຮັບພາຍໃຕ້ກົດໝາຍ IDEA ແລະ ກົດລະບຽບຂອງ Early ACCESS. ພະແນກສຶກສາລັດໄອໂອວາຮັບຜິດຊອບລະບົບການຮ້ອງຮຽນ/ຂະບວນການນິຕິທຳ (due process) ຂອງໂຄງການ Early ACCESS.

**ຜູ້ຮັບທຶນ/ຜູ້ຮັບທຶນປະຈຳເຂດ:** ໝາຍເຖິງຜູ້ໄດ້ຮັບທຶນຕາມພາກ C ຂອງກົດໝາຍລັດຖະບານກາງ ຫຼື ໄດ້ຮັບທຶນຂອງລັດທີ່ມີພັນທະທາງການເງິນ ແລະທາງກົດໝາຍສຳລັບການຮັບປະກັນໃຫ້ໄດ້ດຳເນີນລະບົບ Early ACCESS ໃນທົ່ວເຂດພາກພື້ນ.

**ການບໍລິການຊ່ວຍເຫຼືອໄລຍະຕົ້ນ:** ການບໍລິການດ້ານພັດທະນາການທີ່ຖືກສະໜອງໃຫ້ພາຍໃຕ້ການຄວບຄຸມຕິດຕາມຂອງລັດຖະບານ; ເຊິ່ງສະໜອງໃຫ້ໂດຍບໍ່ມີຄ່າໃຊ້ຈ່າຍ ຍົກເວັ້ນໃນບ່ອນທີ່ກົດໝາຍລັດຖະບານກາງ ຫຼືກົດໝາຍລັດກຳນົດໃຫ້ລະບົບການຈ່າຍ; ແລະ ຖືກອອກແບບມາເພື່ອຕອບສະໜອງຄວາມຕ້ອງການດ້ານພັດທະນາການຂອງເດັກເກີດໃໝ່ ຫຼືເດັກຮຽນຍ່າງທີ່ພິການຕາມການລະບຸໂດຍທີມງານແຜນບໍລິການຄອບຄົວສະເພາະບຸກຄົນ
ການບໍລິການແມ່ນຢູ່ໃນໜຶ່ງ ຫຼືຫຼາຍຂົງເຂດພັດທະນາການດັ່ງຕໍ່ໄປນີ້: ຮ່າງກາຍ, ການຮັບຮູ້, ການສື່ສານ, ພັດທະນາການດ້ານສັງຄົມ/ອາລົມ ຫຼື ພັດທະນາການດ້ານການປັບຕົວ.

**ເດັກເກີດໃໝ່ ຫຼື ເດັກຮຽນຍ່າງທີ່ພິການ:** ເດັກນ້ອຍອາຍຸ 3 ປີລົງມາຜູ້ທີ່ຈຳເປັນຕ້ອງມີການບໍລິການຊ່ວຍເຫຼືອໄລຍະຕົ້ນ ເພາະວ່າມີການຊັກຊ້າດ້ານພັດທະນາການຕາມທີ່ວັດແທກໂດຍເຄື່ອງມື ແລະຂັ້ນຕອນການກວດບົ່ງມະຕິທີ່ເໝາະສົມໃນໜຶ່ງ ຫຼືຫຼາຍຂົງເຂດພັດທະນາການ ລວມທັງການຮັບຮູ້, ຮ່າງກາຍ, ການສື່ສານ, ສັງຄົມ/ອາລົມ, ແລະ ການປັບຕົວ; ຫຼື ເນື່ອງຈາກສະພາບທາງຮ່າງກາຍ ຫຼືຈິດໃຈທີ່ໄດ້ບົ່ງມະຕິແລ້ວທີ່ມີຄວາມເປັນໄປໄດ້ສູງທີ່ຈະສົ່ງຜົນໃຫ້ເກີດການຊັກຊ້າດ້ານພັດທະນາການ.

# ການຍິນຍອມເຫັນດີທີ່ມີຂໍ້ມູນຄົບຖ້ວນ

**"ການຍິນຍອມເຫັນດີ" ແມ່ນຫຍັງ?**

ການຍິນຍອມເຫັນດີເກີດຂຶ້ນເມື່ອມີການຕອບສະໜອງໄດ້ທັງສາມຂໍ້ກໍານົດເຫຼົ່ານີ້:

1. ທ່ານໄດ້ຮັບແຈ້ງໃຫ້ຊາບຢ່າງຄົບຖ້ວນເປັນພາສາກໍາເນີດຂອງທ່ານກ່ຽວກັບທຸກຂໍ້ມູນທີ່ກ່ຽວຂ້ອງ ("ສໍາຄັນ") ຕໍ່ກັບກິດຈະກໍາທີ່ຕ້ອງການການຍິນຍອມເຫັນດີຈາກທ່ານ.
2. ທ່ານເຂົ້າໃຈ ແລະ ຕົກລົງເຫັນດີເປັນລາຍລັກອັກສອນຕໍ່ກັບກິດຈະກໍາທີ່ຕ້ອງການການຍິນຍອມເຫັນດີຈາກທ່ານ. (ແບບຟອມການຍິນຍອມເຫັນດີຕ້ອງອະທິບາຍກິດຈະກໍາ ແລະ ບອກລາຍການບັນທຶກການຊ່ວຍເຫຼືອໄລຍະຕົ້ນຕ່າງໆ [ຖ້າມີ] ທີ່ຈະຖືກເປີດເຜີຍ ແລະ ໃຜແດ່ທີ່ພວກມັນຈະຖືກເປີດເຜີຍຕໍ່ກັບ).
3. ທ່ານເຂົ້າໃຈວ່າການໃຫ້ການຍິນຍອມເຫັນດີແມ່ນຄວາມສະໝັກໃຈ ແລະ ທ່ານອາດຈະຖອນຄືນການຍິນຍອມເຫັນດີຂອງທ່ານໄດ້ທຸກເວລາ.

**ເວລາໃດທີ່ຕ້ອງການມີການຍິນຍອມເຫັນດີທີ່ມີຂໍ້ມູນຄົບຖ້ວນຈາກພໍ່ແມ່?**

ການຍິນຍອມເຫັນດີແມ່ນຈໍາເປັນຕ້ອງມີກ່ອນ:

1. ຜູ້ຮັບທຶນປະຈໍາເຂດ ຫຼື ໜ່ວຍງານອື່ນຂອງໂຄງການ Early ACCESS ດໍາເນີນຂັ້ນຕອນການກວດຄັດທີ່ເລືອກໄດ້ກັບລູກຂອງທ່ານເພື່ອຕັດສິນກໍານົດວ່າອີງການສົງໄສວ່າລູກຂອງທ່ານມີຄວາມພິການຫຼືບໍ່;
2. ທຸກການປະເມີນຜົນ ແລະການຕີລາຄາທັງໝົດກ່ຽວກັບລູກຂອງທ່ານ ແລະຄອບຄົວຂອງທ່ານ;
3. ລູກ ແລະ ຄອບຄົວຂອງທ່ານໄດ້ຮັບການບໍລິການ Early ACCESS;
4. ໃຊ້ການປະກັນໄພພາກລັດ ຫຼືພາກເອກະຊົນທີ່ຄຸ້ມຄອງລູກຂອງງທ່ານ ຫຼືຄອບຄົວຂອງທ່ານ (ເບິ່ງໜ້າ 26 ຫາ 35), ເວັ້ນເສຍແຕ່ວ່າການຍິນຍອມເຫັນດີນັ້ນບໍ່ຈໍາເປັນຕ້ອງມີ; ແລະ
5. ເປີດເຜີຍຂໍ້ມູນລະບຸຕົນຕົວສ່ວນບຸກຄົນຈາກບັນທຶກ Early ACCESS ຂອງລູກທ່ານ, ເວັ້ນເສຍແຕ່ວ່າການຍິນຍອມເຫັນດີຈາກທ່ານແມ່ນບໍ່ຈໍາເປັນຕ້ອງມີ.

ຖ້າທ່ານປະຕິເສດບໍ່ໃຫ້ການຍິນຍອມເຫັນດີຂອງທ່ານພາຍໃຕ້ຂໍ້ 1, 2 ຫຼື 3 ຂ້າງເທິງ, ຜູ້ຮັບທຶນປະຈໍາເຂດ ຫຼື ໜ່ວຍງານອື່ນຂອງ Early ACCESS ຕ້ອງດໍາເນີນບາດກ້າວທີ່ເໝາະສົມເພື່ອຮັບປະກັນວ່າທ່ານ (a) ຮັບຮູ້ຢ່າງຄົບຖ້ວນລັກສະນະຂອງການປະເມີນ, ການຕີລາຄາ ຫຼື ການບໍລິການທີ່ອາດຈະມີໃຫ້ແກ່ລູກຂອງທ່ານ, ແລະ (b) ເຂົ້າໃຈວ່າລູກຂອງທ່ານຈະບໍ່ສາມາດໄດ້ຮັບການປະເມີນຜົນ, ການຕີລາຄາ ຫຼື ການບໍລິການຈົນກວ່າວ່າທ່ານໃຫ້ການຍິນຍອມເຫັນດີ.

ຖ້າທ່ານໃຫ້ການຍິນຍອມເຫັນດີຕໍ່ກັບການບໍລິການ Early ACCESS ໃດໜຶ່ງ, ການບໍລິການນັ້ນຕ້ອງເລີ່ມໃນທັນທີທີ່ເປັນໄປໄດ້ຫຼັງຈາກທີ່ທ່ານໃຫ້ການຍິນຍອມເຫັນດີຂອງທ່ານແລ້ວ.

**ຈະເປັນແນວໃດຖ້າຂ້ອຍຖອນການຍິນຍອມເຫັນດີຂອງຂ້ອຍສໍາລັບການບໍລິການ?**

ການຍິນຍອມເຫັນດີຂອງທ່ານແມ່ນຄວາມສະໝັກໃຈ ແລະ ສາມາດຖອນຄືນໄດ້ທຸກເວລາ; ແນວໃດກໍ່ຕາມ, ມັນບໍ່ມີຜົນຕໍ່ກັບການດໍາເນີນການທີ່ໄດ້ເກີດຂຶ້ນແລ້ວຫຼັງຈາກໄດ້ໃຫ້ການຍິນຍອມເຫັນດີ ແລະ ກ່ອນການຖອນການຍິນຍອມເຫັນດີ. ທ່ານອາດຈະປະຕິເສດ ຫຼືຖອນການຍິນຍອມເຫັນດີຂອງທ່ານສໍາລັບການບໍລິການຊ່ວຍເຫຼືອໄລຍະຕົ້ນສະເພາະໃດໜຶ່ງ ໂດຍບໍ່ມີຜົນຫຍັງຕໍ່ກັບການບໍລິການ Early ACCESS ອື່ນຂອງລູກທ່ານ.

**ຖ້າຂ້ອຍປະຕິເສດບໍ່ໃຫ້ການຍິນຍອມເຫັນດີຂອງຂ້ອຍ, ຜູ້ຮັບທຶນປະຈໍາເຂດ ຫຼືອົງການອື່ນຂອງ Early ACCESS ສາມາດໃຊ້ຂັ້ນຕອນຕາມຂະບວນການນິຕິທໍາ (ຫຼືກ due process) ຂອງກົດໝາຍ IDEA ເພື່ອທ້າພິສູດຫຼືຄັດຄ້ານການປະຕິເສດບໍ່ໃຫ້ການຍິນຍອມຂອງຂ້ອຍໄດ້ບໍ່?**

ບໍ່.

**ຖ້າຂ້ອຍຖອນການຍິນຍອມເຫັນດີຂອງຂ້ອຍ, ຂ້ອຍສາມາດບັງຄັບໃຫ້ຜູ້ຮັບທຶນປະຈໍາເຂດ ທໍາລາຍຖິ້ມບັນທຶກ Early ACCESS ຂອງລູກຂ້ອຍໄດ້ບໍ່?**

ບໍ່.

## ແຈ້ງການລ່ວງໜ້າເປັນລາຍລັກອັກສອນ

ການມີສ່ວນຮ່ວມຂອງທ່ານໃນການຕັດສິນບັນໃຈສຳລັບພັດທະນາການຂອງລູກທ່ານແມ່ນສຳຄັນຫຼາຍ. ກົດໝາຍກຳນົດໃຫ້ທ່ານຕ້ອງໄດ້ເຂົ້າຮ່ວມໃນລະຫວ່າງກິດຈະກຳສະເພາະຕ່າງໆຕະຫຼອດ ເພາະວ່າສິ່ງເຫຼົ່ານີ້ກະທົບກັບການບໍລິການຊ່ວຍເຫຼືອໄລຍະຕົ້ນຂອງລູກຄ້າ.

"ແຈ້ງການເປັນລາຍລັກອັກສອນກ່ອນລ່ວງໜ້າ" ແມ່ນການສື່ສານແຈ້ງບອກເປັນລາຍລັກອັກສອນຫາທ່ານຈາກຜູ້ປະສານງານການບໍລິການຂອງທ່ານໃນເວລາທີ່ຜູ້ໃຫ້ບໍລິການໃດໜຶ່ງກຳລັງສະເໜີເຮັດ ຫຼືປະຕິເສດບໍ່ເລີ່ມເຮັດ ຫຼືປ່ຽນແປງການລະບຸກຳນົດ, ການປະເມີນຜົນ ຫຼື ການບັນຈຸເຂົ້າຮຽນຂອງລູກທ່ານ ຫຼື ການສະໜອງການບໍລິການ Early ACCESS ທີ່ເໝາະສົມໃຫ້ແກ່ລູກ ແລະ/ຫຼືຄອບຄົວຂອງທ່ານ.

ແຈ້ງການນັ້ນຕ້ອງຖືກເອົາໃຫ້ທ່ານພາຍໃນໄລຍະເວລາທີ່ເໝາະສົມຫຼັງຈາກຜູ້ໃຫ້ບໍລິການໄດ້ຕັດສິນໃຈກ່ຽວກັບການສະເໜີ ຫຼືການປະຕິເສດ ແຕ່ຕ້ອງ *ກ່ອນ* ທີ່ຜູ້ໃຫ້ບໍລິການຈະຈັດຕັ້ງປະຕິບັດການດຳເນີນການນັ້ນ.

### ໃບແຈ້ງການລວມມີຂໍ້ມູນໃດແດ່?

ໃບແຈ້ງການຕ້ອງມີປະກອບຂໍ້ມູນຕໍ່ໄປນີ້:

1. ລາຍລະອຽດຂອງການດຳເນີນການທີ່ສະເໜີເຮັດ ຫຼືປະຕິເສດບໍ່ເຮັດ;
2. ຄຳອະທິບາຍກ່ຽວກັບວ່າຍ້ອນຫຍັງການດຳເນີນການນັ້ນຈຶ່ງຖືກສະເໜີເຮັດ ຫຼືປະຕິເສດບໍ່ເຮັດ;
3. ການປົກປ້ອງຄຸ້ມຄອງຕາມລະບຽບການທີ່ມີໃຫ້; ແລະ
4. ວິທີຍື່ນການຮ້ອງຮຽນຂັ້ນລັດ ຫຼືການຮ້ອງຮຽນຕາມຫຼັກ due process (ແລະກຳນົດເວລາ) ເມື່ອທ່ານເຊື່ອວ່າມີການລະເມີດຂໍ້ກຳນົດຂອງ Early ACCESS.

### ແຈ້ງການຈະເປັນແນວໃດ?

ມັນຈະເປັນແບບຟອມທີ່ຂຽນເປັນພາສາທີ່ສາມາດເຂົ້າໃຈໄດ້ຕໍ່ກັບສາທາລະນະຊົນທົ່ວໄປ. ມັນຈະເປັນພາສາກຳເນີດຂອງທ່ານ. ຖ້າພາສາກຳເນີດ (ຫຼືຮູບແບບການສື່ສານອື່ນ) ຂອງທ່ານບໍ່ແມ່ນພາສາຂຽນ, ຜູ້ປະສານງານການບໍລິການຈະດຳເນີນບາດກ້າວຕ່າງໆເພື່ອຮັບປະກັນວ່າທ່ານເຂົ້າໃຈແຈ້ງການນັ້ນ. ຖ້າທ່ານຫູໜວກ ຫຼືຕາບອດ, ຫຼືບໍ່ມີພາສາຂຽນ, ການສື່ສານຈະຈະເປັນການສື່ສານທີ່ທ່ານໃຊ້ເປັນປົກກະຕິ (ເຊັ່ນວ່າ ພາສາໃບ້, ໜັງສືໂພງສຳລັບຄົນຕາບອດ ຫຼື ການສື່ສານປາກເປົ່າ).

### ຈະເປັນແນວໃດຖ້າຂ້ອຍບໍ່ເຫັນດີນຳການດຳເນີນການ ຫຼືການປະຕິເສດທີ່ສະເໜີມາ?

ມີຫຼາຍທາງເລືອກທີ່ເປັນທາງການ ແລະບໍ່ເປັນທາງການສຳລັບທ່ານ. ພວກມັນຖືກອະທິບາຍລາຍລະອຽດໃນຫົວຂໍ້ "ທາງເລືອກສຳລັບການແກ້ໄຂຄວາມຂັດແຍ້ງ" ຂອງປຶ້ມຄູ່ມືນີ້. ຜູ້ປະສານງານການບໍລິການຈະຊ່ວຍເຫຼືອທ່ານໃນການເຂົ້າໃຈທາງເລືອກຕ່າງໆຂອງທ່ານ. ແຫຼ່ງຄວາມຊ່ວຍເຫຼືອອື່ນແມ່ນມີໃນຫົວຂໍ້ພາກສະເໜີທີ່ມີຢູ່ໃນໜ້າທຳອິດຂອງປຶ້ມຄູ່ມືນີ້.

ຫຼັງຈາກການຮ້ອງຂໍ, ຜູ້ປະສານການບໍລິການຂອງທ່ານ ຫຼືອົງການພາກລັດຈະແຈ້ງບອກທ່ານກ່ຽວກັບການບໍລິການດ້ານກົດໝາຍທີ່ຟຣີ ຫຼື ມີຄ່າໃຊ້ຈ່າຍຕ່ຳ ແລະ ການບໍລິການຊ່ວຍເຫຼືອອື່ນທີ່ມີໃນເຂດພື້ນທີ່ຂອງທ່ານ.

**ໝາຍເຫດ:**

# ການຮັກສາຄວາມລັບຂອງຂໍ້ມູນ/ບັນທຶກ

ກົດໝາຍ IDEA ແລະ ກົດໝາຍລັດຖະບານກາງທີ່ເອີ້ນວ່າກົດໝາຍວ່າດ້ວຍສິດທິດ້ານການສຶກສາ ແລະຄວາມເປັນສ່ວນຕົວຂອງຄອບຄົວ (FERPA) ໃຫ້ທ່ານສິດທິຫຼາຍຢ່າງກ່ຽວກັບບັນທຶກ Early ACCESS ຂອງລູກທ່ານ. ທ່ານມີສິດ ເຂົ້າເຖິງບັນທຶກເຫຼົ່ານີ້ ແລະ ມີສິດທ້າພິສູດສິ່ງຕ່າງໆທີ່ທ່ານຄິດວ່າບໍ່ຖືກຕ້ອງໃນບັນທຶກເຫຼົ່ານັ້ນ. ຂໍ້ມູນລະບຸຕົນຕົວສ່ວນບຸກຄົນໃນບັນທຶກ Early ACCESS ຂອງລູກທ່ານແມ່ນເປັນຄວາມລັບ, ແລະ ຕ້ອງບໍ່ຖືກເປີດເຜີຍໂດຍບໍ່ມີການຍິນຍອມເຫັນດີຈາກທ່ານ (ເວັ້ນເສຍແຕ່ມີການໃຊ້ຂໍ້ຍົກເວັ້ນການຍິນຍອມເຫັນດີ). ຫົວຂໍ້ນີ້ໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບການປົກປ້ອງທີ່ສຳຄັນເຫຼົ່ານັ້ນ.

**ຂ້ອຍມີການເຂົ້າເຖິງບັນທຶກ Early ACCESS ຂອງລູກຂ້ອຍບໍ່?**
ມີ. ອົງການພາກລັດຕ້ອງອະນຸຍາດໃຫ້ທ່ານກວດກາ ແລະກວດເບິ່ງບັນທຶກການຊ່ວຍເຫຼືອໄລຍະຕົ້ນຂອງລູກທ່ານທີ່ກ່ຽວຂ້ອງກັບການປະເມີນຜົນ ແລະການຕີລາຄາ, ການກຳນົດການມີສິດ, ການພັດທະນາ ແລະການຈັດຕັ້ງປະຕິບັດແຜນ IFSP, ການຮ້ອງຮຽນສ່ວນບຸກຄົນທີ່ກ່ຽວຂ້ອງກັບລູກຂອງທ່ານ, ແລະ ຂົງເຂດອື່ນທີ່ພົວພັນກັບບັນທຶກກ່ຽວກັບລູກຂອງທ່ານ ແລະຄອບຄົວຂອງທ່ານ. ຕາມການຮ້ອງຂໍ, ອົງການພາກລັດຕ້ອງເອົາລາຍການປະເພດ ແລະສະຖານທີ່ຂອງບັນທຶກ Early ACCESS ທີ່ເກັບເອົາ, ຮັກສາໄວ້ ຫຼື ນຳໃຊ້ໂດຍ ອົງການນັ້ນໆ.

**ເມື່ອໃດອົງການພາກລັດຈະໃຫ້ຂ້ອຍເຂົ້າເຖິງບັນທຶກ Early ACCESS ຂອງລູກຂ້ອຍ?**
ອົງການພາກລັດຈະປະຕິບັດຕາມຄຳຮ້ອງຂໍກວດເບິ່ງ ຫຼືກວດກາບັນທຶກໂດຍບໍ່ມີການຊັກຊ້າທີ່ບໍ່ຈຳເປັນ– ບໍ່ເກີນ 45 ວັນຕາມເວລາປະຕິທິນຫຼັງຈາກມີການຮ້ອງຂໍ ແລະກ່ອນກອງປະຊຸມຕ່າງໆກ່ຽວກັບແຜນ IFSP ຫຼືການໄຕ່ສວນ.

**"ສິດໃນການກວດກາ ແລະ ກວດເບິ່ງ" ປະກອບມີຫຍັງແດ່?**
ສິດໃນການກວດກາ ແລະກວດເບິ່ງ ປະກອບມີສິດທິຕໍ່ໄປນີ້:

1. ໄດ້ຮັບການຕອບສະໜອງຈາກອົງການທີ່ເຂົ້າຮ່ວມຕໍ່ກັບການຮ້ອງຂໍທີ່ສົມເຫດຜົນເພື່ອຂໍເອົາຄຳອະທິບາຍ ແລະ ການແປຄວາມໝາຍຂອງບັນທຶກ;
2. ຮ້ອງຂໍໃຫ້ອົງການສະໜອງສຳເນົາບັນທຶກທີ່ປະກອບມີຂໍ້ມູນ (ຖ້າບໍ່ໃຫ້ສຳເນົາດັ່ງກ່າວຈະຂັດຂວາງທ່ານຈາກການປະຕິບັດສິດທິໃນການກວດກາ ແລະກວດເບິ່ງບັນທຶກ); ແລະ
3. ໃຫ້ຕົວແທນຂອງທ່ານເປັນຜູ້ກວດກາ ແລະກວດເບິ່ງບັນທຶກດັ່ງກ່າວ.

ອົງການຖືວ່າທ່ານມີສິດອຳນາດໃນການກວດກາ ແລະກວດເບິ່ງບັນທຶກຂອງລູກທ່ານ ເວັ້ນເສຍແຕ່ວ່າອົງການດັ່ງກ່າວໄດ້ຮັບການແນະນຳວ່າທ່ານບໍ່ມີສິດອຳນາດພາຍໃຕ້ກົດໝາຍຂອງລັດທີ່ນຳໃຊ້ທີ່ຄວບຄຸມບັນຫາເຊັ່ນວ່າການເປັນຜູ້ປົກຄອງ, ການແຍກກັນຢູ່ ຫຼື ການຢ່າຮ້າງ.

**ອົງການຈະຮັກສາບັນທຶກກ່ຽວກັບວ່າມີໃຜແດ່ໄດ້ເຂົ້າເຖິງບັນທຶກການຊ່ວຍເຫຼືອໄລຍະຕົ້ນຂອງລູກຂ້ອຍບໍ່?**
ແມ່ນ. ຍົກເວັ້ນການເຂົ້າເຖິງໂດຍພໍ່ແມ່ ຫຼືພະນັກງານທີ່ໄດ້ຮັບອະນຸຍາດຂອງອົງການເອງ, ອົງການທີ່ຮັກສາບັນທຶກດັ່ງກ່າວຕ້ອງເຮັດການຈົດບັນທຶກຕິດຕາມພາກສ່ວນຕ່າງໆທີ່ໄດ້ຮັບການເຂົ້າເຖິງບັນທຶກການຊ່ວຍເຫຼືອໄລຍະຕົ້ນ, ເຊິ່ງການຈົດບັນທຶກຕ້ອງລວມມີ:

1. ຊື່ຂອງພາກສ່ວນນັ້ນ;
2. ວັນທີທີ່ໄດ້ຮັບການເຂົ້າເຖິງ; ແລະ
3. ຈຸດປະສົງທີ່ພາກສ່ວນນັ້ນໄດ້ຮັບອະນຸຍາດໃຫ້ໃຊ້ບັນທຶກດັ່ງກ່າວ.

**ຈະເປັນແນວໃດຖ້າບັນທຶກມີຂໍ້ມູນກ່ຽວກັບເດັກຫຼາຍກວ່າໜຶ່ງຄົນ?**
ທ່ານມີສິດກວດກາ ແລະກວດເບິ່ງພຽງແຕ່ຂໍ້ມູນທີ່ກ່ຽວຂ້ອງກັບລູກຂອງທ່ານ ຫຼື ໄດ້ຮັບແຈ້ງບອກກ່ຽວກັບຂໍ້ມູນສະເພາະນັ້ນເທົ່ານັ້ນ.

**ອົງການອາດຈະຄິດຄ່າທຳນຽມສຳລັບການກວດກາ ແລະກວດເບິ່ງບັນທຶກ Early ACCESS ຂອງລູກຂ້ອຍບໍ່?**
ອົງການທີ່ເຂົ້າຮ່ວມອາດຈະຄິດຄ່າທຳນຽມສຳລັບສຳເນົາບັນທຶກທີ່ອັດໃຫ້ທ່ານຖ້າຄ່າທຳນຽມດັ່ງກ່າວບໍ່ເປັນອຸປະສັກຂັດຂວາງທ່ານຈາກການປະຕິບັດສິດທິຂອງທ່ານໃນການກວດກາ ແລະກວດເບິ່ງບັນທຶກເຫຼົ່ານັ້ນ. ອົງການອາດຈະບໍ່ຄິດຄ່າທຳນຽມສຳລັບການຄົ້ນຫາ ຫຼືການກູ້ຄືນຂໍ້ມູນດັ່ງກ່າວ.

**ມີບັນທຶກທີ່ຕ້ອງເອົາໃຫ້ທ່ານໂດຍຟຣີໆບໍ່?**
ມີ. ອົງການ Early ACCESS ຕ້ອງເອົາໃຫ້ທ່ານສຳເນົາຂອງແຕ່ລະການປະເມີນຜົນ, ການຕີລາຄາເດັກ, ການປະເມີນຜົນຄອບຄົວ, ຫຼື ແຜນການບໍລິການຄອບຄົວສະເພາະບຸກຄົນ (IFSP) ໃນທັນທີທີ່ເປັນໄປໄດ້ຫຼັງຈາກກອງປະຊຸມ IFSP ແຕ່ລະຄັ້ງ.

**ຈະເປັນແນວໃດຖ້າຂ້ອຍຄິດວ່າຂໍ້ມູນໃນບັນທຶກບໍ່ຖືກຕ້ອງ?**
ຖ້າທ່ານເຊື່ອວ່າຂໍ້ມູນທີ່ເກັບເອົາ, ຮັກສາໄວ້ ຫຼືນຳໃຊ້ນັ້ນ ແມ່ນຂໍ້ມູນທີ່ບໍ່ຖືກຕ້ອງ, ເຮັດໃຫ້ເຂົ້າໃຈຜິດ ຫຼືລະເມີດຄວາມເປັນສ່ວນຕົວ ຫຼືສິດທິອື່ນຂອງລູກທ່ານ, ທ່ານອາດຈະຮ້ອງຂໍໃຫ້ອົງການທີ່ຮັກສາບັນທຶກນັ້ນແກ້ໄຂບັນທຶກດັ່ງກ່າວໃຫ້ຖືກຕ້ອງ. ອົງການຈະຕັດສິນພາຍໃນກຳນົດເວລາທີ່ສົມເຫດສົມຜົນວ່າຈະແກ້ໄຂຂໍ້ມູນນັ້ນຕາມການຮ້ອງຂໍຫຼືບໍ່. ຖ້າອົງການຕັດສິນໃຈປະຕິເສດບໍ່ແກ້ໄຂຂໍ້ມູນຕາມການຮ້ອງຂໍ, ມັນຈະແຈ້ງບອກໃຫ້ທ່ານຮູ້ກ່ຽວກັບການປະຕິເສດນັ້ນ ແລະ ແນະນຳໃຫ້ທ່ານຮູ້ກ່ຽວກັບສິດທີໃນການໄດ້ຮັບການໄຕ່ສວນ.

ຫຼັງຈາກການຮ້ອງຂໍຂອງທ່ານ, ອົງການຈະສະໜອງໂອກາດໃຫ້ມີການໄຕ່ສວນເພື່ອທ້າພິສູດຂໍ້ມູນໃນບັນທຶກການຊ່ວຍເຫຼືອໄລຍະຕົ້ນ ເພື່ອຮັບປະກັນວ່າມັນບໍ່ແມ່ນຂໍ້ມູນທີ່ບໍ່ຖືກຕ້ອງ, ເຮັດໃຫ້ເຂົ້າໃຈຜິດ ຫຼື ລະເມີດຄວາມເປັນສ່ວນຕົວ ຫຼືສິດທິອື່ນຂອງລູກທ່ານ. ອີງຕາມຜົນການໄຕ່ສວນ:

1. ຖ້າການຕັດສິນອອກມາວ່າຂໍ້ມູນນັ້ນແມ່ນເປັນຂໍ້ມູນທີ່ເຮັດໃຫ້ເຂົ້າໃຈຜິດ, ບໍ່ຖືກຕ້ອງ ຫຼື ລະເມີດຄວາມເປັນສ່ວນຕົວ ຫຼືສິດທິອື່ນຂອງລູກທ່ານ, ອົງການຈະຕ້ອງແກ້ໄຂຂໍ້ມູນນັ້ນໃຫ້ຖືກຕ້ອງ ແລະ ແຈ້ງບອກໃຫ້ທ່ານຊາບເປັນລາຍລັກອັກສອນ.
2. ຖ້າການຕັດສິນອອກມາວ່າຂໍ້ມູນນັ້ນ **ບໍ່ແມ່ນ** ຂໍ້ມູນທີ່ບໍ່ຖືກຕ້ອງ, ເຮັດໃຫ້ເຂົ້າໃຈຜິດ ຫຼືລະເມີດຄວາມເປັນສ່ວນຕົວ ຫຼືສິດທິອື່ນຂອງລູກທ່ານ, ອົງການຈະແຈ້ງບອກທ່ານໃຫ້ຊາບການຕັດສິນນັ້ນ. ອົງການຍັງຈະແຈ້ງບອກທ່ານກ່ຽວກັບສິດທິຂອງທ່ານໃນຂຽນໄວ້ໃນບັນທຶກທີ່ອົງການເກັບຮັກສາກ່ຽວກັບລູກທ່ານ ຄຳຖະແຫຼງທີ່ໃຫ້ຄຳເຫັນຕໍ່ກັບຂໍ້ມູນນັ້ນ ແລະ ລະບຸເຫດຜົນຂອງທ່ານສຳລັບການບໍ່ເຫັນດີນຳການຕັດສິນຂອງອົງການນັ້ນ.
3. ທຸກໆຄຳອະທິບາຍທີ່ເອົາໄວ້ໃນບັນທຶກຂອງລູກທ່ານ ຕ້ອງໄດ້ຮັກສາໄວ້ໂດຍອົງການ ເປັນສ່ວນໜຶ່ງຂອງບັນທຶກນັ້ນໆ ຕາບໃດທີ່ບັນທຶກ ຫຼື ສ່ວນທີ່ຂັດແຍ້ງນັ້ນຍັງຖືກຮັກສາໄວ້ໂດຍທາງອົງການ. ຖ້າບັນທຶກ ຫຼື ສ່ວນເອກະສານທີ່ຂັດແຍ້ງ ນັ້ນຖືກເປີດເຜີຍ ໂດຍອົງການຕໍ່ກັບພາກສ່ວນອື່ນ, ຄຳອະທິບາຍຂອງທ່ານກໍ່ຕ້ອງໄດ້ເປີດເຜີຍເຊັ່ນກັນ.

**ການໄຕ່ສວນຈະເປັນແນວໃດ?**

ການໄຕ່ສວນຕ້ອງປະຕິບັດຕາມຂໍ້ກຳນົດຂອງກົດໝາຍ FERPA. ຂໍ້ກຳນົດເຫຼົ່ານັ້ນແມ່ນມີໃນ 34 C.F.R. ຂໍ້ 99.22. ຈົ່ງຕິດຕໍ່ຫາຜູ້ປະສານການບໍລິການຂອງທ່ານ ຖ້າທ່ານຕ້ອງການຂໍ້ມູນກ່ຽວກັບຂໍ້ກຳນົດເຫຼົ່ານັ້ນ.

**"ຂໍ້ມູນລະບຸຕົນຕົວສ່ວນບຸກຄົນ" ແມ່ນຫຍັງ?**
ຂໍ້ມູນລະບຸຕົນຕົວສ່ວນບຸກຄົນໝາຍເຖິງຂໍ້ມູນທີ່ລວມມີ ແຕ່ບໍ່ຈຳກັດ:

- ຊື່ຂອງລູກທ່ານ
- ຊື່ຂອງທ່ານ ຫຼືຊື່ຂອງສະມາຊິກອື່ນໃນຄອບຄົວ
- ທີ່ຢູ່ຂອງລູກທ່ານ ຫຼືທີ່ຢູ່ຂອງທ່ານ ຫຼືຂອງສະມາຊິກອື່ນໃນຄອບຄົວ
- ລະຫັດລະບຸຕົນຕົວ ເຊັ່ນວ່າ ລະຫັດປະກັນສັງຄົມຂອງລູກທ່ານ, ເລກປະຈຳຕົວນັກຮຽນ ຫຼື ບັນທຶກດ້ານຊີວະມິຕິອື່ນ
- ລະຫັດລະບຸຕົນຕົວທາງອ້ອມອື່ນ ເຊັ່ນວ່າ ວັນເດືອນປີເກີດ, ສະຖານທີ່ເກີດຂອງລູກທ່ານ, ຫຼື ນາມສະກຸນກ່ອນແຕ່ງງານຂອງແມ່ນເດັກ
- ຂໍ້ມູນອື່ນທີ່ ຢູ່ອັນດຽວ ຫຼື ຮ່ວມກັບຂໍ້ມູນອື່ນ ເຊື່ອມໂຍງ ຫຼື ສາມາດເຊື່ອມໂຍງກັບເດັກສະເພາະທີ່ຈະເຮັດໃຫ້ບຸກຄົນປົກກະຕິໃນຊຸມຊົນຜູ້ທີ່ບໍ່ຮູ້ຈັກກັບເດັກນັ້ນ ສາມາດລະບຸຕົວຕົນຂອງເດັກໄດ້ຢ່າງແນ່ນອນສົມຄວນ
- ຂໍ້ມູນທີ່ຮ້ອງຂໍເອົາໂດຍບຸກຄົນຜູ້ທີ່ທາງອົງການເຊື່ອຢ່າງມີເຫດຜົນວ່າຮູ້ຕົວຕົນຂອງເດັກທີ່ບັນທຶກກ່ຽວຂ້ອງກັບ.

**ອົງການທີ່ມີບັນທຶກ Early ACCESS ຂອງລູກຂ້ອຍຈຳເປັນຕ້ອງຂໍອະນຸຍາດຈາກຂ້ອຍເພື່ອເປີດເຜີຍຂໍ້ມູນດັ່ງກ່າວແມ່ນບໍ່?**
ແມ່ນ, ຕາມກົດລະບຽບທົ່ວໄປ. ການຍິນຍອມເຫັນດີຈາກພໍ່ແມ່ຕ້ອງໄດ້ຮັບກ່ອນທີ່ຈະເປີດເຜີຍຂໍ້ມູນລະບຸຕົນຕົວສ່ວນບຸກຄົນຕໍ່ກັບບຸກຄົນໃດໆກໍ່ຕາມ (ນອກຈາກເຈົ້າໜ້າທີ່, ຜູ້ຕາງໜ້າທີ່ໄດ້ຮັບອະນຸຍາດ ຫຼື ພະນັກງານຂອງອົງການທີ່ເຂົ້າຮ່ວມທີ່ເກັບເອົາ, ຮັກສາໄວ້ ຫຼືນຳໃຊ້ຂໍ້ມູນນັ້ນ) ຫຼື ໃຊ້ຂໍ້ມູນດັ່ງກ່າວເພື່ອຈຸດປະສົງອື່ນນອກຈາກການຈັດຕັ້ງປະຕິບັດການບໍລິການ Early ACCESS.

ແນວໃດກໍ່ຕາມ, ມີຂໍ້ຍົກເວັ້ນຕໍ່ກັບຂໍ້ກຳນົດວ່າດ້ວຍການຍິນຍອມເຫັນດີຂອງພໍ່ແມ່. ຕົວຢ່າງ, ເຈົ້າໜ້າທີ່ການສຶກສາອາດຈະເປີດເຜີຍບັນທຶກດ້ານການສຶກສາໂດຍບໍ່ມີການຍິນຍອມເຫັນດີກ່ອນລ່ວງໜ້າໃນເວລາທີ່ຈຳເປັນເພື່ອຕອບສະໜອງຕໍ່ກັບເຫດການສຸກເສີນດ້ານສຸຂະພາບ ຫຼືຄວາມປອດໄພ. ຖ້າທ່ານມີຄຳຖາມໃດໆກ່ຽວກັບຂໍ້ຍົກເວັ້ນຂອງກົດໝາຍ FERPA, ກະລຸນາ ຕິດຕໍ່ຫາຜູ້ປະສານງານການບໍລິການຂອງທ່ານ.

ຂໍ້ຍົກເວັ້ນທີ່ສຳຄັນໜຶ່ງຂອງກົດໝາຍ FERPA ອະນຸຍາດໃຫ້ອົງການການສຶກສາໂອນບັນທຶກໂດຍບໍ່ມີການຍິນຍອມເຫັນດີຈາກພໍ່ແມ່ຫາອົງການການສຶກສາອື່ນບ່ອນທີ່ເດັກຈົດທະບຽນ ຫຼືອາດຈະຖືກຈົດທະບຽນເຂົ້າຮຽນ. ສຳລັບເຫດຜົນນັ້ນ, ແລະ ເພື່ອຮັບປະກັນການໂອນຍ້າຍຢ່າງຮຽບຮ້ອຍຈາກ Early ACCESS ຫາ IDEA ພາກ B (ການສຶກສາພິເສດຊ່ວງໄວເດັກ), ຖ້າລູກຂອງທ່ານຍ້າຍໄປສູ່ການບໍລິການຫ້ອງປັກງຸມຕາມພາກ B ໃນຕອນອາຍຸສາມປີ, ການຍິນຍອມເຫັນດີຂອງທ່ານແມ່ນບໍ່ຈຳເປັນພາຍໃຕ້ກົດໝາຍ FERPA ແລະ ກົດໝາຍ IDEA. ບັນທຶກ Early ACCESS ຂອງລູກທ່ານຈະຖືກສົ່ງຫາອົງການສຶກສາປະຈຳເຂດ (Area Education Agency) ທີ່ຮັບຜິດຊອບການບໍລິການດ້ານການສຶກສາພິເສດໃນເຂດການສຶກສາຂອງທ່ານ.

ເມື່ອຂໍ້ມູນແມ່ນສ່ວນໜຶ່ງຂອງບັນທຶກ Early ACCESS ຂອງລູກທ່ານ, ມັນໄດ້ຮັບການປົກປ້ອງໂດຍກົດໝາຍ FERPA ແລະ ສາມາດຖືກເປີດເຜີຍໄດ້ອີງຕາມກົດລະບຽບ FERPA ເທົ່ານັ້ນ. ນີ້ລວມມີຂໍ້ມູນທາງການແພດ ຫຼືຂໍ້ມູນການປະເມີນຜົນພາຍນອກທີ່ຮັບເອົາເຂົ້າໃນບັນທຶກຂອງລູກທ່ານ.

**ຖ້າຂ້ອຍປະຕິເສດບໍ່ໃຫ້ການຍິນຍອມເຫັນດີທີ່ຈຳເປັນຕ້ອງມີເພື່ອເປີດເຜີຍຂໍ້ມູນຈາກບັນທຶກ Early ACCESS ຂອງລູກຂ້ອຍ, ທາງອົງການຈະເຮັດແນວໃດ?**
ອົງການຈະໄປພົບທ່ານ ແລະອະທິບາຍວ່າການປະຕິເສດບໍ່ໃຫ້ການຍິນຍອມເຫັນດີຈະມີຜົນກະທົບແນວໃດຕໍ່ກັບຄວາມສາມາດຂອງລູກທ່ານໃນການໄດ້ຮັບການບໍລິການ Early ACCESS. ອົງການບໍ່ສາມາດລົບລ້າງການປະຕິເສດບໍ່ໃຫ້ການຍິນຍອມເຫັນດີຂອງທ່ານໄດ້.

**ມີບາດກ້າວອື່ນທີ່ອົງການພາກລັດດຳເນີນເພື່ອປົກປ້ອງ ແລະຄຸ້ມຄອງຄວາມລັບ ແລະຄວາມເປັນສ່ວນຕົວຂອງລູກຂອຍບໍ?**

1. ແຕ່ລະອົງການມີພະນັກງານຄົນໜຶ່ງຮັບຜິດຊອບສຳລັບການຮັບປະກັນການຮັກສາຄວາມລັບຂອງຂໍ້ມູນລະບຸຕົນຕົວສ່ວນບຸກຄົນ;
2. ທຸກຄົນທີ່ເກັບເອົາ ຫຼື ນຳໃຊ້ຂໍ້ມູນລະບຸຕົນຕົວສ່ວນບຸກຄົນຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບການຮັກສາຄວາມລັບ ແລະຄວາມເປັນສ່ວນຕົວ ຫຼື ຄຳແນະນຳກ່ຽວກັບການຮັກສາຄວາມລັບ ແລະຄວາມເປັນສ່ວນຕົວ; ແລະ
3. ແຕ່ລະອົງການທີ່ເຂົ້າຮ່ວມຈະຕ້ອງຮັກສາບັນຊີລາຍການປະຈຸບັນຂອງຊື່ ລະຕຳແໜ່ງຂອງພະນັກງານພາຍໃນອົງການຜູ້ທີ່ອາດຈະການເຂົ້າເຖິງຂໍ້ມູນລະບຸຕົນຕົວສ່ວນບຸກຄົນເພື່ອໃຫ້ສາທາລະນະຊົນກວດສອບ.

**ຈະເກີດຫຍັງຂຶ້ນກັບບັນທຶກ Early ACCESS ຂອງລູກຂ້ອຍ ເມື່ອບໍ່ຕ້ອງການພວກມັນອີກຕໍ່ໄປ?** ອົງການພາກລັດຈະແຈ້ງບອກທ່ານເມື່ອຂໍ້ມູນລະບຸຕົນຕົວສ່ວນບຸກຄົນທີ່ໄດ້ເກັບເອົາ, ຮັກສາໄວ້ ຫຼື ນຳໃຊ້ ແມ່ນບໍ່ຕ້ອງການອີກຕໍ່ໄປນີ້ ເພື່ອສະໜອງການບໍລິການຊ່ວຍເຫຼືອໄລຍະຕົ້ນໃຫ້ແກ່ລູກຂອງທ່ານ. ຂໍ້ມູນດັ່ງກ່າວຕ້ອງຖືກທຳລາຍຖິ້ມຕາມຄຳຮ້ອງຂໍຂອງທ່ານ ຖ້າບັນທຶກນັ້ນແມ່ນບໍ່ຕ້ອງການມີອີກຕໍ່ໄປ.

ການຕັດສິນວ່າເມື່ອໃດແມ່ນບໍ່ຕ້ອງການບັນທຶກອີກຕໍ່ໄປນັ້ນແມ່ນການຕັດສິນທີ່ອີງຕາມເສລີພາບການຕັດສິນໃຈຂອງອົງການພາກລັດນັ້ນໆ. ບັນທຶກຈະຖືກຮັກສາໄວ້ຈົນກວ່າວ່າມັນບໍ່ກ່ຽວຂ້ອງອີກຕໍ່ໄປກັບການສະໜອງການບໍລິການ Early ACCESS ແລະ ບໍ່ຕ້ອງການອີກຕໍ່ໄປສຳລັບຈຸດປະສົງການກວດສອບ ແລະຄວາມຮັບຜິດຊອບ. ຢ່າງຕ່ຳສຸດ, ບັນທຶກທີ່ຕ້ອງການສຳລັບຈຸດປະສົງການກວດສອບ ແລະຄວາມຮັບຜິດຊອບຕ້ອງຖືກຮັກສາໄວ້ເປັນເວລາຫ້າປີຫຼັງຈາກກິດຈະກຳທີ່ໃຊ້ທຶນ Early ACCESS ຫຼື ທຶນອື່ນ.

**ມີບາງບັນທຶກທີ່ອົງການ Early ACCESS ບໍ່ຈຳເປັນຕ້ອງທຳລາຍຖິ້ມບໍ?**
ມີ. ອົງການອາດຈະຮັກສາບັນທຶກຖາວອນກ່ຽວກັບຊື່, ວັນເດືອນປີເກີດຂອງລູກທ່ານ, ຂໍ້ມູນຕິດຕໍ່ຂອງພໍ່ແມ່ (ລວມທັງຊື່ ແລະເບີໂທລະສັບ), ຊື່ຂອງຜູ້ປະສານງານການບໍລິການ ແລະ ຜູ້ໃຫ້ບໍລິການຂອງ Early ACCESS ແລະຂໍ້ມູນສະຫຼຸບສຸດທ້າຍ (ລວມທັງ ປີ ແລະ ອາຍຸທີ່ອອກຈາກໂຄງການ ແລະ ໂຄງການຕ່າງໆທີ່ເຂົ້າຫຼັງຈາກການອອກຈາກໂຄງການນີ້). ຂໍ້ມູນນີ້ອາດຈະຖືກຮັກສາໄວ້ໂດຍບໍ່ມີກຳນົດເວລາ.

**ໝາຍເຫດ:**

# ກອງປະຊຸມ

ຫຼາຍໆການຕັດສິນໃຈທີ່ສຳຄັນສຳລັບລູກຂອງທ່ານຖືກເຮັດຢູ່ກອງປະຊຸມ. ຫົວຂໍ້ນີ້ບອກທ່ານວ່າສິດທິດ້ານກອງປະຊຸມຫຍັງຂອງທ່ານມີຫຍັງແດ່.

**ເມື່ອໃດທີ່ກອງປະຊຸມແມ່ນຈຳເປັນຕ້ອງເຂົ້າຮ່ວມ ຫຼື ເລືອກເຂົ້າຮ່ວມໄດ້?**
<u>ຈຳເປັນຕ້ອງເຂົ້າຮ່ວມ:</u> ກົດລະບຽບຂອງ Early ACCESS ແລະ ກົດໝາຍ IDEA ພາກ C ກຳນົດໃຫ້ມີກອງປະຊຸມໜຶ່ງເພື່ອພັດທະນາແຜນ IFSP ທຳອິດ ຖ້າລູກຂອງທ່ານຖືກຕັດສິນກຳນົດວ່າມີສິດໄດ້ຮັບການບໍລິການ Early ACCESS, ກອງປະຊຸມປະຈຳປີເພື່ອປະເມີນ (ແລະ ປັບປຸງແກ້ໄຂຕາມຄວາມຈຳເປັນ) ແຜນ IFSP ຂອງລູກທ່ານ. ກົດໝາຍຍັງກຳນົດໃຫ້ມີກອງປະຊຸມໃນເວລາທີ່ລູກຂອງທ່ານກຳລັງປ່ຽນຜ່ານຈາກ Early ACCESS.
<u>ເລືອກເຂົ້າຮ່ວມໄດ້:</u> ກົດໝາຍກຳນົດໃຫ້ເຮັດການທົບທວນແຜນ IFSP ຂອງລູກທ່ານເປັນຊ່ວງໄລຍະ (ຢ່າງນ້ອຍໃນທຸກໆຫົກເດືອນ). ການທົບທວນເປັນໄລຍະນັ້ນອາດຈະເຮັດຢູ່ກອງປະຊຸມໃດໜຶ່ງ, ແຕ່ກອງປະຊຸມບໍ່ໄດ້ຖືກກຳນົດໃຫ້ຈຳເປັນຕ້ອງມີ. ທີມງານ IFSP ຂອງລູກທ່ານອາດຈະອາດຈະປະຊຸມກັນ ຖ້າທີມງານຕັດສິນວ່າກອງປະຊຸມແມ່ນເປັນປະໂຫຍດຕໍ່ກັບລູກຂອງທ່ານ.

**ຂໍ້ກຳນົດເປັນແນວໃດກ່ຽວກັບວ່າກອງປະຊຸມຕ້ອງຈັດຢູ່ໃສ ແລະເມື່ອໃດ?**
ກອງປະຊຸມສຳລັບ Early ACCESS ຕ້ອງຖືກດຳເນີນ:

ຢູ່ສະຖານທີ່ ແລະ ໃນເວລາທີ່ສະດວກສຳລັບທ່ານ; ແລະ

ເປັນພາສາກຳເນີດຂອງຄອບຄົວຂອງທ່ານ ຫຼື ຮູບແບບການສື່ສານອື່ນທີ່ທ່ານໃຊ້, ເວັ້ນເສຍແຕ່ວ່າ ມັນເປັນໄປບໍ່ໄດ້ຢ່າງຈະແຈ້ງໃນການເຮັດແນວນັ້ນ.

ທ່ານຕ້ອງເປັນສ່ວນໜຶ່ງໃນການເຮັດການຈັດຕຽມກອງປະຊຸມ. ທ່ານ ແລະຜູ້ເຂົ້າຮ່ວມຄົນອື່ນຕ້ອງໄດ້ຮັບແຈ້ງການເປັນລາຍລັກອັກສອນກ່ຽວກັບກອງປະຊຸມໃນເວລາທີ່ພຽງພໍກ່ອນວັນທີກອງປະຊຸມເພື່ອຮັບປະກັນວ່າພວກເຂົາຈະສາມາດເຂົ້າຮ່ວມໄດ້.

**ທ່ານຕ້ອງມາຮ່ວມກອງປະຊຸມ IFSP?**
ກອງປະຊຸມ IFSP ທຳອິດ ແລະປະຈຳປີ ເຊັ່ນດຽວກັບກອງປະຊຸມເພື່ອພັດທະນາແຜນການປ່ຽນຜ່ານສຳລັບລູກຂອງທ່ານ ຕ້ອງລວມມີຜູ້ເຂົ້າຮ່ວມຕໍ່ໄປນີ້:

1. <u>**ທ່ານ!**</u> ("ພໍ່ຫຼືແມ່ ຫຼື ທັງພໍ່ແລະແມ່ຂອງເດັກ");
2. ສະມາຊິກອື່ນໃນຄອບຄົວ, ຕາມການຮ້ອງຂໍຂອງພໍ່ແມ່, ຖ້າເປັນໄປໄດ້;
3. ຜູ້ສະໜັບສະໜູນ ຫຼື ບຸກຄົນນອກຄອບຄົວ, ຖ້າພໍ່ແມ່ຮ້ອງຂໍໃຫ້ບຸກຄົນນັ້ນເຂົ້າຮ່ວມ;
4. ຜູ້ປະສານງານການບໍລິການທີ່ຮັບຜິດຊອບການຈັດຕັ້ງປະຕິບັດແຜນ IFSP;
5. ບຸກຄົນ ຫຼືບັນດາບຸກຄົນທີ່ກ່ຽວຂ້ອງໂດຍກົງໃນການເຮັດການປະເມີນຜົນຕ່າງໆຂອງລູກຂອງທ່ານ ແລະ ການປະເມີນລູກ ແລະຄອບຄົວຂອງທ່ານ; ແລະ
6. ຕາມຄວາມເໝາະສົມ, ບຸກຄົນຜູ້ທີ່ຈະໃຫ້ການບໍລິການ Early ACCESS ແກ່ລູກຂອງທ່ານ ຫຼືຄອບຄົວຂອງທ່ານ.

ຖ້າບຸກຄົນທີ່ມີຊື່ໃນຂໍ້ 5 ບໍ່ສາມາດເຂົ້າຮ່ວມໄດ້, ຜູ້ຮັບທຶນປະຈຳເຂດຈະເຮັດການຈັດກຽມເພື່ອຮັບປະກັນການມີສ່ວນຮ່ວມຂອງບຸກຄົນເຫຼົ່ານັ້ນຜ່ານຊ່ອງທາງອື່ນ ລວມທັງໜຶ່ງໃນສິ່ງຕໍ່ໄປນີ້: ເຂົ້າຮ່ວມໃນກອງປະຊຸມທາງໂທລະສັບ, ສົ່ງຕົວແທນທີ່ໄດ້ຮັບອະນຸຍາດທີ່ມີຄວາມຮູ້ມາຮ່ວມກອງປະຊຸມ, ຫຼື ເຮັດໃຫ້ການບັນທຶກທີ່ກ່ຽວຂ້ອງມີໃຫ້ແກ່ກອງປະຊຸມ.

# ພໍ່ແມ່ ແລະ ພໍ່ແມ່ຕົວແທນ

ພໍ່ແມ່ແມ່ນຄູ່ຮ່ວມງານທີ່ສໍາຄັນທີ່ສຸດໃນການບໍລິການ Early ACCESS. ມັນສໍາຄັນໃນການກໍານົດວ່າໃຜແມ່ນພໍ່ແມ່ຂອງເດັກເກີດໃໝ່ ຫຼືເດັກຮຽນຍ່າງ. ກົດໝາຍ IDEA ແລະ ກົດລະບຽບ Early ACCESS ກໍານົດນິຍາມຄວາມໝາຍຂອງ "ພໍ່ແມ່ເດັກ" ດັ່ງນີ້:

**ໃຜແມ່ນພໍ່ແມ່ເດັກ?**
"ພໍ່ແມ່ເດັກ" ໝາຍເຖິງ:

1. ພໍ່ແມ່ຄືງໆ ຫຼືພໍ່ແມ່ລ້ຽງຂອງເດັກ;
2. ພໍ່ແມ່ອຸປະຖໍາ, ເວັ້ນເສຍແຕ່ວ່າກົດໝາຍລັດ, ກົດລະບຽບ ຫຼື ພັນທະທາງສັນຍາກັບລັດ ຫຼືນິຕິບຸກຄົນທ້ອງຖິ່ນ ຫ້າມພໍ່ແມ່ອຸປະຖໍາເຮັດໜ້າທີ່ເປັນພໍ່ແມ່ເດັກ;
3. ຜູ້ປົກຄອງທີ່ໂດຍທົ່ວໄປໄດ້ຮັບອະນຸຍາດໃຫ້ເຮັດໜ້າທີ່ເປັນພໍ່ແມ່ເດັກ, ຫຼືໄດ້ຮັບອະນຸຍາດໃຫ້ເຮັດການຕັດສິນໃຈດ້ານການຊ່ວຍເຫຼືອໄລຍະຕົ້ນ, ການສຶກສາ, ສຸຂະພາບ ຫຼື ພັດທະນາການ ໃຫ້ແກ່ເດັກ (ແຕ່ບໍ່ແມ່ນລັດ ຖ້າເດັກຢູ່ພາຍໃຕ້ການອຸປະຖໍາຂອງລັດ);
4. ບຸກຄົນທີ່ເຮັດໜ້າທີ່ປ່ຽນແທນເປັນພໍ່ແມ່ແທ້ ຫຼື ພໍ່ແມ່ລ້ຽງ (ລວມທັງພໍ່ໃຫຍ່ແມ່ໃຫຍ່, ພໍ່ແມ່ນ້າ ຫຼື ຍາດພີ່ນ້ອງອື່ນ) ຜູ້ທີ່ເດັກອາໄສຢູ່ນໍາ, ຫຼືບຸກຄົນຜູ້ທີ່ຮັບຜິດຊອບຕາມກົດໝາຍສໍາລັບສະຫວັດການຂອງເດັກ; ຫຼື
5. ພໍ່ແມ່ຕົວແທນຜູ້ທີ່ໄດ້ຮັບການແຕ່ງຕັ້ງອີງຕາມກົດໝາຍລັດຖະບານກາງ ແລະ ກົດລະບຽບ Early ACCESS .

**ຈະເປັນແນວໃດ ເມື່ອມີຫຼາຍກວ່າໜຶ່ງຄົນຕອບສະໜອງໄດ້ຄໍານິຍາມເປັນພໍ່ແມ່ເດັກ?**
ກົດລະບຽບຕໍ່ໄປນີ້ຖືກໃຊ້ເພື່ອຕັດສິນກໍານົດວ່າຝ່າຍໃດໜຶ່ງມີຄຸນສົມບັດເປັນ "ພໍ່ແມ່ເດັກ" ຫຼືບໍ່.

1. ຍົກເວັ້ນຕາມກໍານົດໄວ້ໃນຂໍ້ຕໍ່ໄປ, ພໍ່ແມ່ຄືງ ຫຼືພໍ່ແມ່ລ້ຽງ ເມື່ອພະຍາຍາມເຮັດໜ້າທີ່ເປັນພໍ່ແມ່ເດັກພາຍໃຕ້ບົດນີ້ ແລະ ເມື່ອມີຫຼາຍກວ່າໜຶ່ງຝ່າຍມີຄຸນສົມບັດເຮັດໜ້າທີ່ເປັນພໍ່ແມ່ເດັກ ຕ້ອງຖືກຖືວ່າເປັນພໍ່ແມ່ເດັກ ເວັ້ນເສຍແຕ່ວ່າພໍ່ແມ່ຄືງ ຫຼືພໍ່ແມ່ລ້ຽງນັ້ນບໍ່ມີສິດອໍານາດທາງກົດໝາຍໃນການເຮັດການຕັດສິນໃຈດ້ານການບໍລິການຊ່ວຍເຫຼືອໄລຍະຕົ້ນໃຫ້ແກ່ເດັກ.
2. ຖ້າຄໍາສັ່ງ ຫຼືຄໍາຕັດສິນສານລະບຸໃຫ້ບຸກຄົນ ຫຼືບັນດາບຸກຄົນສະເພາະໃດໜຶ່ງເຮັດໜ້າທີ່ເປັນ "ພໍ່ແມ່" ຂອງເດັກ ຫຼື ເຮັດການຕັດສິນໃຈດ້ານການສຶກສາ ຫຼືການບໍລິການຊ່ວຍເຫຼືອໄລຍະຕົ້ນໃນນາມຕາງໜ້າໃຫ້ເດັກ (ຍົກເວັ້ນພໍ່ແມ່ຕົວແທນ), ຈາກນັ້ນ ບຸກຄົນ ຫຼືບັນດາບຸກຄົນນັ້ນຕ້ອງຖືກກໍານົດວ່າເປັນ "ພໍ່ແມ່ເດັກ" ເພື່ອຈຸດປະສົງຂອງພາກ C ຂອງກົດໝາຍ, ຍົກເວັ້ນ ຖ້າຜູ້ໃຫ້ບໍລິການ EIS ຫຼື ອົງການພາກລັດເປັນຜູ້ໃຫ້ການບໍລິການແດ່ເດັກ ຫຼື ສະມາຊິກຄອບຄົວຂອງເດັກນັ້ນ, ຜູ້ໃຫ້ບໍລິການ EIS ຫຼືອົງການພາກລັດນັ້ນອາດຈະບໍ່ສາມາດເຮັດໜ້າທີ່ເປັນພໍ່ແມ່ສໍາລັບເດັກນັ້ນໄດ້.

**ເປັນຫຍັງຈໍາເປັນຕ້ອງມີພໍ່ແມ່ຕົວແທນ?**
ຜູ້ຮັບທຶນປະຈໍາເຂດຈໍາເປັນຕ້ອງຕັດສິນກໍານົດໃຫ້ເດັກແຕ່ລະຄົນມີພໍ່ຫຼືແມ່ເພື່ອເຂົ້າຮ່ວມໃນຂະບວນການ Early ACCESS. ຖ້າມີສະພາບໃດໜຶ່ງຕໍ່ໄປນີ້, ຜູ້ຮັບທຶນປະຈໍາເຂດຈະຕັດສິນກໍານົດວ່າຈໍາເປັນຕ້ອງມີພໍ່ແມ່ຕົວແທນສໍາລັບເດັກຫຼືບໍ່:

1. ບໍ່ສາມາດລະບຸຕົວພໍ່ແມ່ເດັກໄດ້;
2. ໂດຍໄດ້ພະຍາຍາມຢ່າງສົມເຫດສົມຜົນແລ້ວ, ບໍ່ສາມາດຊອກຫາພໍ່ແມ່ເດັກໄດ້; ຫຼື
3. ເດັກຢູ່ໃນຄວາມອຸປະຖໍາຂອງລັດ ແລະ ຜູ້ພິພາກສາຄວບຄຸມດູແລກໍລະນີຂອງເດັກ; ຫຼື ແຕ່ງຕັ້ງພໍ່ແມ່ຕົວແທນໃດໜຶ່ງເປັນທາງເລືອກ.

ມັນແມ່ນຄວາມຮັບຜິດຊອບຂອງຜູ້ຮັບທຶນປະຈໍາເຂດໃນການຕັດສິນວ່າເດັກຄົນໃດຈໍາເປັນຕ້ອງມີພໍ່ແມ່ຕົວແທນ ແລະ ແຕ່ງຕັ້ງພໍ່ແມ່ຕົວແທນໃຫ້ແກ່ເດັກ.

**ຄຸນສົມບັດຂອງພໍ່ແມ່ຕົວແທນມີຫຍັງແດ່?**
ພໍ່ແມ່ຕົວແທນຕ້ອງ:

1. ບໍ່ມີຜົນປະໂຫຍດສ່ວນຕົວ ຫຼືທາງອາຊີບທີ່ຂັດແຍ້ງກັບຜົນປະໂຫຍດຂອງເດັກ;
2. ມີຄວາມຮູ້ ແລະທັກສະທີ່ຮັບປະກັນການເປັນຕົວແທນຢ່າງຄົບຖ້ວນໃຫ້ແກ່ເດັກ; ແລະ
3. ບໍ່ແມ່ນພະນັກງານລູກຈ້າງຂອງພະແນກສຶກສາລັດໄອໂອວາ, ຜູ້ຮັບທຶນປະຈຳເຂດ, ຫຼື ໜ່ວຍງານອື່ນທີ່ກ່ຽວຂ້ອງໃນການໃຫ້ການສຶກສາ ຫຼືການດູແລເດັກນັ້ນ.

ບຸກຄົນຜູ້ທີ່ບໍ່ດັ່ງນັ້ນກໍ່ມີຄຸນສົມບັດເປັນພໍ່ແມ່ຕົວແທນ ແມ່ນບໍ່ຖືວ່າເປັນພະນັກງານລູກຈ້າງຂອງອົງການພຽງເພາະວ່າຜູ້ກ່ຽວໄດ້ຮັບຄ່າຈ້າງຈາກອົງການເພື່ອເຮັດໜ້າທີ່ເປັນພໍ່ແມ່ຕົວແທນ.

**ໃຜເປັນຜູ້ແຕ່ງຕັ້ງພໍ່ແມ່ຕົວແທນ?**
ຜູ້ຮັບທຶນປະຈຳເຂດອາດຈະແຕ່ງຕັ້ງພໍ່ແມ່ຕົວແທນໃນແບບວິທີໃດໆກໍ່ຕາມທີ່ກົດໝາຍອະນຸຍາດ. ອີກວິທີໜຶ່ງ, ສານທີ່ຮັບຜິດຊອບຄະດີເຍົາວະຊົນຂອງເດັກຜູ້ທີ່ຢູ່ໃນ "ຄວາມອຸປະຖຳຂອງລັດ" (ຢູ່ໃນການດູແລອຸປະຖຳ, ຢູ່ໃນການຄຸ້ມຄອງດູແລຂອງໜ່ວຍງານສະຫວັດດີການສັງຄົມພາກລັດ) ອາດຈະແຕ່ງຕັ້ງພໍ່ແມ່ຕົວແທນໃຫ້ແກ່ເດັກ. ພໍ່ແມ່ຕົວແທນທີ່ສານແຕ່ງຕັ້ງຕ້ອງຕອບສະໜອງໄດ້ຄຸນສົມບັດສາມຂໍ້ທີ່ກຳນົດໄວ້ຂ້າງເທິງ.

**ຄວາມຮັບຜິດຊອບຂອງພໍ່ແມ່ຕົວແທນມີຫຍັງແດ່?**
ພໍ່ແມ່ຕົວແທນອາດຈະເປັນຕົວແທນໃຫ້ແກ່ເດັກໃນທຸກໆເລື່ອງທີ່ກ່ຽວຂ້ອງກັບການປະເມີນຜົນ ແລະການຕີລາຄາເດັກ, ການພັດທະນາ ແລະການຈັດຕັ້ງປະຕິບັດແຜນ IFSP (ລວມທັງການປະເມີນຜົນປະຈຳປີ ແລະ ການທົບທວນຄືນເປັນຊ່ວງໄລຍະ), ການສະໜອງການບໍລິການຊ່ວຍເຫຼືອໄລຍະຕົ້ນຢ່າງຕໍ່ເນື່ອງ, ແລະ ສິດທິອື່ນໆພາຍໃຕ້ໂຄງການ Early ACCESS ແລະ ກົດໝາຍ IDEA.

**ໝາຍເຫດ:**

## ທາງເລືອກສໍາລັບການແກ້ໄຂຄວາມຂັດແຍ້ງ

ມີສາມທາງເລືອກໃນກົດລະບຽບ Early ACCESS ແລະ ກົດໝາຍ IDEA ພາກ C ສໍາລັບການແກ້ໄຂຄວາມຂັດແຍ້ງ. ທາງເລືອກເຫຼົ່ານັ້ນມີຄື:

ການໄກ່ເກ່ຍ,
ການຮ້ອງຮຽນຂັ້ນລັດ, ແລະ
ການຮ້ອງຮຽນຕາມຫຼັກ due process.

ທາງເລືອກເຫຼົ່ານັ້ນຈະຖືກອະທິບາຍໃນຫົວຂໍ້ຕໍ່ໄປຂອງປື້ມຄູ່ມືນີ້.

ນອກຈາກສາມທາງເລືອກເຫຼົ່ານັ້ນ, ແຕ່ລະຜູ້ຮັບທຶນປະຈໍາເຂດຍັງມີຂະບວນການໜຶ່ງທີ່ເອີ້ນວ່າການອໍານວຍຄວາມສະດວກແກ້ໄຂຂໍ້ຂັດແຍ້ງທີ່ທ່ານສາມາດນໍາໃຊ້. ການອໍານວຍຄວາມສະດວກແກ້ໄຂຂໍ້ຂັດແຍ້ງແມ່ນວິທີໜຶ່ງໃນການແກ້ໄຂຄວາມແຕກຕ່າງ ຫຼືຂໍ້ຂັດແຍ້ງ, ແທນທີ່ຈະໃຊ້, ຫຼືກ່ອນໃຊ້ສາມຂະບວນການແກ້ໄຂທາງການທີ່ໄດ້ອະທິບາຍໄວ້ໃນປື້ມຄູ່ມືນີ້. ຜູ້ອໍານວຍຄວາມສະດວກແກ້ໄຂຂໍ້ຂັດແຍ້ງເຮັດໜ້າທີ່ຊ່ວຍແກ້ໄຂຄວາມແຕກຕ່າງກ່ຽວກັບການບໍລິການ Early ACCESS ແລະ ບັນຫາຕ່າງໆທີ່ມີລະຫວ່າງພໍ່ແມ່, ອົງການພາກລັດ ແລະຜູ້ໃຫ້ບໍລິການພາກເອກະຊົນ.

ຖ້າເກີດມີຄວາມແຕກຕ່າງ, ການໂອ້ລົມເປີດກວ້າງແມ່ນບາດກ້າວທໍາອິດທີ່ກ້າວໄປສູ່ການແກ້ໄຂຄວາມແຕກຕ່າງເຫຼົ່ານັ້ນ. ພາກສ່ວນທີສາມສາມາດໃຫ້ການທົບທວນຢ່າງບໍ່ມີອະຄະຕິກ່ຽວກັບບັນຫາກັງວົນໃຈຂອງທັງສອງຝ່າຍເພື່ອສະໜັບສະໜູນການແກ້ໄຂບັນຫາຢ່າງສໍາເລັດຜົນ. ຜູ້ອໍານວຍຄວາມສະດວກແກ້ໄຂຂໍ້ຂັດແຍ້ງໄດ້ຮັບການຝຶກອົບຮົມໃນການໄກ່ເກ່ຍ ແລະ ແມ່ນພາກສ່ວນທີສາມທີ່ເປັນກາງນັ້ນ. ຜູ້ອໍານວຍຄວາມສະດວກແກ້ໄຂຂໍ້ຂັດແຍ້ງສາມາດເປັນພາກສ່ວນທີ່ເປັນກາງຈາກເຂດ Early ACCESS ຂອງທ່ານ ຫຼື ຖ້າຈໍາເປັນ ແມ່ນບາງຄົນຈາກເຂດອື່ນ ຫຼື ບາງຄົນທີ່ຈັດຫາໃຫ້ໂດຍພະແນກສຶກສາ. ການບໍລິການຂອງຜູ້ອໍານວຍຄວາມສະດວກແກ້ໄຂບັນຫາ ຖືກສະໜອງໃຫ້ໂດຍບໍ່ມີຄ່າໃຊ້ຈ່າຍຕໍ່ກັບທ່ານ ຫຼື ຕໍ່ກັບຜູ້ໃຫ້ບໍລິການຂອງລູກຂອງທ່ານ.

ມັນບໍ່ຈໍາເປັນຕ້ອງໃຊ້ຂະບວນການຜູ້ອໍານວຍຄວາມສະດວກແກ້ໄຂຂໍ້ຂັດແຍ້ງກ່ອນການໃຊ້ສາມຂະບວນການທາງການທີ່ອະທິບາຍໄວ້ໃນປື້ມຄູ່ມືນີ້.

**ໝາຍເຫດ:**

# ການໄກ່ເກ່ຍ

ພະແນກສຶກສາລັດໄອໂອວາ ແລະ ບັນດາຜູ້ຮັບທຶນປະຈຳເຂດ ມີລະບຽບຂັ້ນຕອນເພື່ອອະນຸຍາດໃຫ້ຝ່າຍຕ່າງໆ ແກ້ໄຂຂໍ້ຂັດແຍ້ງຜ່ານການໄກ່ເກ່ຍ. ການໄກ່ເກ່ຍແມ່ນຄວາມສະໝັກໃຈຂອງທຸກພາກສ່ວນ ແລະ ຖືກດຳເນີນ ໂດຍຜູ້ໄກ່ເກ່ຍທີ່ຍຸຕິທຳ ແລະມີຄຸນສົມບັດຄົບຖ້ວນຜູ້ທີ່ຜ່ານການຝຶກອົບຮົມໃນດ້ານເຕັກນິກການໄກ່ເກ່ຍທີ່ມີປະສິດທິຜົນ. ການໄກ່ເກ່ຍສາມາດເກີດຂຶ້ນໄດ້ທຸກເວລາ, ແມ້ກະທັ້ງກ່ອນການຍື່ນການຮ້ອງຮຽນຕາມຫຼັກ due process. ການໄກ່ເກ່ຍບໍ່ຖືກໃຊ້ເພື່ອເຮັດໃຫ້ຊັກຊ້າ ຫຼືປະຕິເສດສິດທິຂອງທ່ານໃນການຍື່ນການຮ້ອງຮຽນຕາມຫຼັກ due process, ຫຼື ປະຕິເສດສິດທິອື່ນໆຂອງທ່ານພາຍໃຕ້ Early ACCESS.

ແບບຟອມຕົວຢ່າງເພື່ອຮ້ອງຂໍການໄກ່ເກ່ຍແມ່ນມີໃນໜ້າ 20 ຂອງປື້ມຄູ່ມືນີ້.

**ຂ້ອຍສາມາດຊອກຮູ້ກ່ຽວກັບຄົນທີ່ເປັນຜູ້ໄກ່ເກ່ຍໄດ້ຢູ່ໃສແລະ ໃຜເປັນຜູ້ຈ່າຍຄ່າການໄກ່ເກ່ຍ?**
ພະແນກສຶກສາລັດໄອໂອວາ:

1. ມີລາຍຊື່ຂອງບຸກຄົນທີ່ເປັນຜູ້ໄກ່ເກ່ຍທີ່ມີຄຸນສົມບັດ ແລະ ມີຄວາມຮູ້ໃນດ້ານກົດໝາຍ ແລະກົດລະບຽບທີ່ກ່ຽວຂ້ອງກັບການສະໜອງການບໍລິການ Early ACCESS;
2. ເລືອກຜູ້ໄກ່ເກ່ຍອີງໃສ່ການສຸ່ມເລືອກ, ການໝູນວຽນ ຫຼືພື້ນຖານທີ່ຍຸຕິທຳອື່ນ; ແລະ
3. ຈ່າຍຄ່າໃຊ້ຈ່າຍຂອງຂະບວນການໄກ່ເກ່ຍ ລວມທັ້ງຄ່າໃຊ້ຈ່າຍຂອງກອງປະຊຸມຕ່າງໆ ເພື່ອຊຸກຍູ້ການໄກ່ເກ່ຍເມື່ອຝ່າຍໃດໜຶ່ງເລືອກບໍ່ໃຊ້ການໄກ່ເກ່ຍ.

**ຂ້ອຍຈະຮູ້ໄດ້ແນວໃດວ່າຜູ້ໄກ່ເກ່ຍຍຸຕິທຳຫຼືບໍ່**
ບຸກຄົນທີ່ເຮັດໜ້າທີ່ເປັນຜູ້ໄກ່ເກ່ຍ:

ບໍ່ສາມາດເປັນລູກຈ້າງຂອງພະແນກສຶກສາລັດໄອໂອວາ ຫຼື ອົງການພາກລັດ ຫຼື ຜູ້ໃຫ້ບໍລິການພາກເອກະຊົນທີ່ກຳລັງສະໜອງການບໍລິການໂດຍກົງໃຫ້ແກ່ລູກຂອງທ່ານ; ແລະ
ຕ້ອງບໍ່ມີການຂັດແຍ້ງຜົນປະໂຫຍດທາງສ່ວນຕົວ ຫຼືທາງອາຊີບ;

ບຸກຄົນຜູ້ທີ່ຖ້າບໍ່ດັ່ງນັ້ນແລ້ວກໍ່ຈະມີຄຸນສົມບັດເປັນຜູ້ໄກ່ເກ່ຍ ຈະບໍ່ຖືວ່າແມ່ນພະນັກງານລູກຈ້າງຂອງພະແນກສຶກສາລັດໄອໂອວາ ພຽງເພາະວ່າຜູ້ກ່ຽວກຳລັງໄດ້ຮັບການຈ່າຍເງິນຄ່າເປັນຜູ້ໄກ່ເກ່ຍ.

**ບາງຢ່າງທີ່ຂ້ອຍຈຳເປັນຕ້ອງຮູ້ກ່ຽວກັບຂະບວນການໄກ່ເກ່ຍມີຫຍັງແດ່**

1. ການໄກ່ເກ່ຍແຕ່ລະຄັ້ງຕ້ອງຖືກຈັດຂຶ້ນຢ່າງທ່ວງທັນເວລາ ແລະ ຕ້ອງຖືກຈັດຂຶ້ນຢູ່ສະຖານທີ່ທີ່ສະດວກສະບາຍຕໍ່ກັບຝ່າຍຕ່າງໆທີ່ກ່ຽວຂ້ອງກັບການຂັດແຍ້ງ.
2. ຖ້າທ່ານ ແລະ ອົງການພາກລັດແກ້ໄຂຂໍ້ຂັດແຍ້ງຜ່ານຂະບວນການໄກ່ເກ່ຍ, ທ່ານ ແລະ ອົງການພາກລັດຕ້ອງເຮັດສັນຍາຂໍ້ຕົກລົງທີ່ມີຜົນຜູກມັດທາງກົດໝາຍ.
3. ທັງທ່ານ ແລະ ຜູ້ຕາງໜ້າອົງການພາກລັດຜູ້ທີ່ມີສິດອຳນາດຜູກມັດອົງການດັ່ງກ່າວ ຕ້ອງເຊັນຊື່ໃນສັນຍາຂໍ້ຕົກລົງທີ່ມີຜົນຜູກມັດທາງກົດໝາຍ.
4. ສັນຍາຂໍ້ຕົກລົງການໄກ່ເກ່ຍເປັນລາຍລັກອັກສອນທີ່ມີລາຍເຊັນ ສາມາດບັງຄັບໃຊ້ໄດ້ໃນທຸກສານລັດທີ່ມີສິດອຳນາດ ຫຼື ໃນສານເຂດຂອງສະຫະລັດ.
5. ການສົນທະນາທີ່ເກີດຂຶ້ນໃນລະຫວ່າງການໄກ່ເກ່ຍແມ່ນເປັນຄວາມລັບ ແລະ ອາດຈະບໍ່ຖືກໃຊ້ເປັນຫຼັກຖານໃນການໄຕ່ສວນຕາມຫຼັກ due process ຫຼືການດຳເນີນຄະດີທາງແພ່ງໃນພາຍຫຼັງຂອງສານລັດຖະບານກາງ ຫຼືສານລັດໃດໆ.

**ຈະເປັນແນວໃດຖ້າຂ້ອຍບໍ່ຕ້ອງການໃຊ້ຂະບວນການໄກ່ເກ່ຍ?**
ຜູ້ຮັບທຶນປະຈຳເຂດອາດຈະສະເໜີໃຫ້ແກ່ຜູ້ທີ່ບໍ່ໃຊ້ຂະບວນການໄກ່ເກ່ຍມີໂອກາດໄດ້ພົບປະກັບຝ່າຍທີ່ບໍ່ມີສ່ວນໄດ້ສ່ວນເສຍໃດໜຶ່ງໃນເວລາ ແລະສະຖານທີ່ທີ່ສະດວກສະບາຍຕໍ່ກັບພໍ່ແມ່.

**ຝ່າຍທີ່ບໍ່ມີສ່ວນໄດ້ສ່ວນເສຍແມ່ນໃຜ?**

1. ໜ່ວຍງານແກ້ໄຂຂໍ້ຂັດແຍ້ງທາງເລືອກທີ່ເໝາະສົມ;
2. ສູນຝຶກອົບຮົມ ແລະຂໍ້ມູນຂ່າວສານສຳລັບພໍ່ແມ່ຜູ້ປົກຄອງລັດໄອໂອວາ (ໃນລັດໄອໂອວາ, ນີ້ແມ່ນສູນ Access for Special Kids (ASK) Resource Center); ຫຼື
3. ສູນຊັບພະຍາກອນສຳລັບພໍ່ແມ່ແລະຊຸມຊົນ.

**ຝ່າຍທີ່ບໍ່ມີສ່ວນໄດ້ສ່ວນເສຍຈະເຮັດຫຍັງ?**

ຝ່າຍທີ່ບໍ່ມີສ່ວນໄດ້ສ່ວນເສຍຈະອະທິບາຍຜົນປະໂຫຍດຂອງຂະບວນການໄກ່ເກ່ຍ ແລະ ສົ່ງເສີມໃຫ້ທ່ານໃຊ້ຂະບວນການໄກ່ເກ່ຍ.

**ໃນຂະນະທີ່ຄຳຮ້ອງຂໍການໄກ່ເກ່ຍຂອງຂ້ອຍຍັງບໍ່ທັນໄດ້ຕັດສິນເທື່ອ, ລູກຂອງຂ້ອຍໄດ້ຮັບການບໍລິການຫຍັງແດ່?**

ໃນຂະນະທີ່ຄຳຮ້ອງການໄກ່ເກ່ຍຍັງບໍ່ທັນໄດ້ຕັດສິນເທື່ອ ແລະ ເປັນເວລາສິບວັນຫຼັງຈາກກອງປະຊຸມໄກ່ເກ່ຍເຊິ່ງບໍ່ສາມາດບັນລຸໄດ້ຂໍ້ຕົກລົງໃດໆ, ເວັ້ນເສຍແຕ່ວ່າອົງການ ແລະ ພໍ່ແມ່ຂອງເດັກຕົກລົງເຫັນດີເປັນຢ່າງອື່ນ, ເດັກທີ່ກ່ຽວຂ້ອງໃນກອງປະຊຸມໄກ່ເກ່ຍດັ່ງກ່າວຕ້ອງສືບຕໍ່ໄດ້ຮັບການບໍລິການຊ່ວຍເຫຼືອໄລຍະຕົ້ນທີ່ເໝາະສົມທີ່ລະບຸໄວ້ໃນແຜນ IFSP ໃນສະຖານທີ່ທີ່ໄດ້ຮັບການຍິນຍອມເຫັນດີຈາກພໍ່ແມ່ເດັກ.

ຖ້າການໄກ່ເກ່ຍກ່ຽວຂ້ອງການການຮ້ອງຂໍເອົາການບໍລິການຄັ້ງທຳອິດພາຍໃຕ້ Early ACCESS, ເດັກຕ້ອງໄດ້ຮັບການບໍລິການເຫຼົ່ານັ້ນທີ່ບໍ່ຢູ່ໃນຄວາມຂັດແຍ້ງ.

**ໝາຍ:**

# ການຮ້ອງຮຽນຂັ້ນລັດຕາມກົດໝາຍ IDEA

ກົດໝາຍກຳນົດໃຫ້ພະແນກສຶກສາລັດໄອໂອວາມີລະບຽບຂັ້ນຕອນໃນການສືບສວນການຮ້ອງຮຽນວ່າອົງການໃດໜຶ່ງໄດ້ລະເມີດພາກ C ຂອງກົດໝາຍ IDEA ຫຼື ກົດລະບຽບ Early ACCESS ຂອງລັດໄອໂອວາ. ແບບຟອມຕົວຢ່າງເພື່ອຍື່ນການຮ້ອງຮຽນຂັ້ນລັດ ແມ່ນມີໃນໜ້າ 22 ຂອງປຶ້ມຄູ່ມືນີ້.

**ພະແນກສຶກສາລັດໄອໂອວາມີລະບຽບຂັ້ນຕອນໃນການຍື່ນການຮ້ອງຮຽນຂັ້ນລັດພາຍໃຕ້ Early ACCESS ບໍ່?**

ພະແນກສຶກສາລັດໄອໂອວາມີລະບຽບຂັ້ນຕອນເປັນລາຍລັກອັກສອນສຳລັບ:

1. ແກ້ໄຂການຮ້ອງຮຽນ, ລວມທັງການຮ້ອງຮຽນທີ່ຍື່ນໂດຍອົງການຈັດຕັ້ງ ຫຼືບຸກຄົນຈາກລັດອື່ນ, ໂດຍການກຳນົດການຍື່ນການຮ້ອງຮຽນນຳພະແນກສຶກສາລັດໄອໂອວາ, ແລະ
2. ເຜີຍແຜ່ລະບຽບຂັ້ນຕອນຂອງລັດຢ່າງກວ້າງຂວາງໃຫ້ແກ່ພໍ່ແມ່ ແລະ ບຸກຄົນອື່ນທີ່ສົນໃຈ ລວມທັງສູນຝຶກອົບຮົມ ແລະຂໍ້ມູນຂ່າວສານສຳລັບພໍ່ແມ່, ໜ່ວຍງານປົກປ້ອງ ແລະສະໜັບສະໜູນ, ສູນສົ່ງເສີມການດຳເນີນຊີວິດດ້ວຍຕົນເອງ, ແລະ ໜ່ວຍງານອື່ນທີ່ເໝາະສົມ.

**ພະແນກສຶກສາລັດໄອໂອວາຈະເຮັດແນວໃດ ຖ້າພະແນກພົບເຫັນການລົ້ມເຫຼວໃນການສະໜອງການບໍລິການ Early ACCESS ທີ່ເໝາະສົມ?**

ໃນການແກ້ໄຂການຮ້ອງຮຽນທີ່ພະແນກສຶກສາລັດໄອໂອວາໄດ້ພົບເຫັນການລົ້ມເຫຼວໃນການສະໜອງການບໍລິການທີ່ເໝາະສົມ, ທາງລັດຕ້ອງແກ້ໄຂ:

1. ການລົ້ມເຫຼວໃນການສະໜອງການບໍລິການທີ່ເໝາະສົມ ລວມທັງການດຳເນີນການແກ້ໄຂທີ່ເໝາະສົມເພື່ອແກ້ໄຂຄວາມຈຳເປັນຂອງເດັກ, ແລະ
2. ສະໜອງການບໍລິການທີ່ເໝາະສົມໃນອະນາຄົດສຳລັບເດັກທຸກຄົນທີ່ພິການ.

**ລະບຽບຂັ້ນຕອນການຮ້ອງຮຽນຂັ້ນລັດຂອງພະແນກສຶກສາລັດໄອໂອວາລວມມີຫຍັງແດ່?**

ໃນລະບຽບຂັ້ນຕອນການຮ້ອງຮຽນ, ພະແນກສຶກສາລັດໄອໂອວາມີກຳນົດເວລາ 60 ວັນຕາມເວລາປະຕິທິນ ຫຼັງຈາກການຮ້ອງຮຽນໄດ້ຖືກຍື່ນເພື່ອ:

1. ດຳເນີນການສືບສວນກັບສະຖານທີ່ຢ່າງເປັນອິດສະຫຼະ ຖ້າພະແນກສຶກສາຕັດສິນກຳນົດວ່າຈຳເປັນຕ້ອງມີການສືບສວນ;
2. ໃຫ້ຜູ້ຮ້ອງຮຽນມີໂອກາດໃນການສົ່ງຂໍ້ມູນເພີ່ມເຕີມ, ບໍ່ວ່າຈະທາງປາກເປົ່າ ຫຼືເປັນລາຍລັກອັກສອນ, ກ່ຽວກັບຂໍ້ກ່າວຫາໃນການຮ້ອງຮຽນ;
3. ໃຫ້ໂອກາດແກ່ອົງການພາກລັດເພື່ອຕອບຄືນຕໍ່ກັບການຮ້ອງຮຽນນັ້ນ ລວມທັງ ຢ່າງນ້ອຍ:
    a. ຕາມການຕັດສິນໃຈຂອງອົງການພາກລັດ, ການສະເໜີແກ້ໄຂການຮ້ອງຮຽນ ແລະ
    b. ໂດຍມີການຍິນຍອມເຫັນດີຈາກພໍ່ແມ່, ໂອກາດສຳລັບອົງການພາກລັດໃນການສົ່ງເສີມໃຫ້ພໍ່ແມ່ເຂົ້າຮ່ວມໃນການໄກ່ເກ່ຍ, ຫຼື ວິທີການແກ້ໄຂຂໍ້ຂັດແຍ້ງທາງເລືອກອື່ນ;
4. ກວດເບິ່ງທຸກຂໍ້ມູນທີ່ກ່ຽວຂ້ອງ ແລະ ເຮັດການຕັດສິນກຳນົດຢ່າງເປັນອິດສະຫຼະກ່ຽວກັບວ່າອົງການພາກລັດກຳລັງລະເມີດຂໍ້ກຳນົດໃດໜຶ່ງຂອງກົດໝາຍ IDEA ຫຼືບໍ່; ແລະ
5. ອອກຄຳຕັດສິນເປັນລາຍລັກອັກສອນຕໍ່ກັບຜູ້ຮ້ອງຮຽນເຊິ່ງແກ້ໄຂແຕ່ລະຂໍ້ກ່າວຫາໃນການຮ້ອງຮຽນ ແລະປະກອບມີ:
    a. ຜົນການສືບສວນຂໍ້ເທັດຈິງ ແລະ ຂໍ້ສະຫຼຸບ, ແລະ
    b. ເຫດຜົນຂອງຄຳຕັດສິນສຸດທ້າຍຂອງພະແນກສຶກສາລັດໄອໂອວາ.

**ອະນຸຍາດໃຫ້ມີການຂະຫຍາຍເວລາເກີນ 60 ວັນໄດ້ບໍ່?**
ລະບຽບຂັ້ນຕອນຂອງພະແນກສຶກສາລັດໄອໂອວາອະນຸຍາດໃຫ້ມີການຂະຫຍາຍກຳນົດເວລາພຽງແຕ່ຖ້າ:
1. ມີສະພາບການພິເສດກ່ຽວກັບຜູ້ຮ້ອງຮຽນສະເພາະ, ຫຼື
2. ພໍ່ແມ່ ແລະອົງການພາກລັດຕົກລົງເຫັນດີຂະຫຍາຍກຳນົດເວລາເພື່ອດຳເນີນກິດຈະກຳຕ່າງໆ.

**ຄຳຕັດສິນການຮ້ອງຮຽນຖືກຈັດຕັ້ງປະຕິບັດແນວໃດ?**
ລະບຽບຂັ້ນຕອນຂອງພະແນກສຶກສາລັດໄອໂອວາກຳນົດບາດກ້າວຕ່າງໆເພື່ອຈັດຕັ້ງປະຕິບັດຄຳຕັດສິນສຸດທ້າຍຂອງຕົນຢ່າງມີປະສິທິຜົນ, ຖ້າຈຳເປັນ, ເຊິ່ງລວມມີ:
1. ກິດຈະກຳຊ່ວຍເຫຼືອດ້ານວິຊາການ;
2. ການເຈລະຈາຕໍ່ລອງ; ແລະ
3. ການດຳເນີນການແກ້ໄຂເພື່ອບັນລຸການປະຕິບັດຕາມ.

**ໃຜແດ່ສາມາດຍື່ນການຮ້ອງຮຽນ ແລະ ຍື່ນແນວໃດ?**
ອົງການຈັດຕັ້ງ ຫຼືບຸກຄົນສາມາດຍື່ນການຮ້ອງຮຽນເປັນລາຍລັກອັກສອນທີ່ເຊັນຊື່. ການຮ້ອງຮຽນຕ້ອງລວມມີຄຳຖະແຫຼງທີ່ລະບຸວ່າອົງການພາກລັດໄດ້ລະເມີດຂໍ້ກຳນົດຂອງພາກ C ຂອງກົດໝາຍ IDEA. ການຮ້ອງຮຽນຍັງຕ້ອງລວມມີ:
1. ຂໍ້ເທັດຈິງທີ່ຄຳຖະແຫຼງກ່າວໃຊ້ເປັນພື້ນຖານອີງໃສ່;
2. ລາຍເຊັນ ແລະ ຂໍ້ມູນຕິດຕໍ່ສຳລັບຜູ້ຮ້ອງຮຽນ; ແລະ
3. ການຮ້ອງຮຽນຕ້ອງກ່າວຫາການລະເມີດທີ່ເກີດຂຶ້ນບໍ່ເກີນໜຶ່ງປີກ່ອນວັນທີທີ່ການຮ້ອງຮຽນໄດ້ຮັບ.

ຖ້າການຮ້ອງຮຽນກ່າວຫາການລະເມີດທີ່ໄດ້ເກີດຂຶ້ນກ່ຽວກັບເດັກສະເພາະ, ການຮ້ອງຮຽນຕ້ອງລວມມີ:
1. ຊື່ ແລະທີ່ຢູ່ຂອງເດັກ;
2. ຊື່ຂອງຜູ້ຮັບທຶນປະຈຳເຂດ/ອົງການ/ໂຄງການ ທີ່ຮັບຜິດຊອບການບໍລິການຂອງເດັກ;
3. ໃນກໍລະນີຂອງເດັກຂາດທີ່ຢູ່ອາໄສ (ພາຍໃນຄວາມໝາຍຂອງຂໍ້ 725(2) ຂອງກົດໝາຍວ່າດ້ວຍການຊ່ວຍເຫຼືອຄົນຂາດທີ່ຢູ່ອາໄສ McKinney-Vento Homeless Assistance Act (42 U.S.C. §11434a(2)), ຂໍ້ມູນຕິດຕໍ່ທີ່ມີໃຫ້ສຳລັບເດັກ, ແລະ ຊື່ຂອງຜູ້ຮັບທຶນປະຈຳເຂດ/ອົງການ/ໂຄງການທີ່ຮັບຜິດຊອບການບໍລິການຂອງເດັກ;
4. ລາຍລະອຽດຂອງລັກສະນະບັນຫາຂອງເດັກ ລວມທັງຂໍ້ເທັດຈິງກ່ຽວກັບບັນຫາ; ແລະ
5. ການແກ້ໄຂບັນຫາທີ່ສະເໜີມາໃນຂອບເຂດທີ່ຮູ້ໄດ້ ແລະມີໃຫ້ຕໍ່ກັບຝ່າຍນັ້ນໃນເວລາທີ່ມີການຍື່ນການຮ້ອງຮຽນ.

ຝ່າຍທີ່ຍື່ນການຮ້ອງຮຽນຕ້ອງສົ່ງນຳເສົາຂອງຄຳຮ້ອງຮຽນຫາຜູ້ຮັບທຶນປະຈຳເຂດທີ່ໃຫ້ບໍລິການແກ່ເດັກໃນເວລາດຽວກັນກັບທີ່ຝ່າຍດັ່ງກ່າວຍື່ນການຮ້ອງຮຽນນຳພະແນກສຶກສາລັດໄອໂອວາ.

## ການຮ້ອງຮຽນຕາມຫຼັກ DUE PROCESS (ການໄຕ່ສວນຕາມຫຼັກ DUE PROCESS)

ໃນທຸກຄັ້ງທີ່ມີການຍື່ນຄຳຮ້ອງຂໍການໄຕ່ສວນຕາມຫຼັກ due process, ທ່ານ ຫຼືຜູ້ຮັບທຶນປະຈຳເຂດທີ່ກ່ຽວຂ້ອງໃນຂໍ້ຂັດແຍ້ງ ຕ້ອງມີໂອກາດສຳລັບການໄຕ່ສວນຍຸຕິທຳຕາມຫຼັກ due process. ແບບຟອມຕົວຢ່າງເພື່ອຍື່ນການຮ້ອງຮຽນຕາມຫຼັກ due process ແລະ ຮ້ອງຂໍການໄຕ່ສວນ ແມ່ນມີໃນໜ້າ 24 ຂອງປຶ້ມຄູ່ມືນີ້.

**ໃຜຮັບຜິດຊອບສຳລັບການດຳເນີນການໄຕ່ສວນຕາມຫຼັກ due process?**
ພະແນກສຶກສາລັດໄອໂອວາເປັນຜູ້ຮັບຜິດຊອບສຳລັບການຈັດຫາການໄຕ່ສວນດັ່ງກ່າວ.

**ໃຜເປັນຜູ້ຮັບຟັງຂໍ້ມູນຕ່າງໆ ແລະເຮັດການຕັດສິນຢູ່ໃນການໄຕ່ສວນຕາມຫຼັກ due process?**
ບຸກຄົນທີ່ມີຕຳແໜ່ງເປັນຜູ້ພິພາກສາກົດໝາຍປົກຄອງ (ALJ) ເປັນຜູ້ຮັບຟັງແລະພິຈາລະນາຫຼັກຖານ ແລະຂໍ້ໂຕ້ແຍ້ງທາງກົດໝາຍຢູ່ໃນການໄຕ່ສວນຕາມຫຼັກ due process. ຈາກນັ້ນ ຜູ້ພາກສາ ALJ ເຮັດການຕັດສິນ. ພະແນກສຶກສາລັດໄອໂອວາມີລາຍຊື່ຂອງບຸກຄົນທີ່ເຮັດໜ້າທີ່ເປັນຜູ້ພາກສາ ALJ. ລາຍຊື່ດັ່ງກ່າວຕ້ອງລວມມີຄຳປະກາດກ່ຽວກັບຄຸນວຸດທິຂອງແຕ່ລະຄົນຂອງບຸກຄົນເຫຼົ່ານັ້ນ.

**ຄຸນວຸດທິຂອງຜູ້ພິພາກສາຍຸຕິທຳ ALJ ມີຫຍັງແດ່?**
ຢ່າງນ້ອຍ, ຜູ້ພິພາກສາ ALJ ຕ້ອງບໍ່ເປັນ:

1. ພະນັກງານລູກຈ້າງຂອງພະແນກສຶກສາລັດໄອໂອວາ, ອົງການ AEA ຫຼື ເຂດການສຶກສາທີ່ກ່ຽວຂ້ອງກັບການໃຫ້ການສຶກສາ ຫຼືການດູແລຂອງເດັກ; ຫຼື
2. ບຸກຄົນທີ່ມີຜົນປະໂຫຍດສ່ວນຕົວ ຫຼືທາງອາຊີບທີ່ຂັດແຍ້ງກັບຄວາມຊື່ສັດທ່ຽງທຳຂອງບຸກຄົນດັ່ງກ່າວໃນການໄຕ່ສວນ.

ຜູ້ພິພາກສາ ALJ:

1. ຕ້ອງມີຄວາມຮູ້, ຄວາມສາມາດໃນການເຂົ້າໃຈ, ບົດບັນຍັດ ແລະຂໍ້ກຳນົດຂອງກົດໝາຍ IDEA 2004, ກົດລະບຽບລັດຖະບານກາງ ແລະຂອງລັດທີ່ກ່ຽວຂ້ອງກັບກົດໝາຍ IDEA, ແລະການຕີຄວາມໝາຍຂອງກົດໝາຍ IDEA ໂດຍສານລັດຖະບານກາງ ແລະສານລັດ;
2. ຕ້ອງມີຄວາມຮູ້ ແລະຄວາມສາມາດໃນການດຳເນີນການໄຕ່ສວນ ອີງຕາມວິທີປະຕິບັດທາງກົດໝາຍທີ່ເປັນມາດຕະຖານ ແລະ ເໝາະສົມ; ແລະ
3. ຕ້ອງມີຄວາມຮູ້ ແລະຄວາມສາມາດໃນການອອກ ແລະຂຽນຄຳຕັດສິນ ອີງຕາມວິທີປະຕິບັດທາງກົດໝາຍທີ່ເປັນມາດຕະຖານ ແລະເໝາະສົມ.

ບຸກຄົນຜູ້ທີ່ຖ້າບໍ່ດັ່ງນັ້ນຈະມີຄຸນສົມບັດໄດ້ດຳເນີນການໄຕ່ສວນ ຈະບໍ່ຖືວ່າເປັນພະນັກງານລູກຈ້າງຂອງອົງການນັ້ນພຽງເພາະວ່າຜູ້ກ່ຽວໄດ້ຮັບຄ່າຈ້າງຈາກອົງການນັ້ນເພື່ອເຮັດໜ້າທີ່ເປັນຜູ້ພິພາກສາ ALJ.

**ໃນລະຫວ່າງນັ້ນ, ລູກຂອງຂ້ອຍໄດ້ຮັບການບໍລິການຫຍັງແດ່?**
ໃນລະຫວ່າງດຳເນີນຄະດີທາງການປົກຄອງ ແລະທາງສານ, ເດັກຕ້ອງສືບຕໍ່ໄດ້ຮັບການບໍລິການຊ່ວຍເຫຼືອໄລຍະຕົ້ນທີ່ເໝາະສົມຢູ່ໃນສະຖານທີ່ທີ່ລະບຸໄວ້ໃນແຜນ IFSP ທີ່ໄດ້ຮັບການຍິນຍອມເຫັນດີຈາກພໍ່ແມ່. ຖ້າການຮ້ອງຮຽນຕາມຫຼັກ due process ກ່ຽວຂ້ອງກັບການຮ້ອງຂໍເອົາການບໍລິການຄັ້ງທຳອິດພາຍໃຕ້ Early ACCESS, ເດັກຕ້ອງໄດ້ຮັບການບໍລິການເຫຼົ່ານັ້ນທີ່ບໍ່ຢູ່ໃນການຂັດແຍ້ງກັນ.

**ສິດທິຂອງຂ້ອຍໃນການໄຕ່ສວນຕາມຫຼັກ due process ພາຍໃຕ້ກົດໝາຍມີຫຍັງແດ່?**
ທ່ານມີສິດໃນການ:

1. ມີປຶກສາ ແລະບຸກຄົນທີ່ມີຄວາມຮູ້ ຫຼືຜ່ານການຝຶກອົບຮົມພິເສດກ່ຽວກັບບັນຫາຂອງເດັກພິການເຂົ້າຮ່ວມນໍາ ແລະໃຫ້ຄໍາປຶກສາແນະນໍາ;
2. ສະແດງຫຼັກຖານ ແລະ ຊັກຖາມ, ຊັກຟອກພະຍານ, ແລະ ບັງຄັບການເຂົ້າຮ່ວມຂອງພະຍານ;
3. ຫ້າມການນໍາສະເໜີຫຼັກຖານຢູ່ໃນການໄຕ່ສວນທີ່ບໍ່ໄດ້ຖືກເປີດເຜີຍຕໍ່ກັບຝ່າຍນັ້ນຢ່າງນ້ອຍຫ້າວັນລັດຖະການກ່ອນການໄຕ່ສວນ;
4. ໄດ້ຮັບບັນທຶກຂອງການໄຕ່ສວນເປັນລາຍລັກອັກສອນເປັນແບບອີເລັກໂທຣນິກ ຫຼືຕາມການເລືອກຂອງພໍ່ແມ່; ແລະ
5. ໄດ້ຮັບຜົນການສືບສວນຂໍ້ເທັດຈິງ ແລະຄໍາຕັດສິນເປັນລາຍລັກອັກສອນເປັນແບບອີເລັກໂທຣນິກ ຫຼືຕາມການເລືອກຂອງພໍ່ແມ່.

ຈົ່ງຮັບຊາບວ່າຕາມກົດໝາຍແລ້ວ, ອົງການພາກລັດມີສິດທິເຫຼົ່ານີ້ເຊັ່ນກັນ.

**ການໄຕ່ສວນຕາມຫຼັກ due process ຈະເກີດຂຶ້ນຢູ່ໃສ?**
ການໄຕ່ສວນຕາມຫຼັກ due process ຕ້ອງຖືກດໍາເນີນໃນເວລາ ແລະ ຢູ່ສະຖານທີ່ທີ່ສະດວກສະບາຍຢ່າງສົມເຫດສົມຜົນຕໍ່ກັບພໍ່ແມ່ເດັກ.

**ກໍານົດເວລາສໍາລັບການໄຕ່ສວນຕາມຫຼັກ due process ເປັນແນວໃດ?**
ຢ່າງຊ້າບໍ່ໃຫ້ກາຍ 30 ວັນ ພະແນກສຶກສາລັດໄອໂອວາຕ້ອງຮັບປະກັນ:

1. ບັນລຸໄດ້ຄໍາຕັດສິນສຸດທ້າຍໃນການໄຕ່ສວນ; ແລະ
2. ສົ່ງສໍາເນົາຂອງຄໍາຕັດສິນຫາພໍ່ແມ່ແຕ່ລະຄົນທາງໄປສະນີ.

ຜູ້ພິພາກສາ ALJ ອາດຈະຂະຫຍາຍກໍານົດເວລາສາມສິບວັນອອກໄປຕາມການຮ້ອງຂໍຂອງຝ່າຍໃດໜຶ່ງ.

**ມີກໍານົດເວລາທີ່ຈໍາເປັນຕ້ອງປະຕິບັດຕາມສໍາລັບການຮ້ອງຂໍການໄຕ່ສວນຕາມຫຼັກ due process ບໍ່?**
ທ່ານ ຫຼື ຜູ້ຮັບທຶນປະຈໍາເຂດຕ້ອງຮ້ອງຂໍການໄຕ່ສວນຍຸຕິທໍາພາຍໃນສອງປີນັບຈາກວັນທີທີ່ທ່ານ ຫຼືຜູ້ຮັບທຶນປະຈໍາເຂດໄດ້ຮັບຮູ້ ຫຼືຄວນໄດ້ຮັບຮູ້ກ່ຽວກັບການກະທໍາທີ່ຖືກກ່າວຫາທີ່ປະກອບເປັນພື້ນຖານຂອງການຮ້ອງຂໍການໄຕ່ສວນຕາມຫຼັກ due process.

**ມີຂໍ້ຍົກເວັ້ນຕໍ່ກັບກົດລະບຽບດ້ານກໍານົດເວລານັ້ນບໍ່?**
ກໍານົດເວລາຈະບໍ່ຖືກໃຊ້ ຖ້າທ່ານຖືກຂັດຂວາງຈາກການຍື່ນການຮ້ອງຂໍການໄຕ່ສວນຕາມຫຼັກ due process ເນື່ອງຈາກ:

1. ການບິດເບືອນຄວາມຈິງສະເພາະໂດຍຜູ້ຮັບທຶນປະຈໍາເຂດວ່າມັນໄດ້ແກ້ໄຂບັນຫາທີ່ປະກອບເປັນພື້ນຖານຂອງການຮ້ອງຂໍການໄຕ່ສວນຕາມຫຼັກ due process.
2. ຜູ້ຮັບທຶນປະຈໍາເຂດບໍ່ຍອມເອົາຂໍ້ມູນໃຫ້ທ່ານເຊິ່ງຂໍ້ມູນດັ່ງກ່າວຖືກກໍານົດໃຫ້ສະໜອງໃຫ້ແກ່ທ່ານ.

**ຂ້ອຍຖືກຈໍາກັດຈາກການຍື່ນຄໍາຮ້ອງຂໍການໄຕ່ສວນຕາມຫຼັກ due process ອື່ນບໍ່?**
ບໍ່ມີຫຍັງຫ້າມທ່ານຈາກການຍື່ນຄໍາຮ້ອງຂໍການໄຕ່ສວນຕາມຫຼັກ due process ອື່ນແຍກຕ່າງຫາກຕໍ່ກັບບັນຫາອື່ນທີ່ແຍກຈາກການຮ້ອງຂໍການໄຕ່ສວນ due process ທີ່ໄດ້ຍື່ນແລ້ວ.

**ຄໍາຕັດສິນຂອງຜູ້ພິພາກສາ ALJ ເປັນຄໍາຕັດສິນສຸດທ້າຍແມ່ນບໍ່?**
ຄໍາຕັດສິນທີ່ເຮັດໃນການໄຕ່ສວນແມ່ນຄໍາຕັດສິນສຸດທ້າຍ, ຍົກເວັ້ນວ່າຝ່າຍໃດໜຶ່ງທີ່ກ່ຽວຂ້ອງໃນການໄຕ່ສວນອາດຈະອຸທອນຄໍາຕັດສິນດັ່ງກ່າວ.

**ຖ້າຂ້ອຍບໍ່ພໍໃຈນຳຄຳຕັດສິນຂອງຂອງຜູ້ພິພາກສາ ALJ, ຂ້ອຍສາມາດເຮັດຫຍັງໄດ້ແດ່?**
ທຸກຝ່າຍມີສິດຍື່ນການຮ້ອງຟ້ອງຄະດີແພ່ງກ່ຽວກັບຄຳຕັດສິນຂອງການໄຕ່ສວນຕາມຫຼັກ due process. ການດຳເນີນຄະດີດັ່ງກ່າວອາດຈະຍື່ນຕໍ່ສານສານລັດໃດໆກໍ່ຕາມທີ່ມີສິດອຳນາດຕັດສິນ ຫຼື ສານເຂດຂອງສະຫະລັດ, ໂດຍບໍ່ສົນເລື່ອງຈຳນວນເງິນທີ່ຢູ່ໃນຄວາມຂັດແຍ້ງ.

**ມີກຳນົດເວລາສຳລັບການຍື່ນການຍື່ນຮ້ອງຟ້ອງຄະດີແພ່ງກ່ຽວກັບຄຳຕັດສິນຂອງຜູ້ພິພາກສາ ALJ ບໍ່?**
ຖ້າທ່ານບໍ່ເຫັນດີນຳຄຳຕັດສິນຂອງຜູ້ພິພາກສາ ALJ, ທ່ານມີເວລາ 90 ວັນຕາມເວລາປະຕິທິນນັບຈາກວັນທີທີ່ອອກຄຳຕັດສິນນັ້ນເພື່ອຍື່ນການຮ້ອງຟ້ອງຄະດີແພ່ງ.

**ມີໃຜອື່ນອີກທີ່ຮູ້ກ່ຽວກັບຄຳຕັດສິນຂອງການໄຕ່ສວນຕາມຫຼັກ due process?**
ພະແນກສຶກສາລັດໄອໂອວາ, ຫຼັງຈາກລຶບຂໍ້ມູນລະບຸຕົວຕົນສ່ວນບຸກຄົນແລ້ວ, ຕ້ອງ:

1. ຜົນການສືບສວນ ແລະ ຄຳຕັດສິນທາສະພາບໍລິຫານ Early ACCESS ລັດໄອໂອວາ; ແລະ
2. ເປີດເຜີຍຜົນການສືບສວນ ແລະ ຄຳຕັດສິນຕໍ່ກັບສາທາລະນະ.

**ໝາຍເຫດ:**

## ແບບຟອມຕົວຢ່າງ: ການຮ້ອງຂໍກອງປະຊຸມໄກ່ເກ່ຍ

ໃຊ້ແບບຟອມນີ້ຖ້າທ່ານຕ້ອງການຮ້ອງຂໍກອງປະຊຸມໄກ່ເກ່ຍ. ມີການອະທິບາຍຂະບວນການນີ້ຢູ່ໜ້າ 13 ແລະ 14 ຂອງ *ປຶ້ມຄູ່ມືລະບຽບການປົກປ້ອງຄຸ້ມຄອງ Early ACCESS ສໍາລັບພໍ່ແມ່ຜູ້ປົກຄອງ (ສິດທິຂອງພໍ່ແມ່ໃນການຊ່ວຍເຫຼືອໄລຍະຕົ້ນ).* ຫຼັງຈາກທີ່ທ່ານປະກອບແບບຟອມນີ້ແລ້ວ, ໃຫ້ສົ່ງສຳເນົາຫາ:
(1) ອົງການ AEA ທີ່ກ່ຽວຂ້ອງ, ແລະ
(2) ພະແນກສຶກສາລັດໄອໂອວາ, Grimes State Office Building, 400 E. 14th St., Des Moines, IA 50319-0146.
ປະກອບແບບຟອມນີ້ໃຫ້ຄົບຖ້ວນ. ໃຊ້ໜ້າເຈ້ຍເພີ່ມເຕີມ ຖ້າຈຳເປັນ.

ວັນທີ:_________________ ຂ້າພະເຈົ້າຕ້ອງການຮ້ອງຂໍກອງປະຊຸມໄກ່ເກ່ຍບັນຫາ Early ACCESS ກ່ຽວກັບລູກຂອງຂ້ອຍ.

ຊື່ເດັກ:______________________ ວັນເດືອນປີເກີດຂອງເດັກ:______________________
ລູກຂອງທ່ານໃຊ້ຊື່ອື່ນອີກແມ່ນບໍ່? ___ແມ່ນ/ບໍ່___ ຖ້າແມ່ນ, ຊື່ຫຍັງ?______________________
ທີ່ຢູ່ຂອງເດັກ:______________________
ເມືອງ: ລັດ: ລະຫັດໄປສະນີ:
ເດັກເປັນ "ຜູ້ຂາດທີ່ຢູ່ອາໄສ"ແມ່ນບໍ່? ___ແມ່ນ/ບໍ່___ ຖ້າແມ່ນ, ສະໜອງຂໍ້ມູນຕິດຕໍ່ສໍາລັບເດັກ.______________________

ອົງການ AEA ບ່ອນທີ່ເດັກອາໄສຢູ່:______________________
ທີ່ຢູ່:______________________
ເມືອງ:______________ ລັດ:______________ ລະຫັດໄປສະນີ:______________
ອົງການ AEA ບ່ອນທີ່ເດັກເຂົ້າຮຽນ:______________________
ທີ່ຢູ່:______________________
ເມືອງ:______________ ລັດ:______________ ລະຫັດໄປສະນີ:______________

ຊື່ຂອງຂ້າພະເຈົ້າ:______________________
ທີ່ຢູ່ຂອງຂ້າພະເຈົ້າ:______________________
ເມືອງ:______________ ລັດ:______________ ລະຫັດໄປສະນີ:______________
ໂທລະສັບ:______________ ອີເມວ (ຖ້າມີ):______________
ຊື່ພໍ່ແມ່ຄົນອື່ນ:______________________
ທີ່ຢູ່:______________________
ເມືອງ:______________ ລັດ:______________ ລະຫັດໄປສະນີ:______________
ໂທລະສັບ:______________ ອີເມວ (ຖ້າມີ):______________

ລັກສະນະຂອງບັນຫາ:

ຂໍ້ເທັດຈິງຂອງກໍລະນີທີ່ກ່ຽວຂ້ອງກັບບັນຫາ:

ການແກ້ໄຂບັນຫາທີ່ທ່ານສະເໜີມາ:

ແບບຟອມນີ້ຖືກເຮັດສຳເລັດໂດຍຜູ້ອື່ນທີ່ບໍ່ແມ່ນພໍ່ແມ່ເດັກແມ່ນບໍ່? ___ແມ່ນ/ບໍ່ແມ່ນ___ ຖ້າແມ່ນ, ກະລຸນາ ບອກຊື່ຂອງທ່ານ, ຂໍ້ມູນຕິດຕໍ່ຂອງທ່ານ ແລະ ຄວາມສຳພັນຕໍ່ກັບພໍ່ແມ່ເດັກ:______________________

______________________

ມີຄົນອື່ນທີ່ບໍ່ມີຊື່ໃນແບບຟອມນີ້ຜູ້ທີ່ແມ່ນພໍ່ແມ່ ຫຼືຜູ້ປົກຄອງຂອງເດັກແມ່ນບໍ່? ___ແມ່ນ/ບໍ່ແມ່ນ___ ຖ້າແມ່ນ, ກະລຸນາ ບອກຊື່ຂອງບຸກຄົນນັ້ນ, ຂໍ້ມູນຕິດຕໍ່, ແລະ ຄວາມສຳພັນຕໍ່ກັບເດັກ:______________

ໜ້ານີ້ເຈດຕະນາປະໃຫ້ເປົ່າຫວ່າງ

## ແບບຟອມຕົວຢ່າງ: ການຮ້ອງຮຽນຂັ້ນລັດຕາມກົດໝາຍ IDEA

ໃຊ້ແບບຟອມນີ້ຖ້າທ່ານຕ້ອງການຮ້ອງຂໍກອງປະຊຸມໄກ່ເກ່ຍ. ມີການອະທິບາຍຂະບວນການນີ້ຢູ່ໜ້າ 15 ແລະ 16 ຂອງ *ປື້ມຄູ່ມືລະບຽບການປົກປ້ອງຄຸ້ມຄອງ Early ACCESS ສຳລັບພໍ່ແມ່ຜູ້ປົກຄອງ (ສິດທິຂອງພໍ່ແມ່ໃນການຊ່ວຍເຫຼືອໄລຍະຕົ້ນ)*. ຫຼັງຈາກທີ່ທ່ານປະກອບແບບຟອມນີ້ແລ້ວ, ໃຫ້ສົ່ງສຳເນົາຫາ:

(1) ອົງການ AEA ທີ່ກ່ຽວຂ້ອງ, ແລະ

(2) ພະແນກສຶກສາລັດໄອໂອວາ, Grimes State Office Building, 400 E. 14th St., Des Moines, IA 50319-0146.

ປະກອບແບບຟອມນີ້ໃຫ້ຄົບຖ້ວນ. ໃຊ້ໜ້າເຈ້ຍເພີ່ມເຕີມ ຖ້າຈຳເປັນ.

ວັນທີ:_______________ ຂ້າພະເຈົ້າກຳລັງຍື່ນການຮ້ອງຮຽນຂັ້ນລັດຕາມກົດໝາຍ IDEA. ຂ້າພະເຈົ້າຮ້ອງຂໍໃຫ້ມີການສືບສວນໂດຍພະແນກສຶກສາລັດໄອໂອວາ. ຂ້າພະເຈົ້າກ່າວຫາວ່າອົງການພາກລັດໄດ້ລະເມີດຂໍ້ກຳນົດໃນພາກ C ຂອງກົດໝາຍວ່າດ້ວຍການສຶກສາຂອງຄົນພິການ ແລະ ກົດລະບຽບວ່າດ້ວຍການຈັດຕັ້ງປະຕິບັດຂອງລັດ ແລະຂໍ້ບັງຄັບຂອງລັດຖະບານກາງ.

ຊື່ຂອງຂ້າພະເຈົ້າ:_______________________________ ລາຍເຊັນ:_______________________________

ທີ່ຢູ່ຂອງຂ້າພະເຈົ້າ:_______________________________________________

ເມືອງ:_____________________________ ລັດ:____________________ ລະຫັດໄປສະນີ:_________

ໂທລະສັບ:_____________________________ ອີເມວ (ຖ້າມີ):_______________________________

ການຮ້ອງຮຽນນີ້ແມ່ນກ່ຽວກັບເດັກພິການສະເພາະໃດໜຶ່ງແມ່ນບໍ່? ແມ່ນ/ບໍ່ແມ່ນ ຖ້າ "ແມ່ນ," ກະລຸນາ ປະກອບຂໍ້ມູນ:

ຊື່ຂອງເດັກ:_______________________________ ວັນເດືອນປີເກີດຂອງເດັກ:____________________

ເດັກໃຊ້ຊື່ອື່ນອີກແມ່ນບໍ່? ແມ່ນ/ບໍ່ແມ່ນ ຖ້າແມ່ນ, ຊື຺່ຫຍັງ?_______________________________

ທີ່ຢູ່ຂອງເດັກ:_______________________________________________

ເມືອງ:_____________________________ ລັດ:____________________ ລະຫັດໄປສະນີ:_________

ເດັກແມ່ນ "ຜູ້ຂາດບ່ອນຢູ່ອາໄສ" ແມ່ນບໍ່? ແມ່ນ/ບໍ່ແມ່ນ ຖ້າແມ່ນ, ສະໜອງຂໍ້ມູນຕິດຕໍ່ສຳລັບເດັກ._______________

ອົງການ AEA ບ່ອນເດັກອາໄສຢູ່:_______________________________________________

ທີ່ຢູ່:_______________________________________________

ເມືອງ:_____________________________ ລັດ:____________________ ລະຫັດໄປສະນີ:_________

ອົງການ AEA ບ່ອນເດັກເຂົ້າຮຽນ:_______________________________________________

ທີ່ຢູ່:_______________________________________________

ເມືອງ:_____________________________ ລັດ:____________________ ລະຫັດໄປສະນີ:_________

**ໝາຍເຫດ:** ຄຳຖາມ 1-3 ແມ່ນຈຳເປັນຕ້ອງຕອບ ຖ້າການຮ້ອງຮຽນແມ່ນກ່ຽວກັບເດັກສະເພາະໃດໜຶ່ງ. ຖ້າບໍ່ແມ່ນ, ຄຳຖາມ 1-3 ແມ່ນແນະນຳເທົ່ານັ້ນ.

1. ລັກສະນະຂອງບັນຫາ:

2. ຂໍ້ເທັດຈິງຂອງກໍລະນີທີ່ກ່ຽວຂ້ອງກັບບັນຫາ:

3. ການແກ້ໄຂບັນຫາທີ່ທ່ານສະເໜີມາ:

ການລະເມີດທີ່ກ່າວຫາມານີ້ໄດ້ເກີດຂຶ້ນບໍ່ກາຍໜຶ່ງປີກ່ອນວັນທີທີ່ທາງພະແນກສຶກສາລັດໄອໂອວາໄດ້ຮັບການຮ້ອງຮຽນນີ້ແມ່ນບໍ່?
ແມ່ນ/ບໍ່ແມ່ນ

ແບບຟອມນີ້ຖືກເຮັດສຳເລັດໂດຍຜູ້ອື່ນທີ່ບໍ່ແມ່ນພໍ່ແມ່ເດັກເຊັ່ນວ່າອົງການຈັດຕັ້ງໃດໜຶ່ງແມ່ນບໍ່? ແມ່ນ/ບໍ່ແມ່ນ ຖ້າແມ່ນ, ກະລຸນາ ບອກຊື່ຂອງທ່ານ, ຂໍ້ມູນຕິດຕໍ່ຂອງທ່ານ, ແລະ ຄວາມສຳພັນຕໍ່ກັບພໍ່ແມ່ເດັກ, ຖ້າແຕກຕ່າງຈາກຂ້າງເທິງ:_______________

---

ມີຄົນອື່ນທີ່ບໍ່ມີຊື່ໃນແບບຟອມນີ້ຜູ້ທີ່ແມ່ນພໍ່ແມ່ ຫຼືຜູ້ປົກຄອງຂອງເດັກແມ່ນບໍ່? ແມ່ນ/ບໍ່ແມ່ນ ຖ້າແມ່ນ, ກະລຸນາ ບອກຊື່ຂອງບຸກຄົນນັ້ນ, ຂໍ້ມູນຕິດຕໍ່, ແລະ ຄວາມສຳພັນຕໍ່ກັບເດັກ:_______________________

ໜ້ານີ້ເຈດຕະນາປະໃຫ້ຫວ່າງເປົ່າ.

**ແບບຟອມຕົວຢ່າງ: ການຮ້ອງຮຽນຕາມຫຼັກ Due Process (ຄໍາຮ້ອງຂໍການໄຕ່ສວນຕາມຫຼັກ Due Process)**

> ໃຊ້ແບບຟອມນີ້ ຖ້າທ່ານຕ້ອງການຍື່ນການຮ້ອງຮຽນຕາມຫຼັກ due process ແລະ ຮ້ອງຂໍການໄຕ່ສວນຕາມຫຼັກ due process. ການອະທິບາຍຂະບວນການນີ້ຢູ່ໜ້າ 15 ແລະ 16 ຂອງ *ປຶ້ມຄູ່ມືລະບຽບການປົກປ້ອງຄຸ້ມຄອງ Early ACCESS ສໍາລັບພໍ່ແມ່ຜູ້ປົກຄອງ (ສິດທິຂອງພໍ່ແມ່ໃນການຊ່ວຍເຫຼືອໄລຍະຕົ້ນ)*. ຫຼັງຈາກທີ່ທ່ານປະກອບແບບຟອມນີ້ແລ້ວ, ໃຫ້ສົ່ງສໍາເນົາຫາ:
> (1) ອົງການ AEA ທີ່ກ່ຽວຂ້ອງ, ແລະ
> (2) ພະແນກສຶກສາລັດໄອໂອວາ, Grimes State Office Building, 400 E. 14th St., Des Moines, IA 50319-0146.
> ປະກອບແບບຟອມນີ້ໃຫ້ຄົບຖ້ວນ. ໃຊ້ໜ້າເຈ້ຍເພີ່ມເຕີມ ຖ້າຈໍາເປັນ.

ວັນທີ:_______________ ຂ້າພະເຈົ້າກໍາລັງຍື່ນການຮ້ອງຮຽນຕາມຫຼັກ due process ກ່ຽວກັບລູກຂອງຂ້າພະເຈົ້າ. ຂ້າພະເຈົ້າຮ້ອງຂໍການໄຕ່ສວນຕາມຫຼັກ due process ຕໍ່ໜ້າຜູ້ພິພາກສາກົດໝາຍປົກຄອງທີ່ແຕ່ງຕັ້ງໂດຍພະແນກສຶກສາລັດໄອໂອວາ.

ຊື່ຂອງເດັກ:_______________________________ວັນເດືອນປີເກີດຂອງເດັກ:____________________

ເດັກໃຊ້ຊື່ອື່ນອີກແມ່ນບໍ່?________ແມ່ນ/ບໍ່ແມ່ນ________ຖ້າແມ່ນ, ຊື່ຫຍັງ?____________________

ທີ່ຢູ່ຂອງເດັກ:____________________________________________________

ເມືອງ:_____________________________ລັດ:____________________ລະຫັດໄປສະນີ:__________

ເດັກແມ່ນ "ຜູ້ຂາດບ່ອນຢູ່ອາໄສ" ແມ່ນບໍ່? ແມ່ນ/ບໍ່ແມ່ນ ຖ້າແມ່ນ, ສະໜອງຂໍ້ມູນຕິດຕໍ່ສໍາລັບເດັກ.

ອົງການ AEA ບ່ອນເດັກອາໄສຢູ່:____________________________________________

ທີ່ຢູ່:____________________________________________________________

ເມືອງ:_____________________________ລັດ:____________________ລະຫັດໄປສະນີ:__________

ອົງການ AEA ບ່ອນເດັກເຂົ້າຮຽນ:___________________________________________

ທີ່ຢູ່:____________________________________________________________

ເມືອງ:_____________________________ລັດ:____________________ລະຫັດໄປສະນີ:__________

ຊື່ຂອງຂ້າພະເຈົ້າ:_______________________________________________________

ທີ່ຢູ່ຂອງຂ້າພະເຈົ້າ:_____________________________________________________

ເມືອງ:_____________________________ລັດ:____________________ ລະຫັດໄປສະນີ:__________

ໂທລະສັບ:___________________________ ອີເມວ (ຖ້າມີ):____________________________

ຊື່ພໍ່ແມ່ຄົນອື່ນ:_________________________________________________________

ທີ່ຢູ່:____________________________________________________________

ເມືອງ:_____________________________ລັດ:____________________ລະຫັດໄປສະນີ:__________

ໂທລະສັບ:___________________________ ອີເມວ (ຖ້າມີ):____________________________

ລັກສະນະຂອງບັນຫາ:

ຂໍ້ເທັດຈິງກ່ຽວກັບກໍລະນີທີ່ກ່ຽວຂ້ອງກັບບັນຫາ:

ການແກ້ໄຂບັນຫາທີ່ທ່ານສະເໜີມາ:

ແບບຟອມນີ້ຖືກເຮັດສໍາເລັດໂດຍຜູ້ອື່ນທີ່ບໍ່ແມ່ນພໍ່ແມ່ເດັກແມ່ນບໍ່? ____ແມ່ນ/ບໍ່ແມ່ນ____ ຖ້າແມ່ນ, ກະລຸນາ ບອກຊື່ຂອງທ່ານ, ຂໍ້ມູນຕິດຕໍ່ຂອງທ່ານ ແລະ ຄວາມສໍາພັນຕໍ່ກັບພໍ່ແມ່ເດັກ:_________________________________________

---

ມີຄົນອື່ນທີ່ບໍ່ມີຊື່ໃນແບບຟອມນີ້ຜູ້ທີ່ແມ່ນພໍ່ແມ່ ຫຼືຜູ້ປົກຄອງຂອງເດັກແມ່ນບໍ່? ____ແມ່ນ/ບໍ່ແມ່ນ____ ຖ້າແມ່ນ, ກະລຸນາ ບອກຊື່ຂອງບຸກຄົນນັ້ນ, ຂໍ້ມູນຕິດຕໍ່, ແລະ ຄວາມສໍາພັນຕໍ່ກັບເດັກ:_________________________________

---

ໜ້ານີ້ເຈດຕະນາປະໃຫ້ຫວ່າງເປົ່າ

**ແຈ້ງການສຳຄັນຕໍ່ກັບພໍ່ແມ່**: ກົດໝາຍລັດຖະບານກາງກຳນົດໄວ້ວ່າຂໍ້ມູນກ່ຽວກັບວ່າ Early ACCESS ໄດ້ຮັບທຶນແນວໃດ ຕ້ອງຖືກສະໜອງໃຫ້ແກ່ຄອບຄົວໃນທຸກຄັ້ງທີ່ Early ACCESS ມີຈຸດປະສົງໃຊ້ປະກັນໄພພາກລັດ ຫຼືພາກເອກະຊົນ.

# ພະແນກສຶກສາລັດໄອໂອວາ, ເຊິ່ງເປັນອົງການນຳພາ ລະບົບໃຫ້ບໍລິການຊ່ວຍເຫຼືອໄລຍະຕົ້ນຄົບວົງຈອນ Early ACCESS (ພາກ C ຂອງກົດໝາຍວ່າດ້ວຍການສຶກສາຂອງຄົນພິການ)

## ນະໂຍບາຍວ່າດ້ວຍລະບົບເບີກຈ່າຍ, ສະບັບປັບປຸງ
## ນຳໃຊ້ໃນວັນທີ 29 ມີນາ 2012, ແລະ ປະກາດໃນວັນທີ 28 ເມສາ 2012
## ການແກ້ໄຂການປະຕິບັດຕາມດ້ານວິຊາການ, ມິຖຸນາ 2013

ພະແນກສຶກສາລັດໄອໂອວາໄດ້ນຳໃຊ້ນະໂຍບາຍວ່າດ້ວຍລະບົບເບີກຈ່າຍຕໍ່ໄປນີ້, ເຊິ່ງມີການປັບປຸງແກ້ໄຂລ້າສຸດໂດຍກົດລະບຽບການບໍລິຫານປະກາດໂດຍສະພາບໍລິຫານການສຶກສາປະຈຳລັດໄອໂອວາໃນວັນທີ 26 ມັງກອນ 2012, ແລະ ນຳໃຊ້ໃນວັນທີ 29 ມີນາ 2012.

## I. ການບໍລິການ Early ACCESS ຈະຕ້ອງເປັນການບໍລິການ "ຟຣີ"

ໄອໂອວາແມ່ນລັດທີ່ມີ "ສິດອຳນາດແຕ່ກຳເນີດ" (ຍັງເອີ້ນວ່າ "ສິດອຳນາດ FAPE"). *ເບິ່ງ* ປະມວນກົດໝາຍລັດໄອໂອວາ § 256B.2 (2011). ລັດໄອໂອວາສະໜອງ "ການສຶກສາພາກລັດທີ່ເໝາະສົມໂດຍບໍ່ເສຍຄ່າ" ("FAPE") ໃຫ້ແກ່ເດັກນ້ອຍທີ່ພິການທີ່ມີອາຍຸແຕ່ຊາວເອັດປີລົງມາຜູ້ທີ່ຕ້ອງການການສຶກສາພິເສດ. *Id.* § 256B.2(3).

ດ້ວຍເຫດຜົນນັ້ນ, ພະແນກຮັບປະກັນວ່າມັນບໍ່ຄິດຄ່າບໍລິການນຳພໍ່ແມ່ຜູ້ປົກຄອງສຳລັບການບໍລິການຕ່າງໆພາຍໃຕ້ພາກນີ້ ທີ່ເປັນສ່ວນໜຶ່ງຂອງການສຶກສາ FAPE ຂອງເດັກ ອີງຕາມປະມວນກົດໝາຍລັດໄອໂອວາພາກທີ 256B.

## II. ພະແນກສຶກສາ ຫຼືຜູ້ຮັບທຶນປະຈຳເຂດຂອງພະແນກອາດຈະພະຍາຍາມໃຊ້ປະກັນໄພ ຫຼືເງິນຊ່ວຍເຫຼືອພາກລັດຂອງຄອບຄົວພາຍໃຕ້ຫົວບົດ XIX ຂອງກົດໝາຍວ່າດ້ວຍປະກັນສັງຄົມ ("Medicaid").

ຜູ້ຮັບທຶນປະຈຳເຂດຂອງ Early ACCESS ແລະ ຜູ້ໃຫ້ບໍລິການອື່ນ ອາດຈະພະຍາຍາມເຂົ້າໃຊ້ເງິນປະກັນ Medicaid ຂອງຄອບຄົວ. ຜູ້ໃຫ້ບໍລິການ Early ACCESS ຈະຕ້ອງບໍ່ກຳນົດໃຫ້ພໍ່ແມ່ຈົດທະບຽນເຂົ້າຮ່ວມ ຫຼືລົງຊື່ເຂົ້າຮ່ວມໃນໂຄງການເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດ ເປັນເງື່ອນໄຂໜຶ່ງຂອງການໄດ້ຮັບການບໍລິການ Early ACCESS ແລະ ຕ້ອງໄດ້ຮັບການຍິນຍອມເຫັນດີກ່ອນທີ່ຈະໃຊ້ປະກັນໄພ ຫຼືເງິນຊ່ວຍເຫຼືອພາກລັດຂອງພໍ່ແມ່ ຫຼືຂອງເດັກ, ຖ້າເດັກ ຫຼືພໍ່ແມ່ນັ້ນ ຍັງບໍ່ທັນໄດ້ຈົດທະບຽນເຂົ້າຮ່ວມໃນໂຄງການດັ່ງກ່າວ.

*ລັກສະນະ ແລະ ຈຳນວນເງິນຈ່າຍແທນຄືນຂອງ Medicaid.* ເງິນປະກັນຈະຈ່າຍແທນຄືນໃຫ້ແກ່ຜູ້ໃຫ້ບໍລິການສຳລັບຄ່າການບໍລິການ Early ACCESS ທີ່ກຳນົດໄວ້. ພະແນກບໍລິການມະນຸດລັດໄອໂອວາເປັນຜູ້ກຳນົດຈຳນວນເງິນ ແລະ ການບໍລິການທີ່ຈະໄດ້ຮັບການຈ່າຍແທນຄືນ. ເງິນຈ່າຍແທນຄືນຈະຕ້ອງບໍ່ເກີນຈຳນວນຄ່າ

ໃຊ້ຈ່າຍຕົວຈິງຂອງການສະໜອງການບໍລິການທີ່ໄດ້ຮັບການຈ່າຍແທນຄືນຂອງຜູ້ໃຫ້ບໍລິການ.

*ຂະແໜງການ ຫຼືການບໍລິການທີ່ຂຶ້ນກັບລະບົບເບີກຈ່າຍ.* ອີງຕາມພະແນກບໍລິການມະນຸດ, ການຈ່າຍແທນຄືນພາຍໃຕ້ Medicaid " ຈະຖືກເຮັດສໍາລັບການບໍລິການດ້ານການກວດການໄດ້ຍິນ ແລະດ້ານພັດທະນາທີ່ຈໍາເປັນທາງການແພດ, ການບໍລິການດ້ານສຸຂະພາບ ແລະການພະຍາບານ, ການບໍລິການຂົນສົ່ງທາງການແພດ, ການບໍລິການດ້ານໂພຊະນາການ, ການບໍລິການດ້ານກິຈະກໍາບໍາບັດ, ການບໍລິການດ້ານກາຍະບໍາບັດ, ການປະເມີນ ແລະການໃຫ້ຄໍາປຶກສາດ້ານຈິດຕະວິທະຍາ, ວຽກສັງຄົມສົງເຄາະ, ການບໍລິການດ້ານການເວົ້າ-ພາສາ, ການບໍລິການດ້ານສາຍຕາ, ແລະ ການປະສານງານການບໍລິການ ຫຼື ການບໍລິການຄຸ້ມຄອງກໍລະນີ". ເພື່ອໄດ້ຮັບການຈ່າຍໃຫ້ໂດຍ Medicaid ແລະ ເປັນຫົວຂໍ້ທີ່ໄດ້ຮັບການຈ່າຍແທນຄືນ, ການບໍລິການຕ້ອງມີລາຍຊື່ໃນ ຫຼືເຊື່ອມໂຍງກັບການບໍລິການໃນແຜນການບໍລິການຄອບຄົວສະເພາະບຸກຄົນຂອງເດັກ ("IFSP").

ເພື່ອເຂົ້າເຖິງເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດ ເຊັ່ນວ່າ Medicaid, ຜູ້ໃຫ້ບໍລິການຕ້ອງສະໜອງໃຫ້ພໍ່ແມ່ໃບແຈ້ງການທີ່ຄ້າຍຄືກັນກັບໃບແຈ້ງການທີ່ຕິດຄັດເປັນພາກຕິດຄັດ A ແລະ ຕ້ອງຕອບສະໜອງໄດ້ຂໍ້ກໍານົດດ້ານ "ບໍ່ມີຄ່າໃຊ້ຈ່າຍ" ທີ່ຕິດຄັດມາເປັນພາກຕິດຄັດ B.

ພະແນກບໍ່ກໍານົດໃຫ້ພໍ່ແມ່ຈ່າຍຄ່າຮ່ວມຈ່າຍ ຫຼືຄ່າຫັກລ່ວງໜ້າພາຍໃຕ້ Medicaid. ໂດຍສອດຄ່ອງກັບກົດລະບຽບຂອງຕົນສໍາລັບການຈັດຕັ້ງປະຕິບັດຫົວບົດ XIX ຂອງກົດໝາຍວ່າດ້ວຍປະກັນສັງຄົມ (Social Security Act), ພະແນກບໍລິການມະນຸດຈະຮຽກຮ້ອງໃຫ້ມີການໃຊ້ປະກັນໄພພາກເອກະຊົນທີ່ມີຢູ່ໃນທຸກຄັ້ງ ຖ້າມັນສະໜອງການຈ່າຍແທນຄືນ Medicaid ສໍາລັບການບໍລິການໃດໜຶ່ງ. ນະໂຍບາຍນັ້ນແມ່ນມີໃນແຈ້ງການທີ່ຕິດຄັດເປັນພາກຕິດຄັດ A ແລະ ໃນໝວດຕໍ່ໄປ.

ຖ້າພໍ່ແມ່ບໍ່ໃຫ້ການຍິນຍອມເຫັນດີຕໍ່ກັບການໃຊ້ Medicaid ຫຼື ຕໍ່ກັບການເປີດເຜີຍຂໍ້ມູນລະບະຕົວຕົນສ່ວນບຸກຄົນກັບພະແນກບໍລິການມະນຸດເພື່ອຈຸດປະສົງຂອງການຮຽກເກັບເງິນ Medicaid, ທາງພະແນກ ແລະ ຜູ້ໃຫ້ບໍລິການ Early ACCESS ຈະບໍ່ໃຊ້ເງິນຊ່ວຍເຫຼືອ Medicaid ທີ່ມີຢູ່.

ຖ້າພໍ່ແມ່ບໍ່ໃຫ້ການຍິນຍອມເຫັນດີຕໍ່ກັບການໃຊ້ Medicaid ຫຼືຕໍ່ກັບການເປີດເຜີຍຂໍ້ມູນລະບຸຕົວຕົນສ່ວນບຸກຄົນກັບພະແນກບໍລິການມະນຸດເພື່ອຈຸດປະສົງຮຽກເກັບເງິນ Medicaid, ທາງພະແນກ ແລະ ຜູ້ໃຫ້ບໍລິການ Early ACCESS ຈະຍັງສະໜອງທຸກການບໍລິການ IFSP ທັງໝົດທີ່ພໍ່ແມ່ໄດ້ໃຫ້ການຍິນຍອມເຫັນດີແລ້ວ.

## III. ພະແນກບໍລິການມະນຸດຈະຊອກຫາການຈ່າຍແທນຄືນຈາກຄວາມຄຸ້ມຄອງປະກັນສຸຂະພາບພາກເອກະຊົນທີ່ມີຢູ່ໃນທຸກຄັ້ງທີ່ມັນຈ່າຍການຮ້ອງຂໍເງິນປະກັນພາຍໃຕ້ຫົວບົດXIX ຂອງກົດໝາຍວ່າດ້ວຍປະກັນສັງຄົມ ("Medicaid").

ຫົວບົດ XIX ຂອງກົດໝາຍວ່າດ້ວຍປະກັນສັງຄົມກໍານົດໃຫ້ພະແນກບໍລິການມະນຸດຊອກຫາການຈ່າຍແທນຄືນຈາກສັນຍາຫຼື ຄວາມຄຸ້ມຄອງປະກັນໄພພາກເອກະຊົນທີ່ມີຢູ່ ໃນທຸກຄັ້ງທີ່ພະແນກບໍລິການມະນຸດຈ່າຍການຮ້ອງຂໍເງິນ Medicaid.

ໃນທຸກຄັ້ງທີ່ພະແນກ ຫຼື ຜູ້ໃຫ້ບໍລິການ Early ACCESS ໃດໜຶ່ງພະຍາຍາໃຊ້ຄວາມຄຸ້ມຄອງ Medicaid ຂອງເດັກ ຫຼືຂອງພໍ່ແມ່ ແລະ ພໍ່ແມ່ ຫຼືເດັກມີຄວາມຄຸ້ມຄອງປະກັນສຸຂະພາບພາກເອກະຊົນ, ພະແນກ ຫຼືຜູ້ໃຫ້ບໍລິການ

Early ACCESS ຈະຊອກເອົາການຍິນຍອມເຫັນດີຈາກພໍ່ແມ່ເພື່ອເຂົ້າໃຊ້ປະກັນໄພພາກເອກະຊົນ, ຕາມທີ່ອະທິບາຍຂ້າງລຸ່ມ.

*ລັກສະນະ ແລະ ຈຳນວນຂອງຄວາມຄຸ້ມຄອງປະກັນໄພເອກະຊົນ.* ເງິນປະກັນຈ່າຍແທນຄືນໃຫ້ພະແນກບໍລິການມະນຸດສຳລັບການຈ່າຍເງິນ Medicaid. ຜູ້ໃຫ້ປະກັນໄພພາກເອກະຊົນເປັນຜູ້ຕັດສິນຈຳນວນເງິນ ແລະ ການບໍລິການທີ່ໄດ້ຮັບຄວາມຄຸ້ມຄອງ. ເງິນຈະຕ້ອງບໍ່ເກີນຄ່າໃຊ້ຈ່າຍຕົວຈິງໃນການສະໜອງການບໍລິການທີ່ໄດ້ຮັບຄວາມຄຸ້ມຄອງຂອງຜູ້ໃຫ້ບໍລິການ.

*ຂະແໜງການ ຫຼືການບໍລິການທີ່ຂຶ້ນກັບລະບົບເບີກຈ່າຍ.* ຂະແໜງການ ຫຼືການບໍລິການທີ່ຂຶ້ນກັບການຈ່າຍຈາກປະກັນໄພພາກເອກະຊົນ ຕ້ອງຕອບສະໜອງເກນມາດຖານດ້ານ "ຂະແໜງການ ຫຼືການບໍລິການ" ໃນໝວດ II (ຂ້າງເທິງ), ແລະ ຕ້ອງເປັນການບໍລິການທີ່ໄດ້ຮັບຄວາມຄຸ້ມຄອງພາຍໃຕ້ສັນຍາປະກັນໄພພາກເອກະຊົນທີ່ນຳໃຊ້. ຜູ້ໃຫ້ປະກັນໄພພາກເອກະຊົນເປັນຜູ້ຕັດສິນກຳນົດວ່າການບໍລິການ Early ACCESS ສະເພາະໃດໜຶ່ງແມ່ນການບໍລິການທີ່ໄດ້ຮັບຄວາມຄຸ້ມຄອງຫຼືບໍ່ພາຍໃຕ້ສັນຍາປະກັນໄພທີ່ພວກເຂົາໄດ້ອອກໃຫ້.

ຕ້ອງໄດ້ຮັບການຍິນຍອມເຫັນດີຈາກພໍ່ແມ່ເພື່ອໃຊ້ຄວາມຄຸ້ມຄອງປະກັນໄພພາກເອກະຊົນໃນກໍລະນີຕໍ່ໄປນີ້:

- ເມື່ອອົງການພາກລັດ ຫຼືຜູ້ໃຫ້ບໍລິການ Early ACCESS ຊອກໃຊ້ປະກັນໄພ ຫຼືເງິນຊ່ວຍເຫຼືອພາກເອກະຊົນຂອງພໍ່ແມ່ ຫຼືຂອງເດັກເພື່ອຈ່າຍຄ່າສະໜອງການບໍລິການ EARLY ACCESS ໃນແຜນ IFSP ໃນຄັ້ງທຳອິດ; ແລະ
- ໃນແຕ່ລະຄັ້ງທີ່ການຍິນຍອມເຫັນດີສຳລັບການບໍລິການແມ່ນຈຳເປັນຕ້ອງມີພາຍໃຕ້ກົດລະບຽບຂອງ Early ACCESS ຂໍ້ທີ 281—120.420(1) ເນື່ອງຈາກການເພີ່ມຂຶ້ນ (ດ້ານຄວາມຖີ່, ຄວາມຍາວ, ໄລຍະເວລາ, ຫຼື ຄວາມເຂັ້ມ) ໃນການສະໜອງການບໍລິການໃນແຜນ IFSP ຂອງເດັກ.

ພະແນກສຶກສາບໍ່ຮຽກຮ້ອງໃຫ້ພໍ່ແມ່ຈ່າຍຄ່າໃຊ້ຈ່າຍທີ່ພໍ່ແມ່ຈະມີເນື່ອງຈາກການໃຊ້ປະກັນໄພພາກເອກະຊົນຂອງລັດເພື່ອຈ່າຍຄ່າບໍລິການ Early ACCESS (ເຊັ່ນວ່າ ຄ່າຮ່ວມຈ່າຍ, ເບ້ຍປະກັນ, ການເພີ່ມຂຶ້ນຂອງເບ້ຍປະກັນ ຫຼື ຄ່າຫັກລ່ວງໜ້າ). ຫຼັງຈາກການຮ້ອງຂໍຂອງພໍ່ແມ່, ອົງການພາກລັດທີ່ເໝາະສົມຈະຈ່າຍທົດແທນຄືນໃຫ້ແກ່ພໍ່ແມ່ສຳລັບຄ່າໃຊ້ຈ່າຍເຫຼົ່ານັ້ນ

ໃນເວລາໄດ້ຮັບການຍິນຍອມເຫັນດີທີ່ຈຳເປັນສຳລັບການໃຊ້ປະກັນໄພ ຫຼືເງິນຊ່ວຍເຫຼືອພາກເອກະຊົນ ຫຼື ການໃຊ້ເງິນຊ່ປະກັນໄພຄັ້ງທຳອິດພາຍໃຕ້ສັນຍາປະກັນໄພພາກເອກະຊົນຂອງເດັກ ຫຼືຂອງພໍ່ແມ່ເພື່ອຈ່າຍຄ່າບໍລິການ Early ACCESS ໃດໜຶ່ງ, ລັດຈະສະໜອງສຳເນົາຂອງລະບົບການເບີກຈ່າຍຂອງພະແນກໃຫ້ແກ່ພໍ່ແມ່. ເຫຼົ່ານີ້ແມ່ນຄ່າໃຊ້ຈ່າຍທີ່ເປັນໄປໄດ້ທີ່ພໍ່ແມ່ອາດຈະກໍ່ໃຫ້ເກີດຂຶ້ນ ໃນເວລາປະກັນໄພພາກເອກະຊົນຂອງພໍ່ແມ່ຖືກໃຊ້ເພື່ອຈ່າຍຄ່າການບໍລິການ Early ACCESS ໃດໜຶ່ງ:

- ຄ່າຮ່ວມຈ່າຍ, ການເພີ່ມຂຶ້ນຂອງເບ້ຍປະກັນ ຫຼື ຄ່າຫັກລ່ວງໜ້າ (ທັງໝົດຈະຖືກຈ່າຍແທນຄືນ), ແລະ
- ຄ່າໃຊ້ຈ່າຍໄລຍະຍາວ ເຊັ່ນວ່າ ການສູນເສຍເງິນຊ່ວຍເຫຼືອເນື່ອງຈາກຄວາມຄຸ້ມຄອງປະກັນສຸຂະພາບປະຈຳປີ ຫຼືຕະຫຼອດຊີວິດ ຈຳກັດຂີດສູງສຸດພາຍໃຕ້ສັນຍາປະກັນປະກັນໄພ.

ຖ້າພໍ່ແມ່ມີຄຳຖາມກ່ຽວກັບຄວາມຄຸ້ມຄອງປະກັນໄພພາກເອກະຊົນ, ພໍ່ແມ່ຄວນຕິດຕໍ່ຫາຜູ້ໃຫ້ປະກັນໄພສຸຂະພາບພາກເອກະຊົນ. ຜູ້ປະສານງານການບໍລິການອາດຈະຊ່ວຍເຫຼືອໃນການອຳນວຍຄວາມສະດວກການ

ສົນທະນາດັ່ງກ່າວ.

ຖ້າພໍ່ແມ່ບໍ່ໃຫ້ການຍິນຍອມຕໍ່ກັບການນຳໃຊ້ປະກັນໄພພາກເອກະຊົນຂອງເດັກ ຫຼືຂອງພໍ່ແມ່ໃນນາມເປັນສ່ວນໜຶ່ງຂອງການຮ້ອງຂໍເງິນ Medicaid, ທາງພະແນກ ແລະ ຜູ້ໃຫ້ບໍລິການ Early ACCESS ຈະບໍ່ຍື່ນການຮ້ອງຂໍການຈ່າຍແທນຄືນເງິນ Medicaid.

ຖ້າພໍ່ແມ່ບໍ່ໃຫ້ການຍິນຍອມເຫັນດີເພື່ອໃຫ້ໃຊ້ປະກັນໄພພາກເອກະຊົນຂອງເດັກ ຫຼືຂອງພໍ່ແມ່ເປັນສ່ວນໜຶ່ງຂອງການຮ້ອງຂໍເງິນ Medicaid, ທາງອົງການຕ້ອງຍັງເຮັດໃຫ້ການບໍລິການ Early ACCESS ເຫຼົ່ານັ້ນທີ່ມີໃນແຜນ IFSPທີ່ພໍ່ແມ່ໄດ້ໃຫ້ການຍິນຍອມເຫັນດີແລ້ວມີໃຫ້ແກ່ເດັກ.

## IV. ພະແນກ ແລະ ຜູ້ຮັບທຶນປະຈຳເຂດຂອງຕົນບໍ່ຊອກການເຂົ້າເຖິງຄວາມຄຸ້ມຄອງປະກັນສຸຂະພາບພາກເອກະຊົນເມື່ອມັນບໍ່ກ່ຽວຂ້ອງກັບການຮ້ອງຂໍເງິນພາຍໃຕ້ຫົວບົດXIX ຂອງກົດໝາຍວ່າດ້ວຍປະກັນສັງຄົມ ("Medicaid").

ເຖິງແມ່ນວ່າກົດລະບຽບວ່າດ້ວຍການບໍລິຫານຂອງພະແນກຖືກຂຽນຂຶ້ນເພື່ອອະນຸຍາດໃຫ້ອົງການພາລັດຮ້ອງຂໍການເຂົ້າເຖິງປະກັນສຸຂະພາບພາກເອກະຊົນໃນທຸກກໍລະນີ, ແຕ່ໃນປະຈຸບັນ ມັນບໍ່ແມ່ນນະໂຍບາຍ ຫຼືວິທີປະຕິບັດຂອງລັດໄອໂອວາໃນການຊອກການເຂົ້າເຖິງຄວາມຄຸ້ມຄອງປະກັນໄພພາກເອກະຊົນໃນເວລາທີ່ຄວາມຄຸ້ມຄອງປະກັນໄພພາກເອກະຊົນນັ້ນບໍ່ກ່ຽວຂ້ອງກັບການຮ້ອງຂໍເງິນ Medicaid ເພື່ອຈ່າຍຄ່າການບໍລິການ Early ACCESS. ຍັງບໍ່ທັນມີການສະເໜີປ່ຽນແປງນະໂຍບາຍນັ້ນເທື່ອ.

ໃນຂະນະທີ່ກົດລະບຽບທີ່ລວມມີ 34 C.F.R. § 303.520(b)(2) ໄດ້ຖືກໃຊ້ໂດຍພະແນກ, ທາງພະແນກບໍ່ສາມາດປະຕິບັດທາງເລືອກນັ້ນໄດ້ ເພາະວ່າຍັງບໍ່ທັນມີການຜ່ານຂໍ້ກົດໝາຍໃດທີ່ຮຽກຮ້ອງໃຫ້ມີໂດຍກົດລະບຽບນັ້ນເທື່ອ

## V. ອົງປະກອບອື່ນ: ລະບົບການເບີກຈ່າຍສຳລັບEarly ACCESS ຂອງລັດໄອໂອວາ

ພະແນກໄດ້ນຳໃຊ້ນະໂຍບາຍ "ຜູ້ຈ່າຍຕົວເລືອກສຸດທ້າຍ" ຕາມກົດລະບຽບການບໍລິຫານ. ກົດລະບຽບນັ້ນມີຢູ່ໃນພາກຕິດຄັດ C.

ນະໂຍບາຍນີ້ ແລະກົດລະບຽບການບໍລິຫານທີ່ມັນຈັດຕັ້ງປະຕິບັດມີຈຸດປະສົງເພື່ອປະຕິບັດຕາມຂໍ້ 34 C.F.R. § 303.521.

ນະໂຍບາຍນີ້ອະທິບາຍຂະແໜງການ ຫຼືການບໍລິການທີ່ຕ້ອງນຳໃຊ້ລະບົບເບີກຈ່າຍຂອງລັດໄອໂອວາ, ໃນໝວດທີ II ແລະ III, ເຊັ່ນດຽວກັບວິທີຄິດໄລ່ຈຳນວນເງິນຈ່າຍແທນຄືນ (ເຊິ່ງຈະຕ້ອງບໍ່ເກີນຄ່າໃຊ້ຈ່າຍຕົວຈິງໃນການສະໜອງການບໍລິການດັ່ງກ່າວ).

ອີງຕາມໝວດ I ຂອງນະໂຍບາຍນີ້, ຄວາມສາມາດ ຫຼືບໍ່ສາມາດຈ່າຍ ບໍ່ແມ່ນສ່ວນໜຶ່ງຂອງລະບົບເບີກຈ່າຍຂອງລັດໄອໂອວາ. ໃນຂອບເຂດທີ່ການມີສິດໄດ້ຮັບ Medicaid ອີງໃສ່ຂີດກຳນົດດ້ານລາຍຮັບ ຫຼືຊັບສິນ, ພະແນກສຶກສາລັດໄອໂອວາກຳນົດຂີດກຳນົດເຫຼົ່ານັ້ນ ອີງຕາມຫົວບົດXIX ຂອງກົດໝາຍວ່າດ້ວຍປະກັນສັງຄົມ.

ກົດລະບຽບ Early ACCESS ຂອງລັດໄອໂອວາ ປະກອບມີການຄ້ຳປະກັນຕໍ່ໄປນີ້.

- ຄ່າທຳນຽມຈະບໍ່ຖືກຄິດໄລ່ເອົາຈາກພໍ່ແມ່ສຳລັບການບໍລິການທີ່ເດັກມີສິດໄດ້ຮັບໂດຍບໍ່ເສຍຄ່າໃຊ້ຈ່າຍ

(ລວມທັງການບໍລິການເຫຼົ່ານັ້ນທີ່ລະບຸໄວ້ໃນໝວດນີ້ ແລະ ໝວດ I).

- ຜູ້ໃຫ້ບໍລິການ Early ACCESS ຈະບໍ່ຊອກເອົາການຈ່າຍແທນຄືນສໍາລັບຈໍານວນທີ່ຫຼາຍກວ່າຄ່າໃຊ້ຈ່າຍຕົວຈິງຂອງການສະໜອງການບໍລິການ Early ACCESS.
- ຄອບຄົວທີ່ມີປະກັນໄພ ຫຼືເງິນຊ່ວຍເຫຼືອພາກລັດ ຫຼືປະກັນໄພພາກເອກະຊົນ ຈະບໍ່ຖືກຄິດໄລ່ຄ່າໃຊ້ຈ່າຍຕາມສັດສ່ວນທີ່ຫຼາຍກວ່າຄອບຄົວຜູ້ທີ່ບໍ່ມີປະກັນໄພ ຫຼືເງິນຊ່ວຍເຫຼືອພາກລັດ ຫຼືປະກັນໄພພາກເອກະຊົນ.

ການຄໍ້າປະກັນທີ່ຈໍາເປັນກ່ຽວກັບການບໍ່ສາມາດຈ່າຍແມ່ນບໍ່ກ່ຽວຂ້ອງ ອີງຕາມໝວດ I.

ຖ້າຄອບຄົວໃດໜຶ່ງບໍ່ສາມາດສະໜອງຂໍ້ມູນທີ່ຈໍາເປັນກ່ຽວກັບລາຍຮັບ ຫຼືຊັບສິນໃຫ້ແກ່ພະແນກບໍລິການມະນຸດ, ຄອບຄົວນັ້ນອາດຈະບໍ່ມີສິດໄດ້ຮັບຄວາມຄຸ້ມຄອງ Medicaid.

ພະແນກ ຫຼືຜູ້ໃຫ້ບໍລິການ Early ACCESS ອາດຈະໃຊ້ແຫຼ່ງທຶນພາກ C ຫຼື ແຫຼ່ງທຶນອື່ນເພື່ອຈ່າຍຄ່າໃຊ້ຈ່າຍເຊັ່ນວ່າ ການເພີ່ມຂຶ້ນຂອງເບ້ຍປະກັນ, ຄ່າຫັກລ່ວງໜ້າ ຫຼື ຄ່າຮ່ວມຈ່າຍ.

ພະແນກສຶກສາລັດໄອໂອວາ ນໍາໃຊ້ກົດລະບຽບວ່າດ້ວຍຄ່າທໍານຽມຂອງຄອບຄົວ ແລະ ກົດລະບຽບວ່າດ້ວຍເງິນທີ່ໄດ້ຈາກປະກັນໄພໃນຂໍ້ 34 C.F.R. § 303.520(d)-(e) ແລະ 303.521(d), ໃນກົດລະບຽບການບໍລິຫານຂອງລັດໄອໂອວາ ຂໍ້ທີ 281—120.520(4)-(5) ແລະ 281—120.521(4), ຕາມລໍາດັບ.

ໜ້າວຽກຕໍ່ໄປນີ້ບໍ່ມີຄ່າທໍານຽມ

- ການຈັດຕັ້ງປະຕິບັດຂໍ້ກໍານົດດ້ານການຊອກຫາເດັກຂອງ Early ACCESS
- ການປະເມີນຜົນ ແລະການຕີລາຄາເດັກ ແລະ ໜ້າວຽກທີ່ກ່ຽວຂ້ອງກັບການປະເມີນຜົນ ແລະການຕີລາຄາເດັກ
- ການບໍລິການດ້ານການປະສານງານການບໍລິການ
- ກິດຈະກໍາການບໍລິຫານ ແລະການປະສານງານທີ່ກ່ຽວຂ້ອງກັບ:
  o ການພັດທະນາ, ການທົບທວນຄືນ, ແລະ ການປະເມີນຜົນແຜນIFSP ແລະ ແຜນ IFSP ຊົ່ວຄາວ; ແລະ
  o ການຈັດຕັ້ງປະຕິບັດລະບຽບການປົກປ້ອງຄຸ້ມຄອງ Early ACCESS ແລະ ອົງປະກອບອື່ນຂອງ Early ACCESS ໃນຂໍ້ລະບຽບ 281—120.300 ຫາ 281—120.346

*ລະບຽບຂັ້ນຕອນການປົກປ້ອງຄຸ້ມຄອງ.* ພໍ່ແມ່ຜູ້ທີ່ຕ້ອງການໂຕ້ຖຽງການປະກາດໃຊ້ຄ່າທຳນຽມ ຫຼື ການຕັດສິນກຳນົດຂອງລັດກ່ຽວກັບຄວາມສາມາດຂອງພໍ່ແມ່ໃນການຈ່າຍ ອາດຈະເຮັດສິ່ງໃດໜຶ່ງຕໍ່ໄປນີ້:

- ເຂົ້າຮ່ວມໃນການໄກ່ເກ່ຍ.
- ຮ້ອງຂໍການໄຕ່ສວນຕາມຫຼັກ due process.
- ຍື່ນການຮ້ອງຮຽນຂັ້ນລັດ.
- ໃຊ້ລະບຽບຂັ້ນຕອນອື່ນທີ່ກຳນົດໃຫ້ໂດຍລັດເພື່ອເລັ່ງການແກ້ໄຂການຮ້ອງຂໍດ້ານການເງິນໃຫ້ໄວຂຶ້ນ (ເຊັ່ນວ່າ ຂະບວນການຜູ້ອຳນວຍຄວາມສະດວກແກ້ໄຂຂໍ້ຂັດແຍ້ງຂອງ AEA ຫຼື ການອຸທອນດ້ານບໍລິຫານກ່ຽວກັບຄວາມຄຸ້ມຄອງ Medicaid ນຳພະແນກການບໍລິການມະນຸດຂອງລັດໄອໂອວາ), ໂດຍມີເງື່ອນໄຂວ່າການໃຊ້ດັ່ງກ່າວບໍ່ເຮັດໃຫ້ຊັກຊ້າ ຫຼືປະຕິເສດສິດທິຕາມລະບຽບການຂອງພໍ່ແມ່ພາຍໃຕ້ໂຄງການ Early ACCESS, ລວມທັງສິດທິໃນການໃຊ້ ຢ່າງທ່ວງທັນເວລາ ຂໍ້ໃດໜຶ່ງໃນສາມຂໍ້ຂ້າງເທິງໃນວັກຍໍ້ໜ້ານີ້.

ພະແນກຕ້ອງແຈ້ງບອກພໍ່ແມ່ກ່ຽວກັບທາງເລືອກດ້ານລະບຽບການປົກປ້ອງຄຸ້ມຄອງເຫຼົ່ານີ້ດ້ວຍແບບວິທີໃດໜຶ່ງຕໍ່ໄປນີ້:

- ສະໜອງສຳເນົາຂອງນະໂຍບາຍວ່າດ້ວຍລະບົບເບີກຈ່າຍຂອງລັດໃຫ້ແກ່ພໍ່ແມ່ໃນເວລາຂໍເອົາການຍິນຍອມເຫັນດີເພື່ອສະໜອງການບໍລິການ Early ACCESS ພາຍໃຕ້ກົດລະບຽບ Early ACCESS ຂໍ້ທີ 120.420(1); ຫຼື
- ລວມເອົາຂໍ້ມູນນີ້ເຂົ້າໃນແຈ້ງການທີ່ສົ່ງໃຫ້ພໍ່ແມ່ພາຍໃຕ້ກົດລະບຽບ Early ACCESS ຂໍ້ທີ 281—120.421.

## VI. ສິດອຳນາດ

ປະມວນກົດໝາຍລັດໄອໂອວາ ພາກ 256B (2011)

34 C.F.R. § 303.510 (2011)
34 C.F.R. § 303.520 (2011)
34 C.F.R. § 303.521 (2011)

ປະມວນກົດລະບຽບການບໍລິຫານລັດໄອໂອວາ ຂໍ້ລະບຽບ 281—120.510 (2012)
ປະມວນກົດລະບຽບການບໍລິຫານລັດໄອໂອວາ ຂໍ້ລະບຽບ 281—120.520 (2012)
ປະມວນກົດລະບຽບການບໍລິຫານລັດໄອໂອວາ ຂໍ້ລະບຽບ 281—120.521 (2012)

## ພາກຕິດຄັດ A

## ການແຈ້ງບອກເປັນລາຍລັກອັກສອນກ່ຽວກັບການໃຊ້ MEDICAID ຂອງ EARLY ACCESS

ກ່ອນທີ່ພະແນກສຶກສາ ("ພະແນກ") ຫຼືຜູ້ໃຫ້ບໍລິການ Early ACCESS ຈະໃຊ້ເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດຂອງທ່ານ, ຫຼືເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດຂອງລູກທ່ານ ເພື່ອຈ່າຍຄ່າການບໍລິການ Early ACCESS, ອົງການນັ້ນຕ້ອງສະໜອງການແຈ້ງບອກເປັນລາຍລັກອັກສອນໃຫ້ທ່ານຊາບ. ກະລຸນາ ອ່ານຄຳປະກາດຕໍ່ໄປນີ້ຢ່າງລະອຽດຖີ່ຖ້ວນ.

Medicaid

- ການຍິນຍອມເຫັນດີຈາກພໍ່ແມ່ຕ້ອງໄດ້ຮັບອີງຕາມກົດລະບຽບ Early ACCESS ຂໍ້ 281—120.414(34CFR303) (ຖ້ານຳໃຊ້ກົດລະບຽບນັ້ນ) ກ່ອນທີ່ທາງພະແນກ ຫຼືຜູ້ໃຫ້ບໍລິການ Early ACCESS ຈະ, ເພື່ອຈຸດປະສົງການຮຽກເກັບເງິນ, ເປີດເຜີຍຂໍ້ມູນລະບຸຕົນຕົວຂອງເດັກຕໍ່ກັບພະແນກບໍລິການມະນຸດ, ອົງການພາກລັດຂອງລັດທີ່ຮັບຜິດຊອບຄຸ້ມຄອງບໍລິຫານໂຄງການ Medicaid ຂອງລັດ.
- ພໍ່ແມ່ມີສິດພາຍໃຕ້ກົດລະບຽບ Early ACCESS ຂໍ້ 281—120.414(34CFR303) (ຖ້ານຳໃຊ້ກົດລະບຽບນັ້ນ) ໃນການຖອນການຍິນຍອມເຫັນດີຂອງເຂົາເຈົ້າສຳລັບການເປີດເຜີຍຂໍ້ມູນລະບຸຕົນຕົວສ່ວນບຸກຄົນຕໍ່ກັບພະແນກບໍລິການມະນຸດເພື່ອຈຸດປະສົງການຮຽກເກັບເງິນ Medicaid ໄດ້ທຸກເວລາ.
- ພະແນກ ຫຼື ຜູ້ໃຫ້ບໍລິການ Early ACCESS ບໍ່ສາມາດຮຽກຮ້ອງໃຫ້ທ່ານລົງຊື່ ຫຼືຈົດທະບຽນເຂົ້າຮ່ວມໃນໂຄງການຊ່ວຍເຫຼືອ ຫຼືປະກັນໄພພາກລັດ ໂດຍໃຫ້ເປັນເງື່ອນໄຂໜຶ່ງຂອງການໄດ້ຮັບການບໍລິການ Early ACCESS ແລະ ຕ້ອງໄດ້ຮັບການຍິນຍອມເຫັນດີຈາກທ່ານກ່ອນທີ່ຈະໃຊ້ເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດຂອງທ່ານ ຫຼື ເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດຂອງລູກທ່ານ ຖ້າທ່ານ ຫຼືລູກຂອງທ່ານຍັງບໍ່ທັນໄດ້ລົງທະບຽນເຂົ້າຮ່ວມໃນໂຄງການດັ່ງກ່າວ. ພະແນກ ຫຼືຜູ້ໃຫ້ບໍລິການ Early ACCESS ຕ້ອງໄດ້ຮັບການຍິນຍອມເຫັນດີຈາກທ່ານໃນການໃຊ້ເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດຂອງລູກທ່ານ ຫຼືຂອງທ່ານເພື່ອຈ່າຍຄ່າການບໍລິການ Early ACCESS ຖ້າການໃຊ້ດັ່ງກ່າວຈະ:
    - o ເຮັດໃຫ້ຄວາມຄຸ້ມຄອງຕະຫຼອດຊີວິດທີ່ມີໃຫ້ ຫຼືຜົນປະໂຫຍດການປະກັນໄພອື່ນສຳລັບລູກຂອງທ່ານ ຫຼືທ່ານພາຍໃຕ້ໂຄງການນັ້ນຫຼຸດລົງ
    - o ສົ່ງຜົນເຮັດໃຫ້ທ່ານຕ້ອງຈ່າຍຄ່າບໍລິການທີ່ຖ້າບໍ່ດັ່ງນັ້ນແລ້ວຈະຖືກຈ່າຍໃຫ້ໂດຍໂຄງການຊ່ວຍເຫຼືອພາກລັດ ຫຼື ປະກັນໄພ;
    - o ສົ່ງຜົນເຮັດໃຫ້ເບ້ຍປະກັນເພີ່ມຂຶ້ນ ຫຼືການຢຸດເຊົາເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດສຳລັບທ່ານ ຫຼືລູກຂອງທ່ານ; ຫຼື
    - o ສ່ຽງສູນເສຍການມີສິດໄດ້ຮັບສຳລັບທ່ານ ຫຼືລູກຂອງທ່ານສຳລັບການຍົກເວັ້ນທີ່ເອົາເຮືອນ ແລະຊຸມຊົນເປັນພື້ນຖານທີ່ອີງໃສ່ລາຍຈ່າຍລວມທີ່ກ່ຽວຂ້ອງກັບສຸຂະພາບ.

ຖ້າທ່ານບໍ່ໃຫ້ການຍິນຍອມເຫັນດີ, ອົງການກໍ່ຍັງຕ້ອງເຮັດໃຫ້ການບໍລິການ Early ACCESS ທີ່ມີໃນແຜນ IFSPທີ່ທ່ານໄດ້ໃຫ້ການຍິນຍອມເຫັນດີແລ້ວ ມີໃຫ້ແກ່ເດັກ.

- ພະແນກ ຫຼື ຜູ້ໃຫ້ບໍລິການ Early ACCESS ຈະບໍ່ຄິດເອົາຈາກທ່ານຄ່າຮ່ວມຈ່າຍ ຫຼືຄ່າຫັກລ່ວງໜ້າສຳລັບການໃຊ້ເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດ ເຊັ່ນວ່າ Medicaid. ຖ້າມີຄວາມຄຸ້ມຄອງປະກັນສຸຂະພາບພາກເອກະຊົນທີ່ມີໃຫ້, ກົດໝາຍທີ່ຄວບຄຸມ Medicaid ກຳນົດໃຫ້ພະແນກບໍລິການມະນຸດຕ້ອງຊອກຫາການເຂົ້າເຖິງປະກັນໄພດັ່ງກ່າວ.

## <u>ຄວາມຄຸ້ມຄອງປະກັນໄພພາກເອກະຊົນໃນເວລາມີສິດໄດ້ຮັບ Medicaid</u>

- ພະແນກອາດຈະບໍ່ໃຊ້ປະກັນໄພພາກເອກະຊົນຂອງທ່ານ ເພື່ອຈ່າຍຄ່າບໍລິການ Early ACCESS ຖ້າທ່ານບໍ່ໃຫ້ການຍິນຍອມເຫັນດີໃນການໃຊ້ປະກັນໄພພາກເອກະຊົນນັ້ນ ເພື່ອຈ່າຍຄ່າການບໍລິການ Early ACCESS ໃຫ້ແກ່ລູກຂອງທ່ານ. ນີ້ລວມທັງການໃຊ້ປະກັນໄພພາກເອກະຊົນໃນເວລາທີ່ການໃຊ້ປະກັນໄພເອກະຊົນທີ່ມີໃຫ້ແມ່ນຈຳເປັນກ່ອນການໃຊ້ເງິນຊ່ວຍເຫຼືອຫຼືປະກັນໄພພາກລັດ ເຊັ່ນວ່າ Medicaid.
- ການຍິນຍອມເຫັນດີຈາກທ່ານໃນການໃຊ້ຄວາມຄຸ້ມຄອງປະກັນໄພເອກະຊົນຕ້ອງໄດ້ຮັບ:
    - ໃນເວລາທີ່ອົງການພາກລັດ ຫຼືຜູ້ໃຫ້ບໍລິການ Early ACCESS ພະຍາຍາມໃຊ້ປະກັນໄພ ຫຼືເງິນຊ່ວຍເຫຼືອພາກເອກະຊົນຂອງທ່ານເພື່ອຈ່າຍຄ່າການສະໜອງບໍລິການ EARLY ACCESS ໃນແຜນ IFSP ເປັນຄັ້ງທຳອິດ; ແລະ
    - ແຕ່ລະຄັ້ງທີ່ການຍິນຍອມເຫັນດີສຳລັບການບໍລິການແມ່ນຈຳເປັນຕ້ອງມີພາຍໃຕ້ກົດລະບຽບEarly ACCESS ຂໍ້ 281—120.420(1) ເນື່ອງຈາກການເພີ່ມຂຶ້ນ (ດ້ານຄວາມຖີ່, ຄວາມຍາວ, ໄລຍະເວລາ ຫຼື ຄວາມເຂັ້ມ) ໃນການສະໜອງການບໍລິການໃນແຜນ IFSP ຂອງລູກທ່ານ.

- ພະແນກບໍ່ຮຽກຮ້ອງໃຫ້ທ່ານຈ່າຍຄ່າໃຊ້ຈ່າຍທີ່ທ່ານຈະມີອັນເປັນຜົນມາຈາກການທີ່ທາງລັດໃຊ້ປະກັນໄພພາກເອກະຊົນເພື່ອຈ່າຍຄ່າ Early ACCESS (ເຊັ່ນວ່າ ຄ່າຮ່ວມຈ່າຍ, ເບ້ຍປະກັນທີ່ເພີ່ມຂຶ້ນ, ຫຼື ຄ່າຫັກລ່ວງໜ້າ). ຫຼັງຈາກການຮ້ອງຂໍຂອງທ່ານ, ອົງການພາກລັດທີ່ເໝາະສົມຈະຈ່າຍແທນຄືນສຳລັບຄ່າໃຊ້ຈ່າຍເຫຼົ່ານັ້ນ.

- ໃນເວລາໄດ້ຮັບການຍິນຍອມເຫັນດີຈາກທ່ານຈຳເປັນສຳລັບການໃຊ້ປະກັນໄພ ຫຼືເງິນຊ່ວຍເຫຼືອພາກເອກະຊົນຫຼື ການໃຊ້ເງິນຊ່ວຍເຫຼືອໃນຄັ້ງທຳອິດພາຍໃຕ້ສັນຍາປະກັນໄພພາກເອກະຊົນຂອງທ່ານ ຫຼືຂອງລູກທ່ານເພື່ອຈ່າຍຄ່າບໍລິການ Early ACCESS ໃດໜຶ່ງ, ທາງລັດຈະສະໜອງໃຫ້ພໍ່ແມ່ສຳເນົາຂອງນະໂຍບາຍວ່າດ້ວຍລະບົບເບີກຈ່າຍຂອງພະແນກ. ສິ່ງເຫຼົ່ານີ້ແມ່ນຄ່າໃຊ້ຈ່າຍ <u>ທີ່ເປັນໄປໄດ້</u> ທີ່ທ່ານອາດຈະມີໃນເວລາປະກັນໄພພາກເອກະຊົນຂອງພໍ່ແມ່ຖືກໃຊ້ເພື່ອຈ່າຍຄ່າບໍລິການ Early ACCESS:
    - ຄ່າຮ່ວມຈ່າຍ, ເບ້ຍປະກັນທີ່ເພີ່ມຂຶ້ນ ຫຼື ຄ່າຫັກລ່ວງໜ້າ (ທັງໝົດຈະໄດ້ຮັບການຈ່າຍແທນຄືນ), ແລະ
    - ຄ່າໃຊ້ຈ່າຍໄລຍະຍາວອື່ນ ເຊັ່ນວ່າ ການສູນເສຍຜົນປະໂຫຍດເນື່ອງຈາກຄວາມຄຸ້ມຄອງປະກັນສຸຂະພາບປະຈຳປີ ຫຼືຕະຫຼອດຊີວິດ ກຳນົດຂີດສູງສຸດພາຍໃຕ້ສັນຍາປະກັນໄພ.

  ຖ້າທ່ານມີຄຳຖາມກ່ຽວກັບຄວາມຄຸ້ມຄອງປະກັນໄພພາກເອກະຊົນ, ທ່ານສາມາດຕິດຕໍ່ຫາຜູ້ໃຫ້ປະກັນໄພພາກເອກະຊົນຂອງທ່ານ. ຜູ້ປະສານງານການບໍລິການອາດຈະສາມາດຊ່ວຍທ່ານໃນເລື່ອງນີ້ໄດ້.

- ຖ້າທ່ານບໍ່ໃຫ້ການຍິນຍອມເຫັນດີຂອງທ່ານໃນການນຳໃຊ້ປະກັນໄພພາກເອກະຊົນຂອງທ່ານ ຫຼືປະກັນໄພພາກເອກະຊົນຂອງລູກທ່ານ ເປັນສ່ວນໜຶ່ງຂອງການຮ້ອງຂໍເງິນ Medicaid, ພະແນກ ແລະ ຜູ້ໃຫ້ບໍລິການ ACCESS ຈະບໍ່ຍື່ນການຮ້ອງຂໍການຈ່າຍແທນຄືນ Medicaid.

- ຖ້າທ່າບໍ່ໃຫ້ການຍິນຍອມເຫັນດີເພື່ອໃຫ້ໃຊ້ປະກັນໄພພາກເອກະຊົນຂອງທ່ານ ຫຼືປະກັນໄພພາກເອກະຊົນຂອງລູກທ່ານເປັນສ່ວນໜຶ່ງຂອງການຮ້ອງຂໍເງິນ Medicaid, ອົງການດັ່ງກ່າວກໍ່ຍັງຕ້ອງເຮັດໃຫ້ການບໍລິການ Early ACCESS ເຫຼົ່ານັ້ນທີ່ມີໃນແຜນ IFSP ທີ່ທ່ານໄດ້ໃຫ້ການຍິນຍອມເຫັນດີແລ້ວ ມີໃຫ້ແກ່ລູກຂອງທ່ານ.

**ພາກຕິດຄັດ B**
**ການໃຊ້ MEDICAID: ຂໍ້ກຳນົດວ່າດ້ວຍ "ການບໍ່ມີຄ່າໃຊ້ຈ່າຍ"**

**ນະໂຍບາຍ 281—120.520(34CFR303) ທີ່ກ່ຽວຂ້ອງກັບການໃຊ້ເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດ ຫຼືປະກັນໄພພາກເອກະຊົນເພື່ອຈ່າຍຄ່າບໍລິການ Early ACCESS.**

**120.520(1)** *ການໃຊ້ເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດເພື່ອຈ່າຍຄ່າການບໍລິການ Early ACCESS.*
****

*b.* ກ່ຽວກັບການທີ່ລັດໃຊ້ເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດຂອງເດັກ ຫຼືຂອງພໍ່ແມ່ເພື່ອຈ່າຍຄ່າການບໍລິການຕາມພາກ C, ທາງລັດ:

(1) ບໍ່ສາມາດຮຽກຮ້ອງໃຫ້ພໍ່ແມ່ລົງຊື່ ຫຼືຈົດທະບຽນເຂົ້າຮ່ວມໃນໂຄງການຊ່ວຍເຫຼືອ ຫຼືປະກັນໄພພາກລັດ ໂດຍໃຫ້ເປັນເງື່ອນໄຂໜຶ່ງຂອງການໄດ້ຮັບການບໍລິການຕາມພາກ C ແລະ ຕ້ອງໄດ້ຮັບການຍິນຍອມເຫັນດີກ່ອນການໃຊ້ເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດຂອງເດັກ ຫຼືຂອງພໍ່ແມ່ຖ້າເດັກ ຫຼືພໍ່ແມ່ນັ້ນຍັງບໍ່ທັນຈົດຊື່ເຂົ້າຮ່ວມໃນໂຄງການດັ່ງກ່າວ;

(2) ຕ້ອງໄດ້ຮັບການຍິນຍອມເຫັນດີ, ໂດຍສອດຄ່ອງກັບກົດລະບຽບ 281—120.7(34CFR303) ແລະ ກົດລະບຽບຍ່ອຍ 120.420(1) ໃນການໃຊ້ເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດຂອງເດັກ ຫຼືຂອງພໍ່ແມ່ເພື່ອຈ່າຍຄ່າການບໍລິການຕາມພາກ C ຖ້າການໃຊ້ດັ່ງກ່າວຈະ:

1. ເຮັດໃຫ້ຄວາມຄຸ້ມຄອງຕະຫຼອດຊີວິດທີ່ມີໃຫ້ ຫຼືຜົນປະໂຫຍດການປະກັນອື່ນສຳລັບເດັກ ຫຼືພໍ່ແມ່ນັ້ນພາຍໃຕ້ໂຄງການນັ້ນຫຼຸດລົງ;

2. ສົ່ງຜົນເຮັດໃຫ້ພໍ່ແມ່ເດັກຕ້ອງຈ່າຍຄ່າບໍລິການທີ່ຖ້າບໍ່ເຊັ່ນນັ້ນຈະຖືກຈ່າຍໂດຍໂຄງການຊ່ວຍເຫຼືອ ຫຼືປະກັນໄພພາກລັດ;

3. ສົ່ງຜົນເຮັດໃຫ້ເບ້ຍປະກັນເພີ່ມຂຶ້ນ ຫຼືຢຸດເຊົາເງິນຊ່ວຍເຫຼືອ ຫຼືປະກັນໄພພາກລັດສຳລັບເດັກນັ້ນ ຫຼື ພໍ່ແມ່ຂອງເດັກນັ້ນ; ຫຼື

4. ສ່ຽງສູນເສຍການມີສິດໄດ້ຮັບການຍົກເວັ້ນທີ່ເອົາເຮືອນ ແລະຊຸມຊົນເປັນພື້ນຖານທີ່ອີງໃສ່ລາຍຈ່າຍທີ່ກ່ຽວຂ້ອງສຸຂະພາບ ສຳລັບເດັກ ຫຼື ພໍ່ແມ່ຂອງເດັກ.

(3) ຖ້າພໍ່ແມ່ບໍ່ໃຫ້ການຍິນຍອມເຫັນດີພາຍໃຕ້ອັກຍໍ້ໜ້າ 120.520(1)"b," ທາງລັດຍັງຕ້ອງເຮັດໃຫ້ການບໍລິການພາກ C ທີ່ມີໃນແຜນ IFSP ທີ່ພໍ່ແມ່ໄດ້ໃຫ້ການຍິນຍອມເຫັນດີແລ້ວ ມີໃຫ້ແກ່ເດັກ.
****

## ພາກຕິດຄັດ C
## ຂໍ້ກຳນົດວ່າດ້ວຍ "ຜູ້ຈ່າຍຕົວເລືອກສຸດທ້າຍ"

**281—120.510(34CFR303) ຜູ້ຈ່າຍຕົວເລືອກສຸດທ້າຍ.**

**120.510(1)** *ການບໍ່ປ່ຽນແທນໄດ້ຂອງທຶນ.* ຍົກເວັ້ນຕາມທີ່ກຳນົດໄວ້ໃນກົດລະບຽບຂໍ້ຍ່ອຍ 120.510(2), ທຶນພາຍໃຕ້ພາກນີ້ອາດຈະບໍ່ຖືກໃຊ້ເພື່ອຕອບສະໜອງຄຳໝັ້ນສັນຍາດ້ານການເງິນສຳລັບການບໍລິການທີ່ບໍ່ເຊັ່ນນັ້ນແລ້ວ ຈະຖືກຈ່າຍໃຫ້ຈາກແຫຼ່ງເງິນພາກລັດ ຫຼືພາກເອກະຊົນອື່ນ, ເຊິ່ງລວມທັງໂຄງການຊ່ວຍເຫຼືອທາງການແພດທີ່ບໍລິຫານໂດຍກະຊວງປ້ອງກັນປະເທດ, ແຕ່ສຳລັບການອອກຂໍ້ບັງຄັບຂອງພາກ C ຂອງກົດໝາຍ. ສະນັ້ນ, ເງິນທຶນພາຍໃຕ້ພາກນີ້ອາດຈະຖືກໃຊ້ພຽງແຕ່ເພື່ອຈ່າຍຄ່າການບໍລິການຊ່ວຍເຫຼືອໄລຍະຕົ້ນທີ່ເດັກເກີດໃໝ່ ຫຼືເດັກຮຽນຍ່າງທີ່ພິການຕ້ອງການ ແຕ່ໃນປະຈຸບັນຍັງບໍ່ທັນມີສິດໄດ້ຮັບ ຫຼື ມີການຈ່າຍຈາກແຫຼ່ງທຶນລັດຖະບານກາງ, ລັດ, ທ້ອງຖິ່ນ ຫຼືແຫຼ່ງທຶນພາກເອກະຊົນເທື່ອ (ອີງຕາມກົດລະບຽບ 281—120.520(34CFR303) ແລະ 281—120.521(34CFR303)).

**120.510(2)** *ການຈ່າຍຊົ່ວຄາວ—ການຈ່າຍແທນຄືນ.* ຖ້າຈຳເປັນເພື່ອປ້ອງກັນການຊັກຊ້າໃນການສະໜອງການບໍລິການຊ່ວຍເຫຼືອໄລຍະຕົ້ນທີ່ເໝາະສົມຢ່າງທັນເວລາໃຫ້ແກ່ເດັກ ຫຼືຄອບຄົວຂອງເດັກ, ເງິນທຶນພາຍໃຕ້ພາກ C ຂອງກົດໝາຍ ອາດຈະຖືກໃຊ້ເພື່ອຈ່າຍໃຫ້ແກ່ຜູ້ໃຫ້ບໍລິການ (ສຳລັບການບໍລິການ ແລະ ໜ້າວຽກທີ່ໄດ້ຮັບອະນຸຍາດພາຍໃຕ້ພາກນີ້ ລວມທັງ ການບໍລິການສຸຂະພາບ ຕາມທີ່ກຳນົດຄວາມໝາຍໄວ້ໃນຂໍ້ລະບຽບ 281—120.16(34CFR303) (ແຕ່ບໍ່ແມ່ນການບໍລິການທາງການແພດ); ໜ້າວຽກຂອງລະບົບຊອກຫາເດັກທີ່ອະທິບາຍໄວ້ໃນຂໍ້ລະບຽບ 281—120.115(34CFR303) ຫາ 281—120.117(34CFR303) ແລະ ຂໍ້ລະບຽບ 281—120.301(34CFR303) ຫາ 281—120.320(34CFR303); ແລະ ການປະເມີນຜົນ ແລະການຕີລາຄາເດັກໃນຂໍ້ລະບຽບ 281—120.321(34CFR303)), ເຊິ່ງລໍຖ້າການຈ່າຍແທນຄືນຈາກອົງການ ຫຼືໜ່ວຍງານທີ່ມີຄວາມຮັບຜິດຊອບສຸດທ້າຍສຳລັບການຈ່າຍເງິນດັ່ງກ່າວ.

**120.510(3)** *ການບໍ່ຫຼຸດເງິນຊ່ວຍເຫຼືອລົງ.* ບໍ່ມີຫຍັງໃນພາກນີ້ອາດຈະຖືກແປຄວາມໝາຍເປັນການອະນຸຍາດໃຫ້ລັດຕັດການຊ່ວຍເຫຼືອທາງການແພດ ຫຼືການຊ່ວຍເຫຼືອອື່ນທີ່ມີໃຫ້ໃນລັດລົງ ຫຼື ປ່ຽນແປງການມີສິດໄດ້ຮັບພາຍໃຕ້ຫົວບົດ V ຂອງກົດໝາຍວ່າດ້ວຍການປະກັນສັງຄົມ, 42 U.S.C. 701 ແລະອື່ນໆ (SSA) (ກ່ຽວຂ້ອງກັບສຸຂະພາບແມ່ ແລະເດັກ) ຫຼື ຫົວບົດ XIX ຂອງກົດໝາຍ SSA, 42 U.S.C. 1396 (ກ່ຽວຂ້ອງກັບ Medicaid), ລວມທັງຂໍ້ 1903(a) ຂອງກົດໝາຍ SSA ທີ່ກ່ຽວຂ້ອງກັບການຊ່ວຍເຫຼືອທາງການແພດສຳລັບການບໍລິການທີ່ໄດ້ສະໜອງໃຫ້ແກ່ເດັກເກີດໃໝ່ ຫຼືເດັກຮຽນຍ່າງທີ່ພິການໃນເວລາທີ່ການບໍລິການເຫຼົ່ານັ້ນລວມມີຢູ່ໃນແຜນ IFSP ຂອງເດັກທີ່ນຳໃຊ້ ໂດຍປະຕິບັດຕາມພາກ C ຂອງກົດໝາຍ.